

# 占芭 ຈຳປາ

**ທ່ານ ເວິນ ເຈຍປາວ ນາຍົກລັດຖະມົນຕີຈີນເຂົ້າຮ່ວມ**
**ກອງປະຊຸມການນຳຈີນກັບອາຊຽນຄັ້ງທີ 12**

**ທ່ານນາຍົກ ສ ປປ ລາວ: ການຮ່ວມມືຈີນ-ອາຊຽນສົມ**
**ກຽດເປັນແບບຢ່າງຂອງການຮ່ວມມືສາກົນ**

**ເປີດສຳນັກງານສະຖານກົງສຸນໃຫຍ່ ສ ປປ ລາວທີ່ນານໜິງ**

ລາຄາ: 13000 ກີບ ¥10

ISSN 1673-3266

12/2009
ສະບັບທີ 52


RAMAYANA HOTEL GROUP
Vientiane Capital
INTER CITY HOTEL
Mekong River View Boutique Hotel
Hotel Facilities
- Free Internet,
- Room Service,
- Laundry and Pressing,
- Safe deposit box,
- Lao Traditional Massage
- IDD/Credit Card collect call Service
- Cable TV,
- Air Ticket reconfirmation,
- Tour arrangement,
- Car/Motobike rental.
24-25 Fa Ngum Rd, Vientiane Capital Lao PDR
Tel: (856)21 263788, 242842-4. Fax: (856)21 243663
E-mail:interhotel@laopdr.com. www.laointercityhotel.com
Ramayana
Gallery Hotel (Dokmaideng Hotel)
- Free Internet
- Satellite TV
- Working Desk
- Air-condition
- IDD Telephone
- Refrigerator
- Hotel Doctor
- Tour service
- Airport transport
旅馆设施
1. 免费网络
2. 客房服务
3. 洗衣服务
4. 保险箱
5. 寮式按摩
6. 长途电话服务
7. 无线电视
8. 国内及市区内观光旅游
9. 机场接送服务
10. 商务中心
11.KTV 包房
P.O Box 3925, Vientiane Capital, Lao PDR
Tel: (856)21-21 4455. Fax: (856)21-21 4454
Reservation: (856)21-21 4477. Email:porm_slp@yahoo.com
Luang Prabang
Ramayana
Boutique Hotel and Spa
Hotel Facilities
- Free Internet
- Air conditioned
- IDD call
- Spa & aroma massage
- Business Center
- Travel Service
Ban Pakham, Luang Prabang, Lao P.D.R.
Tel: (856)71- 255 055, 255 066. Fax: (856)71- 260 601
Email: info@ramayana-laos.com. www.ramayana-laos.com










ບໍລິການນຳທ່ຽວພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ຍົນພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ລົດໄຟ ລົດບັດໄປປະເທດໄທ,ຫວຽດນາມ

ບໍລິການເຊົ່າລົດເກົ໋ງ ລົດຈີບຖ0. ລົດຕູ້12,15ບ່ອນນັ່ງ ລົດບັດ25,35,45 ບ່ອນນັ່ງ

ບໍລິການແລ່ນວີຊາໄປຕ່າງປະເທດ





ສົນໃຈເຊີນຕິດຕໍ່: ບໍລິສັດທ່ອງທ່ຽວຄຳຫລ້າຈຳກັດ

042/3 ຖະໜົນຟ້າງຸ່ມ ບ້ານມີໄຊ ເມືອງຈັນທະບູລີ

ແຂວງນະຄອນຫລວງວຽງຈັນ ສ.ປ.ປ.ລາວ

Tel/Fax: (856-21) 218677, 218107

Mobile: (856-20) 5606000, 5620161, 5519334

E-mail: khamlatours39@yahoo.com

www.khamla.com

**Inbound Tour**

We provide:

Tour in Vientiane
Tour in VangViene
Tour in Luangprabang
Tour in Pakze
Tour in Northern Laos
Tour in Southern Laos

**Outbound Tour**

We provide:

Tour to China
Tour to Malaysia
Tour to VietNam
Tour to Cambodia
Tour to Thailand
Tour to asia

ເຈົ້າໜ້າທີ່ຄຸ້ມຄອງໂດຍ

ຫ້ອງການຂ່າວຄະນະລັດຖະບານສ ປຈີນ

ຈັດທຳໂດຍ

ສະມາຄົມແລກປ່ຽນວັດທະນະທຳກັບຕ່າງ

ປະເທດແຂວງຢູນນານສ ປຈີນ

ຮຽບຮຽງພິມຈຳໜ່າຍ

ສຳນັກພິມວາລະສານ《ຈຳປາ》

ຜູ້ອຳນວຍການ

ວູຫ້າວ

ບັນນາທິການໃຫຍ່

ຢາງຢູນ

ຫົວໜ້າພິມຈຳໜ່າຍ

ຢູຍເຈີງຢູຍ

ຜູ້ຄຸ້ມງານບັນນາທິການ

ຫວາງວັນລີ

ບັນນາທິການປະຈຳ

ຊູເວີນເວີນ

ຜູ້ແປພາສາລາວ

ອູຄຸ້ນສິນ. ລີວເຢີນເຫີ

ຜູ້ກວດແກ້ພາສາລາວ

ລີວເຢີນເຫີ

ບັນນາທິການພາສາລາວ

ປາຍຍຽນ

ຜູ້ຄຸ້ມງານຝ່າຍສິລະປະ

ຈູ້ສິນ

ຜູ້ຄຸ້ມງານຝ່າຍອິນເຕີເນັດ

ຈາງເຊີຢີ

ບັນນາທິການຝ່າຍອິນເຕີເນັດ

ຈາງຈຸນຮອງ ລີທາວ

ພະນັກງານຝ່າຍປົກຄອງ

ລູຢູຍ

ພິມຈຳໜ່າຍເປີດເຜີຍ:
ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ:
ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ:
ISSN 1673–3266
ລະຫັດວາລະສານປະເທດຈີນ:
CN53–1200/D
http://www.rivermk.com
E–mail: ynzhanba@163.com

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

ສະຖານທີ່: ຖະໜົນຫວນເຊີນຊີລູເຮືອນເລກທີ 577
ຂຸັນວນະຄອນຄຸນໝິງແຂວງຢູນນານ ສປ ຈີນ

ລະຫັດໄປສະນີ: 650034

ໂທ: 86-871-4112975 4101644

ແຟັກ: 86-871-4112975

**主　　管**：中华人民共和国国务院新闻办公室

**主　　办**：云南省对外文化交流协会

**编辑出版**：《占芭》杂志社

**社　　长**：伍　皓

**总 编 辑**：杨　云

**总编室主任**：禹正玉

**编辑总监**：王万里

**责任编辑**：苏雯雯

**翻　　译**：吴敦信　刘仁和

**老挝文译审**：刘仁和

**老挝文编辑**：白　艳

**美术总监**：祝　群

**网络总监**：张守义

**网络编辑**：张俊宏　李　涛

**编　　务**：陆　蕊

**发行范围**：国内外公开发行

**出版日期**：每月五日

**邮发代号**：64—36

**国际标准刊号**：ISSN 1673—3266

**国内统一刊号**：CN53—1200/D

广告经营许可证号：5300004000052

印刷：昆明富新春彩色印务有限公司

**地址**：云南省昆明市环城西路577号
编辑部电话：86-871-4112975
办公室电话：86-871-4101644
**传真**：86-871-4112975
**邮编**：650034

国内广告总代理：云南恩泽文化传播有限公司
网络商务代理：昆明艾玛尼网络科技有限公司
办公室电话：86-871-4668646（传真）
广告部电话：86-871-4622766
http://www.gms-seasa.com
Email:gmseasa@hotmail.com
邮编：650034

ຕົວແທນໃຫຍ່ໂປສະເຕີພາຍໃນປະເທດ:

ບໍລິສັດເຜີຍແຜ່ວັດທະນະທຳເອີນເຈີຢູນນານຈຳກັດ

ຕົວແທນອິນເຕີເນັດຝ່າຍການຄ້າ:

ບໍລິສັດວິທະຍາສາດເຕັກນິກອິນເຕີເນັດອາຍມານີຄຸນໝິງຈຳກັດ

ເບີໂທຫ້ອງການ: 86-871-4668646 (ແຟັກ)

ເບີໂທພາກສ່ວນໂປສະເຕີ: 86-871-4622766

http://www.gms-seasa.com

Email:gmseasa@hotmail.com

ລະຫັດໄປສະນີ: 650034


# ສາລະບານ

**12/2009 ສະບັບທີ 52**




ທ່ານ ລີ ຢືກາງ ນັກສະແດງຊັ້ນ 1 ແຫ່ງຊາດຂອງຈີນ ພອນສະແດງ "ສຽງເພງບິນຢູ່ເທິງແຜ່ນດິນໃຫຍ່ປີ 2009" ຢູ່ງານລາຕີເປີດສາກຂອງງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6 (ງານວັນສິລະປະຮ້ອງເພງພື້ນເມືອງສາກົນນານນິນຄັ້ງທີ 11)

中国国家一级演员李玉刚在第十一届南宁国际民歌艺术节暨第六届中国—东盟博览会开幕式晚会"大地飞歌 2009"上表演　CFP 图










## ສາລະຄະດີພິເສດ 本刊特稿

04.ທ່ານ ເວິນ ເຈຍປາວ ນາຍົກລັດຖະມົນຕີຈີນເຂົ້າຮ່ວມ ກອງປະຊຸມການນໍາຈີນກັບອາຊຽນຄັ້ງທີ 12
07.ງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6: ຈັບມືກັນກ້າວ ໄປໜ້າຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ຊະນະພ້ອມກັນ
14.ທ່ານນາຍົກ ສ ປປ ລາວ: ການຮ່ວມມືຈີນ-ອາຊຽນສົມ ກຽດເປັນແບບຢ່າງຂອງການຮ່ວມມືສາກົນ
16.ສະຫວັນນະເຂດ-ຕົວເມືອງທີ່ມີສະເໜ່ຂອງລາວໄດ້ອອກ ໜ້າຢູ່ໃນງານວາງສະແດງສິນຄ້າຈີນ-ອາຊຽນ
20.ເປີດສໍານັກງານສະຖານກົງສຸນໃຫຍ່ ສ ປປ ລາວທີ່ຫນານໜິງ
22.ສ ປປ ລາວຈັດເວທີປາໄສກ່ຽວກັບການລົງທຶນໃນໄລຍະງານເອກ ສະໂປຈີນ-ອາຊຽນ
26.ກອງປະຊຸມລັດຖະມົນຕີຖະແຫລງຂ່າວອາຊຽນກັບຈີນ,ຍີ່ປຸ່ນ ແລະ ສ.ເກົາຫລີຄັ້ງທໍາອິດໄດ້ຈັດຂຶ້ນຢູ່ ສ ປປ ລາວ
28.ສ ປປ ລາວຫວັງວ່າເພີ່ມທະວີການຮ່ວມມືກັບສປຈີນໃນຂົງເຂດຖະ ແຫລງຂ່າວ ແລະ ສື່ມວນຊົນ

## ການສ້າງສາປະເທດຊາດ60ປີ 建国60年

30.ກະແສແຫ່ງການສຶກສາຢູ່ຕ່າງປະເທດເປັນເວລາ 60 ປີ





## ປະຕູເມືອງຈີນ 中国之窗

38.ປີ 2012 ປະເທດຈີນຈະສ້າງສໍາເລັດວົງຄົມມະນາຄົມ1-8ຊົ່ວໂມງ ທີ່ມີນະຄອນປັກກິ່ງເປັນໃຈກາງ
42.ການຄ້າຂາຍທີ່ປາຈາ(ຕະຫລາດນັດ)ນະຄອນຄາສີເຂດຊິນຈຽງ ຍັງມີຄວາມຄຶກຄື້ນຄືເກົ່າ

## ງານນິທັດສະການໂລກຊຽງໄຮ 上海世博

44.ງານເອກສະໂປໂລກນໍາເອົາກາລະໂອກາດໃໝ່ໃຫ້ແກ່ການ ທ່ອງທ່ຽວ

## ຢູນນານທີ່ມີສະເໜ່ 魅力云南

48.ຢຸນນານເລັ່ງລັດການສ້າງສາດ່ານເອເລັກໂຕຼນິກ

## ເມືອງລາວໃນວັນນີ້ 今日老挝

50.60ປີ ສປ ຈີນ
52.ຊີວິດແຫ່ງການຮຽນນັກຄົ້ນຄວ້າປະລິນຍາເອກຂອງຂ້າພະເຈົ້າ

## ຫຼຽວເບິ່ງອາຊຽນ 东盟瞭望

54.ປະເທດອາຊີຕາເວັນອອກສຽງໃຕ້ເຊີນຊວນວິສາຫະກິດຂອງ ຈີນພັດທະນາບໍ່ແຮ່ ພ້ອມກັນສ້າງ "ທະວີບອາຊີທີ່ມີຊີວິດຊີວາ"
56.ນັກສຶກສາອາຊຽນທີ່ມາຮຽນຢູ່ປະເທດຈີນເກີນ30ພັນຄົນ

## ການທ່ອງທ່ຽວທັດສະນາຈອນ 旅游纵横

57.ເຂດປ່າເຊີນຫຼອງເຈ້ຍມົນທົນຫູເປ

## ປະຊາຊາດຈີນ 中华民族

59.ບຸນດອນເຈັກຊິນຊາດສູຍ

## ບໍລິການເພື່ອທ່ານ 为您服务

61.ກົດລັບສຸຂະພາບທີ່ຕາບອກໃຫ້ທ່ານ

## ຮຽນພາສາຈີນ 学 汉 语

62.ປົວລະບັດຮົມສົບແນວໃດໃນລະດູໜາວ

## ນິທານສຸພາສິດ 成语故事

64.ປາດສະຈາກໂລກໄພເຈັບໄຂ້ຢ່າງມີຄວາມປອດໄພ

# ທ່ານ ເວິນ ເຈຍປາວ ນາຍົກລັດຖະມົນຕີຈີນເຂົ້າຮ່ວມກອງປະຊຸມການນຳຈີນກັບອາຊຽນຄັ້ງທີ 12




ທ່ານ ເວິນ ເຈຍປາວ ນາຍົກລັດຖະມົນຕີຈີນໄດ້ຮັບຄວາມຍິນດີຕ້ອນຮັບຢ່າງສຸດໃຈທີ່ສະໜາມບິນຈາກເຈົ້າໜ້າທີ່ໄທ ແລະ ພະນັກງານການທູດຈີນປະຈຳປະເທດໄທ
中国国务院总理温家宝在机场受到泰方官员和中国使馆人员热烈欢迎　新华社 图

## 中国国务院总理温家宝出席第十二次中国与东盟领导人会议

2009 年 10 月 24 日，第十二次中国与东盟领导人会议（10 + 1）在泰国华欣举行。中国国务院总理温家宝与东盟１０国领导人出席。泰国总理阿披实主持会议。双方回顾总结了一年多来共同应对国际金融危机等挑战的历程，表达了同舟共济、共谋发展的意愿，就全面深化合作达成广泛共识。

ກອງປະຊຸມການນຳຈີນກັບອາຊຽນຄັ້ງທີ 12 (10+1)ໄດ້ຈັດຂຶ້ນຢູ່ທີ່ຫົວຫີນແຫ່ງປະເທດໄທໃນວັນທີ 24 ປີ2009. ທ່ານ ເວິນ ເຈຍປາວ ນາຍົກລັດຖະມົນຕີຈີນ ແລະ ການນຳ 10 ປະເທດອາຊຽນໄດ້ເຂົ້າຮ່ວມ.ທ່ານ ອະພິສິດ ນາຍົກລັດຖະມົນຕີແຫ່ງປະເທດໄທເປັນປະທານຂອງກອງປະຊຸມ.ທັງສອງຝ່າຍໄດ້ທົບທວນຄືນ ແລະສະຫລຸບຂະບວນການຮ່ວມກັນຮັບມືກັບການທ້າທາຍວິດກິດການການເງິນໂລກເປັນຕົ້ນໃນ 1 ປີກວ່າທີ່ຜ່ານມາ, ແລະ ໄດ້ສະແດງຄວາມມຸ່ງມາດປາດຖະໜາທີ່ຮ່ວມແຮງຊ່ວຍເຫລືອກັນພ້ອມກັນສະແຫວງຫາການພັດທະນາ ແລະ ໄດ້ບັນລຸຄວາມເຫັນເປັນເອກະພາບກັນຢ່າງກວ້າງຂວາງກ່ຽວກັບການລົງເລິກການຮ່ວມມືກັນຢ່າງຮອບດ້ານ.

ທ່ານ ເວິນ ເຈຍປາວໄດ້ກ່າວວ່າ,ປະເທດຈີນ ກັບອາຊຽນມີພູຜາ ແລະ ແມ່ນ້ຳຕິດຈອດກັນ, ມີນ້ຳໃຈມິດຕະພາບອັນເລິກເຊິ່ງຕໍ່ກັນ,ແລະ ມີສິດຜົນປະໂຫຍດຮ່ວມກັນຢ່າງກວ້າງຂວາງ. ໂດຍປະເຊີນໜ້າກັບການທ້າທາຍຢ່າງຮ້າຍແຮງຈາກວິກິດການການເງິນໂລກ,ປະເທດຈີນ ແລະ ກຸ່ມອາຊຽນຊ່ວຍເຫລືອເຊິ່ງກັນ ແລະ ກັນ,ເພີ່ມທະວີການຮ່ວມມື,ສົ່ງເສີມໃຫ້ມີການພັດທະນາພ້ອມກັນໃນທ່າມກາງຈັບມືກັນຮັບມືກັບການທ້າທາຍ.ເດືອນເມສາປີນີ້,ລັດຖະບານຈີນປະກາດຂໍ້ລິເລີ່ມ ແລະ ມາດຕະການຢ່າງເປັນລະບົບຄືສ້າງຕັ້ງກອງທຶນຮ່ວມມືລົງທຶນຈີນ-ອາຊຽນໃນຂະໜາດທັງໝົດ 10 ຕື້ໂດລາສະຫະລັດ,ໃຫ້ການສະໜັບສະໜູນດ້ານສິນເຊື່ອແກ່ບັນດາປະເທດອາຊຽນຈຳນວນ 15 ຕື້ໂດ

ລາສະຫະລັດ ແລະ ໃຫ້ການຊ່ວຍເຫລືອພິເສດແກ່ປະເທດທີ່ບໍ່ທັນພັດທະນາໃນອາຊຽນຈຳນວນ 270 ລ້ານຢວນຈີນເປັນຕົ້ນ,ອັນໄດ້ສະແດງໃຫ້ເຫັນກຳລັງໃຈ ແລະ ຄວາມຕັດສິນໃຈຂອງປະເທດຈີນ ແລະ ບັນດາປະເທດອາຊຽນທີ່ຈະບຸກໜ້າບືນຕົວ,ຜ່ານຜ່າຄວາມຫຍຸ້ງຍາກນາໆປະການໃນສະເພາະໜ້າ.ເຂດການຄ້າເສລີຈີນ-ອາຊຽນທີ່ໃກ້ຈະສ້າງສຳເລັດຢ່າງຮອບດ້ານຕາມກຳນົດເວລາໃນປີ 2010 ນັ້ນຈະກາຍເປັນສິລາຈາລຶກສຳຄັນອີກອັນໜຶ່ງໃນປະຫວັດສາຍພົວພັນລະຫວ່າງທັງສອງຝ່າຍ.ໃນຊຸມມື້ນີ້,ຄວາມໄວ້ເນື້ອເຊື່ອໃຈລະຫວ່າງປະເທດຈີນກັບກຸ່ມອາຊຽນຍິ່ງມີໜັກແໜ້ນຂຶ້ນ,ການຕິດຕໍ່ພົວພັນກັນຍິ່ງມີຄວາມແໜ້ນແຟ້ນເຂົ້າ,ການຮ່ວມມືຍິ່ງແຂງແຮງກວ່າເກົ່າ.

ທ່ານ ເວິນ ເຈຍປາວໄດ້ກ່າວວ່າ,ຜ່ານຄວາມພະຍາຍາມຢ່າງທໍລະຫົດອົດທົນ,ການເງິນຂອງປະເທດຈີນ ແລະ ບັນດາປະເທດອາຊຽນໄດ້ຮັກສາໄວ້ຄວາມໝັ້ນທ່ຽງໂດຍພື້ນຖານ,ເສດຖະກິດປະກົດມີທ່າອ່ຽງໝັກແໜ້ນໂດຍທົ່ວໄປ,ການຄ້າລະຫວ່າງສອງຝ່າຍພວມກ້າວເຂົ້າໄລຍະເພີ່ມຂຶ້ນລັກສະນະຟື້ນຕົວ.ໃນຖານະເປັນປະເທດບ້ານໃກ້ເຮືອນຄຽງ ແລະ ຄູ່ຮ່ວມມືຍຸດທະນາດ,ປະເທດຈີນຈະຮ່ວມທຸກຮ່ວມສຸກ ແລະ ຮຽງບ່າຮຽງໄຫລ່ກັນບຸກບືນສູ້ຊົນໄປໜ້າກັບອາຊຽນແຕ່ຕົ້ນຕະຫລອດປາຍ.ກ່ຽວກັບການຮ່ວມມືໃນໄລຍະຕໍ່ໄປນັ້ນ, ທ່ານ ເວິນ ເຈຍປາວ ສະເໜີ:

ກ. ສົ່ງເສີມບົດບາດຂອງເຂດການຄ້າເສລີຈີນ-ອາຊຽນ. ອັນທີໜຶ່ງແມ່ນເພີ່ມທະວີການໂຄສະນາ ແລະ ການອົບຮົມຂອງນະໂຍບາຍ,ກົດໝາຍຂໍ້ກຳນົດຂອງເຂດການຄ້າເສລີ, ຊ່ວຍບໍລິສັດນຳໃຊ້ເງື່ອນໄຂພິເສດຂອງເຂດການຄ້າເສລີໃຫ້ໄດ້ດີ.ຝ່າຍຈີນຍິນດີທີ່ຈະຈັດເວທີປາໄສກ່ຽວກັບເຂດການຄ້າເສລີຈີນ-ອາຊຽນໃນປີໜ້າ ແລະຮ່ວມກັບອາຊຽນສ້າງເວັບໄຊການຄ້າເຂດການຄ້າເສລີ.ອັນທີສອງແມ່ນໄປສ້າງເຂດຮ່ວມມືເສດຖະກິດຢູ່ບັນດາປະເທດອາາຊຽນ,ເປີດກວ້າງການລົງທຶນຕໍ່ອາຊຽນຢ່າງບໍ່ຢຸດຢັ້ງ.ອັນທີສາມແມ່ນປົກປ້ອງສິດຊັບສິນທາງປັນຍາ, ປັດເຂ່ຽສິ່ງກີດຂວາງລັກສະນະວິທີປະຕິບັດດ້ານການຄ້າ,ສ້າງຕັ້ງລະບົບດັກສະກັດສັດພືດເຂົ້າອອກເມືອງທີ່ເປັນເອກະພາບກັນ.

ຂ. ເລັ່ງລັດກໍ່ສ້າງໂຄງຮ່າງພື້ນຖານໃຫ້ໄວເຂົ້າ.ປຶກສາຫາ



ວັນທີ 24 ເດືອນ 10 ປີ 2009,ທ່ານ ເວິນ ເຈຍປາວ ນາຍົກລັດຖະມົນຕີຈີນເຂົ້າຮ່ວມກອງປະຊຸມຜູ້ນຳຈີນ-ອາຊຽນຄັ້ງທີ 12 ທີ່ຫົວຫີນແຫ່ງປະເທດໄທ(10+1).ພາບນີ້ແມ່ນຮູບຖ່າຍຮ່ວມໝູ່ກັບຜູ້ນຳທີ່ມາຮ່ວມກອງປະຊຸມ
2009 年 10 月 24 日，中国国务院总理温家宝在泰国华欣出席第十二次中国与东盟领导人会议（10+1）。与会领导人集体合影　新华社 图

ລີ ແລະ ຕົກລົງໂຄງການບຸລິມະສິດ "ແຜນຍຸດທະສາດຮ່ວມມືດ້ານຄົມມະນາຄົມລະຫວ່າງປະເທດຈີນ-ອາຊຽນ "ໃຫ້ໄວເທົ່າທີ່ຈະໄວໄດ້,ບັນລຸຄວາມເຫັນເປັນເອກະພາບນຳກັນກ່ຽວກັບ "ບົດບັນທຶກຊ່ວຍຈຳກ່ຽວກັບການຮ່ວມມືດ້ານພາສີລະຫວ່າງຈີນ-ອາຊຽນ" ໃຫ້ໄວເທົ່າທີ່ຈະໄວໄດ້,ເຊັ່ນ "ສັນຍາກ່ຽວກັບການຂົນສົ່ງທາງອາກາດພາກພື້ນລະຫວ່າງຈີນ-ອາຊຽນ,ເພື່ອສ້າງຕາຂ່າຍໂຄງຮ່າງພື້ນຖານພາກພື້ນທີ່ເຊື່ອມໂຍງເຂົ້າກັນ.

ຄ.ລົງເລິກການຮ່ວມມືດ້ານການກະເສດ ແລະ ຊົນນະບົດ. ຕັ້ງໜ້າຊຸກຍູ້ "ແຜນການປະຕິບັດງານຍົກສູງຄວາມສາມາດການຜະລິດສະບຽງອາຫານແບບສັງລວມລະຫວ່າງປະເທດຈີນ-ອາຊຽນ" ,ຊ່ວຍອາຊຽນຍົກສູງລະດັບຜະລິດສະບຽງອາຫານ.ປະຕິບັດ "ແຜນການຊຸກຍູ້ການພັດທະນາຊົນນະບົດລະຫວ່າງຈີນ-ອາຊຽນ" ,ຊ່ວຍບັນດາປະເທດອາຊຽນເພີ່ມທະວີຄວາມສາມາດໃນການພັດທະນາແບບສັງລວມຂອງຊົນນະບົດໃຫ້ເຂັ້ມແຂງ.

ງ. ສົ່ງເສີມໃຫ້ມີການພັດທະນາຢ່າງຕໍ່ເນື່ອງ.ຮັບຮອງເອົາ "ຍຸດທະສາດແຫ່ງການຮ່ວມມືດ້ານສິ່ງແວດລ້ອມລະຫວ່າງປະເທດຈີນ-ອາຊຽນ "ໂດຍໄວເທົ່າທີ່ຈະໄວໄດ້,ເພີ່ມທະວີການຮ່ວມມືໃນຂົງເຂດຕ່າງໆຄືການປົກປ້ອງຄວາມຫລາກຫລາຍຂອງຊີວະຊາດ,ການປົກປ້ອງນິເວດວິທະຍາ,ການຜະລິດແບບສະອາດ,ອຸດສາຫະກຳການຜະລິດທີ່ປົກປ້ອງສິ່ງແວດລ້ອມ,ພະລັງງານໃໝ່ ແລະ ພະລັງງານທີ່ສາມາດເກີດຄືນອີກເປັນຕົ້ນ.ປະເທດຈີນຈະຊ່ວຍອົບຮົມພະນັກງານທີ່ເຮັດວຽກກ່ຽວກັບສິ່ງແວດລ້ອມໃຫ້ບັນດາປະເທດອາຊຽນຈຳນວນ 100 ຄົນໃນ 3 ປີຕໍ່ໜ້າ. ຈ.ເພີ່ມທະວີການແລກປ່ຽນວັດທະນທຳ ແລະ ສັງຄົມ.ຝ່າຍຈີນຍິນດີທີ່ຈະເພີ່ມທະວີການຮ່ວມມືໃນຂົງເຂດປ້ອງກັນ ແລະ ຄວບຄຸມໄຂ້ຫວັດໃຫຍ່ສາຍພັນ A / H1N1 ,ການປ້ອງກັນປະເທດ,ວັດທະນະທຳ,ການສຶກສາ,ການທ່ອງທ່ຽວ ແລະ ປາບປາມການກໍ່ອາດສະຍາກຳຂ້າມປະເທດເປັນຕົ້ນ;ສ້າງ "ສູນຈີນ-ອາຊຽນ" ໃຫ້ສຳເລັດໂດຍໄວເທົ່າທີ່ຈະໄວໄດ້.

ສ. ຊຸກຍູ້ການຮ່ວມມືພາກພື້ນໃນຫລາຍລະດັບ.ຝ່າຍຈີນສະໜັບສະໜູນຂະບວນການເຕົ້າໂຮມກັນເປັນອັນໜຶ່ງອັນດຽວ ແລະ ບົດບາດນຳພາໃນການຮ່ວມມືພາກພື້ນຂອງອາຊຽນ,ຈະສ້າງອົງການປະຈຳອາຊຽນ,ຕັ້ງໜ້າຊຸກຍູ້ການພັດທະນາອະນຸພາກພື້ນແມ່ນ້ຳຂອງ,ການຮ່ວມມືເສດຖະກິດລະຫວ່າງປະເທດຈີນກັບເຂດເພີ່ມຂື້ນພາກຕາເວັນອອກຂອງອາຊຽນການຮ່ວມມືເສດຖະກິດທົ່ວອ່າວພາກເໜືອ.

ທ່ານ ເວິນ ເຈຍປາວສະເໜີ,ໃຫ້ວາງ "ແຜນປະຕິບັດງານຈັດຕັ້ງປະຕິບັດຖະແຫລງການຮ່ວມສາຍພົວພັນຄູ່ຍຸດທະສາດໄປສູ່ສັນຕິພາບ ແລະ ວັດທະນາລະຫວ່າງປະເທດຈີນ-ອາຊຽນ" ແຕ່ປີ 2011-2015, ເພື່ອຊຸກຍູ້ໃຫ້ສາຍພົວພັນລະຫວ່າງປະເທດຈີນ ແລະອາຊຽນກ້າວເຂົ້າສູ່ລະດັບໃໝ່.

ຜູ້ນຳຂອງບັນດາປະເທດອາຊຽນໄດ້ສະແດງຄວາມຊົມເຊີຍອີກເທື່ອໜຶ່ງເຊິ່ງການສະຖາປະນາປະເທດຈີນໃໝ່ຄົບຮອບ 60 ປີກໍ່ຄືຜົນສຳເລັດອັນໃຫຍ່ຫລວງທີ່ຍາດມາໄດ້,ຕີລາຄາຢ່າງຕັ້ງໜ້າສາຍພົວພັນລະຫວ່າງອາຊຽນ-ປະເທດຈີນໄດ້ຮັບການຄືບໜ້າຢ່າງໃຫຍ່ຫລວງ,ສະແດງຄວາມຍິນດີຢ່າງສູງທີ່ປະເທດຈີນໄດ້ປະຕິບັດນະໂຍບາຍສ້າງຄວາມເປັນມິດກັບບັນດາປະເທດໃກ້ຄຽງ,ອອກແຮງເພີ່ມທະວີການຮ່ວມມືກັບບັນດາປະເທດອາຊຽນ. ເຊິ່ງໄດ້ເຫັນເປັນເອກະພາບກັນວ່າ,ຝ່າຍຈີນສະໜັບສະໜູນ ແລະ ໃຫ້ການຊ່ວຍເຫລືອດ້ວຍການການປະຕິບັດຕົວຈິງແກ່ບັນດາປະເທດອາຊຽນເພື່ອຜ່ານຜ່າຄວາມຫຍຸ້ງຍາກ,ພ້ອມກັນຮັບມືກັບການທ້າທາຍ.ປະເທດຈີນເປັນກຳລັງສຳຄັນໃນການປົກປັກຮັກສາເສດຖະກິດການເງິນໃຫ້ມີຄວາມໝັ້ນຄົງ,ຊຸກຍູ້ໃຫ້ມີສັນຕິພາບ ແລະ ການພັດທະນາໃນພາກພື້ນຂອງຕົນ.ຜູ້ນຳຂອງບັນດາປະເທດອາຊຽນເຫັນດີເຫັນພ້ອມນຳຂໍ້ລິເລີ່ມໃໝ່ກ່ຽວກັບການຮ່ວມມືທີ່ທ່ານ ເວິນ ເຈຍປາວໄດ້ສະເໜີອອກ,ແລະ ຫວັງວ່າຈະຮັກສາການພົບປະສົນທະນາດ້ານການເມືອງກັບປະເທດຈີນ,ສ້າງຄວາມໄວ້ເນື້ອເຊື່ອໃຈກັນທາງການເມືອງໃຫ້ລົງເລິກ; ໂດຍຖືເອົາກາລະໂອກາດທີ່ເຂດການຄ້າເສລີລະຫວ່າງອາຊຽນ-ປະເທດຈີນໄດ້ສ້າງສຳເລັດຢ່າງຮອບດ້ານນັ້ນ,ເພີ່ມທະວີການຮ່ວມມືທາງດ້ານເສດຖະກິດການຄ້າ ແລະ ການໄປມາຫາສູ່ກັນ; ຊຸກຍູ້ການຮ່ວມມື ແລະ ການແລກປ່ຽນໃນຂົງເຂດການເງິນການຄັງ,ການກໍ່ສ້າງໂຄງຮ່າງພື້ນຖານ,ການຄວບຄຸມກັນພະຍາດ,ສິ່ງແວດລ້ອມ,ວັດທະນະທຳສັງຄົມເປັນຕົ້ນໃຫ້ໄດ້ຮັບໝາກຜົນຕົວຈິງຫລາຍກວ່າເກົ່າ;ຊຸກຍູ້ການປະຕິຮູບຂອງລະບົບເສດຖະກິດການທະນາຄານສາກົນ, ປົກປັກຮັກສາສິດຜົນປະໂຫຍດຮ່ວມກັນ.

# ງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6: ຈັບມືກັນກ້າວໄປໜ້າ ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ຊະນະພ້ອມກັນ




ວັນທີ 20 ຕຸລາປີ 2009,ງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6 ໄດ້ເປີດພິທີຢ່າງຄຶກຄື້ນທີ່ນານນິນກວາງຊີ ສປ ຈີນ

2009 年 10 月 20 日，第六届中国—东盟博览会在广西南宁隆重开幕　苏雯雯 摄

## 第六届中国—东盟博览会 ：
## 携手前行 互利共赢

文 / 苏雯雯

2009 年 10 月 20 日—24 日，以“合作化危为机，信心点亮航程”为主题的第六届中国——东盟博览会在中国广西南宁举行。本届博览会在中国—东盟自由贸易区即将建成和应对国际金融危机的背景下举办，中国和东盟国家领导人、两百余位部长级官员和国际组织负责人共同出席，体现了各方对博览会平台的重视和认可，展示了各方在应对国际金融危机中相互合作、共克时艰，共同实现 2010 年建成中国—东盟自贸区目标的坚定信心。

ວັນທີ 20-24 ຕຸລາປີ 2009,ງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6 ຖື "ແກ້ໄຂວິກິດການດ້ວຍການຮ່ວມມື,ໄຕ່ຮຸ່ງໃສໄລຍະທາງນ້ຳດ້ວຍຄວາມໝັ້ນເຊື່ອໃຈ" ເປັນຫົວຂໍ້ນັ້ນໄດ້ຈັດຂຶ້ນທີ່ນານນິນກວາງຊີ ສປ ຈີນ.ໃຕ້ພູມຫລັງການສ້າງສາເຂດການຄ້າເສລີຈີນ-ອາຊຽນໃກ້ຈະສຳເລັດແລະການຮັບມືກັບວິກິດການການເງິນໂລກ,ຜູ້ນຳຈີນແລະຜູ້ນຳບັນດາປະເທດອາຊຽນ,ເຈົ້າໜ້າທີ່ຊັ້ນສູງຂັ້ນລັດຖະມົນຕີແລະຜູ້ຮັບຜິດຊອບອົງການຈັດຕັ້ງສາກົນລວມ 200 ກວ່າຄົນຮ່ວມງານ,ໄດ້ສະແດງໃຫ້ເຫັນ



ຕອນບ່າຍວັນທີ 19 ຕຸລາປີ 2009.ຄະນະຜູ້ແທນນຳໂດຍທ່ານບົວສອນ ບຸບຜາວັນນາຍົກລັດຖະມົນຕີລາວໄດ້ຢ້ຽມຊົມຫໍວາງສະແດງສິນຄ້າແຫ່ງຊາດລາວ
2009 年 10 月 19 日下午，老挝总理波松 · 布帕万一行参观巡视老挝国家商品馆 李 涛 摄

ວ່າທຸກຝ່າຍມີຄວາມເອົາໃຈໃສ່ ແລະ ຄວາມຍືນຢັນຕໍ່ເວທີງານວາງສະແດງດັ່ງກ່າວນີ້.ແລະ ສະແດງໃຫ້ເຫັນຄວາມໝັ້ນເຊື່ອໃຈອັນໜຽວແໜ້ນຂອງແຕ່ລະຝ່າຍໃນການຮ່ວມມືເຊິ່ງກັນ ແລະ ກັນ,ພ້ອມກັນຜ່ານຜ່າຄວາມທຸກຍາກລຳບາກ,ບັນລຸເປົ້າໝາຍສ້າງສຳເລັດເຂດການຄ້າເສລີຈີນ-ອາຊຽນໃຫ້ປາກົດເປັນຈິງຮ່ວມກັນໃນທາມກາງຮັບມືກັບວິກິດການການເງິນໂລກ.

ທ່ານເຊີນເຕີມິງລັດຖະມົນຕີກະຊວງການຄ້າ ສປ ຈີນກ່າວຢູ່ໃນພິທີໄຂງານວາງສະແດງດັ່ງກ່າວນີ້ວ່າ,ຫລັງຈາກສ້າງເຂດການຄ້າເສລີຈີນ-ອາຊຽນໃຫ້ສຳເລັດແລ້ວຈະມີຜົນປະໂຫຍດໃຫ້ແກ່ພົນລະເມືອງ19 ຮ້ອຍລ້ານຄົນ,ຈະຍົກສູງລະດັບສາຍພົວພັນຄູ່ຮ່ວມມືລະຫວ່າງຈີນ-ອາຊຽນຂຶ້ນສູ່ລະດັບໃໝ່ຍິ່ງຂຶ້ນ,ຈະຕ້ອງປະກອບສ່ວນອຸທິດກຳລັງເຂົ້າໃນການຈັບມືຖືແຂນຮັບມືກັບວິກິດການການເງິນໂລກ,ຊຸກຍູ້ການລົງທຶນການຄ້າສາກົນເປັນແບບງ່າຍດາຍ.

ທ່ານສຸລິນເລຂາທິການໃຫຍ່ກອງເລຂາອາຊຽນຊີ້ອອກວ່າ,ເຂດການຄ້າເສລີຈີນ-ອາຊຽນຈະຊຸກຍູ້ການຮ່ວມມືການຄ້າທີ່ໄດ້ພັດທະນາຢ່າງໄວລະຫວ່າງທັງສອງຝ່າຍນັ້ນໃຫ້ພັດທະນາໄວຕື່ມອີກກວ່າເກົ່າ.ລຶບລ້າງການກີດຂວາງດ້ານການຄ້າຈະຫລຸດຜ່ອນຕົ້ນທຶນການຄ້າໃຫ້ນ້ອຍລົງ,ຈະຍົກສູງປະສິດທິພາບໃນການຮ່ວມມືດ້ານເສດຖະກິດການຄ້າລະຫວ່າງອາຊຽນ ແລະ ຈີນຕື່ມອີກ,ພາຍຫລັງເຂດການຄ້າເສລີໄດ້ສ້າງສຳເລັດແລ້ວ,ການຮ່ວມມືລະຫວ່າງອາຊຽນກັບຈີນຈະເຂົ້າສູ່ໄລຍະໃໝ່ໄລຍະໜຶ່ງ.

ເວທີປາຖະກະຖາຫົວເລື່ອງ 11 ຄັ້ງທີ່ຈັດຂຶ້ນໄລຍະເປີດງານວາງສະແດງນັ້ນໄດ້ສະແດງລວງໜ້າອະນາຄົດການຮ່ວມມືພະຫຸພາຄີຢ່າງຮອບດ້ານລະຫວ່າງຈີນກັບບັນດາປະເທດອາຊຽນຍິ່ງກວ້າງຂວາງກວ່າເກົ່າອີກ.ການຮ່ວມມືດ້ານພາສີກັບວົງການການຄ້າ,ການຮ່ວມມືການເງິນ,ການພັດທະນາຜະລິດຕະພັນສິນຄ້າ,ການຮ່ວມມືຊັບສິນວັດທະນະທຳ,ການຮ່ວມມືກິດຈະການກົດໝາຍ,ການຮ່ວມມືເຂດເສດຖະກິດອ່າວພາກເໜືອ,ການຮ່ວມມືພັດທະນາຊັບສິນກະສິກຳແລະການຮ່ວມມືໂຈມຕີການກໍ່ໂທດກຳຂ້າມຊາດ,ການຮ່ວມມືດ້ານການປິ່ນປົວແລະການຢາທີ່ເປັນມູນເຊື້ອແລະອື່ນໆລ້ວນແຕ່ເຂົ້າສູ່ການປາຖະກະຖາທີ່ມີສີສັນຜິ




ວັນທີ 20 ຕຸລາປີ 2009,ທ່ານ ມາ ແປ່ວປະທານເຂດປົກຄອງຕົນເອງຊົນເຜົ່າຈວງກວາງຊີໄດ້ກ່າວຄຳປາໄສໃນພິທີເປີດງານວາງສະແດງສິນຄ້າຈີນອາຊຽນຄັ້ງທີ 6
2009 年 10 月 20 日，广西壮族自治区主席马飚在第六届中国—东盟博览会开幕式上致辞　李　涛 摄

ເສດ 11 ຄັ້ງດັ່ງກ່າວນີ້,ເນື້ອຫາການຮ່ວມມືນັ້ນໄດ້ແກ່ລື່ນຕໍ່ໄປຢ່າງບໍ່ສ້ຽງສຸດ,ຂົງເຂດທີ່ກ່ຽວເຖິງນັ້ນແມ່ນກວ້າງໃຫຍ່ໄພສານ.

"ປາຖະກະຖາການຮ່ວມມືດ່ານພາສີກັບວົງການການຄ້າ" ເປັນເວທີປາຖະກະຖາຫົວຂໍ້ຫຼັກຂອງງານວາງສະແດງຄັ້ງນີ້. ໃນເວທີປາຖະກະຖາຄັ້ງນີ້,ຜູ້ຮັບຜິດຊອບກົມໃຫຍ່ພາສີຈີນ ແລະ ລັດຖະມົນຕີນກະຊວງການເງິນ,ຜູ້ຮັບຜິດຊອບພາກສ່ວນດ່ານພາສີ ແລະ ຕົວແທນວິສາຫະກິດທີ່ກ່ຽວຂ້ອງຂອງບັນດາປະເທດອາຊຽນໄດ້ປີ້ນອ້ອມບັນຍັດແກ່ນສານ "ຊຸກຍູ້ການຄ້າເປັນແບບງ່າຍດາຍ" ໄດ້ດຳເນີນການຄົ້ນຄວ້າອະພິປາຍຢ່າງກວ້າງຂວາງ ແລະ ເລິກເຊິ່ງ,ໃນງານອັດພິທີປາຖະກະຖານັ້ນ,ໄດ້ຜ່ານ "ຂໍ້ສະເໜີນຳສົ່ງການຄ້າຈີນ-ອາຊຽນມານີນເປັນແບບງ່າຍດາຍ" ຢ່າງເປັນເອກະສັນກັນເຊິ່ງແນ່ໃສ່ການຊຸກຍູ້ການຄ້າເປັນແບບງ່າຍດາຍ ແລະ ພັດທະນາຢ່າງເລິກເຊິ່ງ,ຊຸກດັນການຄືບໜ້າເສດຖະກິດເປັນອັນໜຶ່ງອັນດຽວກັນຂຶ້ນສູ່ລະດັບສູງຂັ້ນໃໝ່. ນອກນັ້ນ,ເວທີປາຖະກະຖາຫົວຂໍ້ສະເພາະອັນອື່ນທີ່ຈັດຂຶ້ນໃນງານວາງສະແດງຄັ້ງນີ້,ກໍໄດ້ຮັບໝາກຜົນອຸດົມສົມບູນທາງດ້ານຂົງເຂດທີ່ແຕກຕ່າງກັນ. ເວທີປາຖະກະຖາຜູ້ນຳການເງິນໄດ້ຜ່ານ "ຖະແຫຼງການ




ທີ່ປະຊຸມສຸດຍອດທຸລະກິດ ແລະ ການລົງທຶນຈີນ-ອາຊຽນຄັ້ງທີ 6
第六届中国—东盟商务与投资峰会现场　苏雯雯　摄




ທີ່ປະຊຸມສຸດຍອດສຳພາດຂ່າວງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6 ແລະ ກອງປະຊຸມທຸລະກິດການລົງທຶນຈີນ-ອາຊຽນຄັ້ງທີ 6

第六届中国—东盟博览会、第六届中国—东盟商务与投资峰会新闻发布会现场

李 涛 摄




第六届中国—东盟博览会闭幕式

ຮ່ວມ",ເພື່ອເປັນການເພີ່ມທະວີການຮ່ວມມືດ້ານການເງິນລະຫວ່າງຈີນ-ອາຊຽນໄດ້ສະເໜີການຈັດວາງກົນໄກອັນໃໝ່.ເວທີປາຖະກະຖາຂັ້ນສູງພັດທະນາຊັບສິນກະສິກຳຈີນ-ອາຊຽນໄດ້ບັນລຸ"ຄວາມເຂົ້າໃຈກັນນານນີນ"ໄດ້ສ້າງພື້ນຖານອັນແໜ້ນແກ່ນເພື່ອພ້ອມກັນກໍ່ສ້າງເວທີອາຊຽນ 10 + 1 ແລະ ເວທີແພນແມ່ນ້ຳຈູຈຽງ 9 + 2 ແລະ ເວທີແລກປ່ຽນກັນທະວີພາຄີ.ການກຳເນີດ"ຖະແຫຼງການຮ່ວມ"ແລະ"ຄວາມເຂົ້າໃຈກັນ"ທີ່ເປັນລະບົບໜຶ່ງໄດ້ເຮັດໃຫ້ເນື້ອໃນແລະຂັ້ນລະດັບຂອງ"ວິຖີທາງນານນີນ"ແຫ່ງການຮ່ວມມືຈີນ-ອາຊຽນໃຫ້ອຸດົມສົມບູນ,ໄດ້ມີຜົນດີແກ່ການຮ່ວມມືມິດຕະພາບທະວີພາຄີໃນຫຼາຍຂົງເຂດໃຕ້ຂອບເຂດການຄ້າເສລີ,ໄດ້ສ້າງເສັ້ນທາງໃຫຍ່ອັນຮຸ່ງເຮືອງທີ່ມີອະນາຄົດທີ່ບໍ່ສ້ຽງສຸດເສັ້ນໜຶ່ງ.

ງານວາງສະແດງສິນຄ້າຄັ້ງນີ້ໄດ້ນຳໃຊ້ມາດຕາການໃໝ່ເຊັ່ນ:ເລື່ອນຍາວໄລຍະງານວາງສະແດງ,ຂະຫຍາຍຄວາມຂະໜາດຂອງງານວາງສະແດງໃຫ້ກວ້າງອອກ ແລະ ຕັ້ງສະໜາມຈັດງານວາງສະແດງທີ່ກ່ຽວຂ້ອງເປັນຄັ້ງທຳອິດ ແລະ ອື່ນໆໄດ້ປະດິດສ້າງໃໝ່ຮູບແບບວາງສະແດງ,ອຳນວຍໂອກາດສະແດງ,ປຶກສາຫາລືກັນແລະຊື້ຂາຍຍິ່ງຫຼາຍກວ່າເກົ່າໃຫ້ແກ່ວິສາຫະກິດ,ທັງອຳນວຍການຊ່ວຍເຫຼືອຍິ່ງຫຼາຍກວ່າເກົ່າໃຫ້ແກ່ວິສາຫາກິດທີ່ໄດ້ຮັບໂອກາດການຄ້າຂອງເຂດການຄ້າເສລີ.ພ້ອມກັນນັ້ນ,ການວາງສະແດງຫົວຂໍ້ສະເພາະກະສິກຳ,ການວາງສະແດງບໍ

ລິການການເງິນທີ່ຕັ້ງຂຶ້ນໃໝ່ນັ້ນ,ໄດ້ສະໜອງເນື້ອໃນການຮ່ວມມືທີ່ມີລັກສະນະແນ່ໃສ່ໃຫ້ແກ່ວິສຫະກິດທີ່ໄດ້ຮັບໂອກາດການຄ້າຂອງເຂດການຄ້າເສລີ.ນອກນັ້ນ,ງານວາງສະແດງສິນຄ້າຄັ້ງນີ້



ງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6 ,ນັກທຸລະກິດເປັນຈຳນວນຫຼວງຫຼາຍເຕົ້າໂຮມນຳກັນ
第六届中国—东盟博览会客商云集 李 涛 摄

ໄດ້ຍົກສູງລະດັບບໍລິການ,ໄດ້ເພີ່ມທະວີຄວາມເຂັ້ມແຂງຂອງນັກທຸລະກິດຈັດຊື້ເຊື້ອເຊີນ ແລະ ເສດຖະກິດຄົບຄູ່ກັບການຄ້າ,ໄດ້ສະໜອງຊ່ອງທາງການຮ່ວມມືເຮັດແທ້ທຳຈິງຢ່າງມີປະສິດທິພາບ

ໃຫ້ແກ່ວິສາຫະກິດທີ່ໄດ້ຮັບໂອກາດການຄ້າຂອງເຂດການຄ້າເສລີ.

ງານວາງສະແດງສິນຄ້າຄັ້ງນີ້ໄດ້ຮັບຄວາມສົນໃຈ ແລະ ມີສ່ວນຮ່ວມຢ່າງຕັ້ງໜ້າຈາກປະເທດ,ເຂດແຄ້ວນທີ່ຢູ່ນອກພາກພື້ນ ແລະ ອົງການຈັດຕັ້ງສາກົນ.ໃນປະເທດແລະເຂດແຄ້ວນນອກພາກພື້ນນັ້ນ,ບໍ່ພຽງແຕ່ມີປະເທດທີ່ເຄີຍມາຮ່ວມງານຄືຝະລັ່ງ,ຍີ່ປຸ່ນ,ສ.ເກົາຫລີເທົ່ານັ້ນ,ຍັງມີປະເທດທີ່ມາຮ່ວມງານເທື່ອທໍາອິດຄືຮົງກາລີ,ມາດາກາສະກາອີກດ້ວຍ.ໄລຍະງານວາງສະແດງນັ້ນ,ອໍານາດການປົກຄອງແຂວງມາເອີນໂທກຸຝະລັ່ງໄດ້ຈັດງານສົ່ງເສີມແນະນໍາ,ບໍລິສັດເຫຼົ້າຊໍາປາຍເຣືອງຣິກຸໂຣດຝະລັ່ງກາຍເປັນຄູ່ຮ່ວມມືເອີຣົບຜູ້ທໍາອິດຂອງງານວາງສະແດງຄັ້ງນີ້.ສິ່ງເຫຼົ່ານີ້ໄດ້ຊຸກຍູ້ນອກພາກພື້ນມີຄວາມເຂົ້າໃຈຕໍ່ຈີນແລະອາຊຽນຢ່າງເລິກເຊິ່ງ,ໄດ້ຍົກສູງອິດທິພົນຂອງຈີນ ແລະ ອາຊຽນເຊິ່ງເປັນອັນໜຶ່ງອັນດຽວກັນຢູ່ໃນໂລກ.



ຫໍວາງສະແດງປະເທດໄທ
泰国展馆 苏雯雯 摄



ຫໍວາງສະແດງຫວຽດນາມ
越南展馆 苏雯雯 摄

6 ປີທີ່ຜ່ານມາ,ງານວາງສະແດງສິນຄ້າຈີນ-ອາຊຽນໄດ້ສ້າງກາລະໂອກາດດ້ານການຄ້າໃຫ້ແກ່ວິສາຫະກິດທັງສອງຝ່າຍ,ກາຍເປັນເວທີໃໝ່ທີ່ການນໍາຊັ້ນສູງຂອງຈີນ ແລະ ອາຊຽນດໍາເນີນການປຶກສາຫາລືກັນແລະໄດ້ຊຸກດັນການຮ່ວມມືດ້ານເສດຖະກິດການຄ້າແລະການລົງທຶນລະຫວ່າງຈີນ ແລະ ອາຊຽນໂດຍກົງ,ໃນງານວາງສະແດງສິນຄ້າ5ຄັ້ງນີ້,ຍອດມູນຄ່າການຄ້າທັງສອງຝ່າຍໄດ້ບັນລຸເຖິງ 6,5 ຕື້ໂດລາສະຫະລັດ,ຍອດມູນຄ່າການລົງເຊັນສັນຍາໃນການຮ່ວມມືການລົງທຶນສາກົນບັນລຸເຖິງ 28,6 ຕື້ໂດລາສະຫະລັດ,ຍອດມູນຄ່າການຄ້າ ແລະ ຍອດມູນຄ່າການລົງທຶນໄດ້ເພີ່ມຂຶ້ນຢ່າງໃຫຍ່ຫຼວງລຽນຕິດຫຼາຍປີ.

ຄຽງຄູ່ກັນນັ້ນ,ໜ້າທີ່ແຫ່ງການຊຸກຍູ້ການສ້າງຕັ້ງເຂດການຄ້າເສລີຈີນ-ອາຊຽນເຊິ່ງເປັນໜ້າທີ່ສໍາຄັນທີ່ງານວາງສະແດງສິນຄ້າຈີນ-ອາຊຽນແບກຫາບນັ້ນໄດ້ປາກົດເປັນຈິງໂດຍພື້ນຖານແລ້ວ.ອັນໄດ້ເປັນເຂດການຄ້າເສລີແຫ່ງທໍາອິດຂອງຈີນ,ທັງແມ່ນເຂດການຄ້າເສລີແຫ່ງທໍາອິດເຊິ່ງອາຊຽນເປັນອັນໜຶ່ງອັນດຽວກັນສ້າງຂຶ້ນຕໍ່ພາຍນອກ.ເຂດການຄ້າເສລີຈີນ-ອາຊຽນຈະສ້າງສໍາເລັດໃນປີ 2010 ເຂດການຄ້າເສລີຈະໃຫ້ຜົນປະໂຫຍດແກ່ພົນລະເມືອງ 19 ຮ້ອຍລ້ານ,GDP ເກືອບ 6000 ຕື້ໂດລາສະຫະລັດ,ຍອດມູນຄ່າການຄ້າ 4500 ຕື້ໂດລາສະຫະລັດ.ເຖິງເວລານັ້ນ,ຜະລິດຕະພັນການຄ້າ 90% ຂອງຈີນ ແລະ ອາຊຽນຈະບັນລຸເຖິງພາສີສູນ,ແລະ ເປີດກວ້າງຕະຫລາດບໍລິການການຄ້າຢ່າງແທ້ຈິງ.

4 ຫົວຂໍ້ຄືການຊື້ຂາຍສິນຄ້າ,ການຮ່ວມມືລົງທຶນ,ເຕັກນິກເຕັກໂນໂລຊີທັນສະໄໝ ແລະ "ຕົວເມືອງທີ່ມີສະເໜ່" ທີ່ຈັດຂຶ້ນໃນງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6 ນັ້ນລວມຕັ້ງຮ້ານວາງສະແດງ 4000 ຮ້ານ.ງານວາງສະແດງເປັນເວລາ 5 ວັນໄດ້ດູດດຶງນັກທຸລະກິດເກືອບ 50 ພັນຄົນເຊິ່ງມາຈາກຈີນ,ປະເທດຕ່າງໆ ແລະເຂດແຄ້ວນມາເຂົ້າຮ່ວມ,ຍອດມູນຄ່າຊື້ຂາຍລວມສິ້ນກາຍ 16 ຮ້ອຍລ້ານໂດລາສະຫະລັດ.

## Can't we blend art and commerce?

- With your participation, PHOTOMEKONG will a most successful 'bridge' ! Please just press your shutter for the most wonderful moment and join us, to blend art and commerce!
- We are expecting your agreement to work with us as a photographer at PHOTOMEKONG!
- PHOTOMEKONG includes numerous photos representing the natural and humanistic attractions, ethnic cultures, socio-economic development and local resources of China's Yunan province, Myanmar, Thailand, Laos, Cambodia and Vietnam along the Mekong River. With its professional services, exhibition of photos by photographers from Yunnan of China and Southeast Asian countries, and a transaction platform, PHOTOMEKONG also provides state-of-the-art photo resources for the clients engaged in newspapers, periodicals, magazines, pictorials and other media.



PHOTOMEKONG
湄 公 河 图 片 库

http://www.photomekong.com Fax: +86 871 3103179 E-mail: service@photomekong.com
Address: Room 1512, Hongcheng Plaza, Youth Road, Kunming City 650021 Yunnan Province, China



ວັນທີ 19 ຕຸລາປີ 2009.ທ່ານ ລີ ເຄີຊຽງ ຮອງນາຍົກລັດຖະມົນຕີຈີນໄດ້ພົບປະທ່ານບົວສອນ ບຸບຜາວັນນາຍົກລັດຖະມົນຕີລາວທີ່ມາຮ່ວມງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6
2009 年 10 月 19 日，中国国务院副总理李克强在广西南宁会见出席第六届中国 - 东盟博览会的老挝总理波松 · 布帕万 新华社 图

# ທ່ານນາຍົກ ສ ປປ ລາວ: ການຮ່ວມມືຈີນ-ອາຊຽນສົມກຽດເປັນແບບຢ່າງຂອງການຮ່ວມມືສາກົນ

## 老挝总理 ：
## 中国—东盟合作堪称国际合作典范

文 / 苏雯雯

老挝作为第六届中国—东盟博览会 “ 主题国 ” 备受关注。老挝总理波松 · 布帕万在接受中老媒体联合采访时称，中国—东盟自贸区明年将如期建成，中国和东盟的合作堪称国际合作的典范。

ສປປລາວໃນຖານະເປັນ "ປະເທດຫົວຂໍ້" ຂອງງານເອກສະໂປຈີນ-ອາຊຽນຄັ້ງທີ 6 ແມ່ນໄດ້ຮັບສົນໃຈພໍສົມຄວນ.ທ່ານບົວສອນ ບຸບຜາວັນ ນາຍົກລັດຖະມົນຕີແຫ່ງສປປລາວໄດ້ໃຫ້ສໍາພາດຕໍ່ນັກຂ່າວຈີນ ແລະ ລາວຮ່ວມກັນ,ໂດຍໄດ້ກ່າວວ່າ,ເຂດການຄ້າເສລີຈີນ-ອາຊຽນຈະສ້າງໃຫ້ສໍາເລັດຕາມກໍານົດເວລາໃນປີໜ້າ,ການຮ່ວມມືລະຫວ່າງປະເທດຈີນ ແລະ ອາຊຽນສົມກຽດເປັນແບບຢ່າງຂອງການຮ່ວມມືສາກົນ.

ໃນງານເອກສະໂປຈີນ-ອາຊຽນຄັ້ງທີ 6 ສປປລາວໃນຖານະເປັນ "ປະເທດຫົວຂໍ້" ໄດ້ຮ່ວມເປັນເຈົ້າພາບກັບ ສປຈີນ,ໄດ້ເປັ່ງສີສັນງົດງາມໃນງານເອກສະໂປດັ່ງກ່າວ.ວັນທີ 19 ຕຸລາ, ທ່ານບົວສອນ ບຸບຜາວັນນາຍົກລັດຖະມົນຕີລາວ ແລະ ທ່ານ ຫລີ ເຂີສຽງ ຮອງນາຍົກລັດຖະມົນຕີຈີນຮ່ວມກັນຕີຄ້ອງເປີດຫໍປະເທດລາວ.ຕອນເຊົ້າວັນທີ 20 ຕຸລາ,ທ່ານ ນາມ ວິຍະເກດ ລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າແຫ່ງ ສປປລາວໄດ້ເປັນປະທານຂອງພິທີເປີດງານເອກສະໂປຈີນ-ອາຊຽນ

ຄັ້ງທີ 6 ແລະ ໄດ້ກ່າວຄຳປາໄສໃນພິທີເປີດ. ຕໍ່ງານເອກະສະໂປຄັ້ງນີ້, ທ່ານນາຍົກບົວສອນເຫັນວ່າມີຄວາມໝາຍສຳຄັນທີ່ສຸດ, ຍ້ອນວ່າດ້ານໜຶ່ງບັນດາປະເທດອາຊຽນກຳລັງສະແຫວງຫາການສ້າງສາເປັນກຸ່ມອາຊຽນ, ອີກດ້ານໜຶ່ງ, ກໍ່ພວມກະກຽມເພື່ອຮັບຕ້ອນເຂດການຄ້າເສລີຈີນ-ອາຊຽນທີ່ໃກ້ຈະສ້າງສຳເລັດໃນປີ 2010, ອັນນີ້ຈະເຮັດໃຫ້ສາຍພົວພັນຄູ່ຮ່ວມມືຍຸດທະສາດລະຫວ່າງອາຊຽນກັບປະເທດຈີນໄດ້ຮັບການເພີ່ມທະວີຂຶ້ນຕື່ມ. ເພິ່ນເຊື່ອໝັ້ນວ່າ, ງານເອກະສະໂປກໍ່ຈະສືບຕໍ່ສົ່ງເສີມບົດບາດອັນສຳຄັນຍິ່ງໃນການຊຸກຍູ້ການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ການລົງທຶນລະຫວ່າງສປປລາວ ກັບ ສປ ຈີນ. ທ່ານນາຍົກບົວສອນເຫັນດີເຫັນພ້ອມທີ່ຈະສືບຕໍ່ຈັດງານເອກະສະໂປຈີນ-ອາຊຽນຕໍ່ໄປ, ເພື່ອຊຸກຍູ້ການຮ່ວມມືດ້ານເສດຖະກິດການຄ້າ ແລະ ການລົງທຶນລະຫວ່າງອາຊຽນກັບປະເທດຈີນເວົ້າລວມ ແລະ ລະຫວ່າງສປປລາວກັບສປຈີນເວົ້າສະເພາະ, ພ້ອມກັນສ້າງພາກພື້ນປະເທດຈີນ-ອາຊຽນໃຫ້ກາຍເປັນເຂດທີ່ເຂັ້ມແຂງ ແລະ ຈະເລີນກວ່າເກົ່າ.

ໃນເວລາໃຫ້ສຳພາດຕໍ່ນັກຂ່າວ, ທ່ານນາຍົກບົວສອນ ບຸບຜາວັນໄດ້ແນະນຳວ່າ, ງານເອກະສະໂປຄັ້ງນີ້, ສປປ ລາວໄດ້ໃຊ້ຫົວໜ່ວຍວາງສະແດງເກືອບ 100 ຫົວໜ່ວຍ, ບໍລິສັດທີ່ເຂົ້າຮ່ວມການວາງສະແດງມີ 38 ບໍລິສັດ, ທຽບໃສ່ຄັ້ງທີ່ແລ້ວເພີ່ມຂຶ້ນ 60%.

ເພິ່ນເຫັນວ່າ, ການທີ່ສ້າງເຂດການຄ້າເສລີຈີນ-ອາຊຽນໃນປີ 2010 ໃຫ້ສຳເລັດ, ຈະໄດ້ນຳເອົາກາລະໂອກາດ ແລະ ການທ້າທາຍໃຫ້ແກ່ທັງສອງຝ່າຍ. ແຕ່ວ່າ, ປະເທດຈີນ ແລະ ອາຊຽນເປັນຄູ່ຮ່ວມມືຍຸດທະສາດ, ທະແນມແຕ່ທີ່ທັງສອງຝ່າຍພ້ອມກັນປະຕິບັດຖະແຫລງການກ່ຽວກັບຄູ່ຮ່ວມມືຍຸດທະສາດແລ້ວ, ແນ່ນອນຈະສາມາດສົ່ງເສີມໃຫ້ສາຍພົວພັນຂອງສອງຝ່າຍມີການຂະຫຍາຍຕົວຕື່ມອີກ, ນຳເອົາຄວາມສຸກ ແລະ ຜົນປະໂຫຍດມາໃຫ້ປະຊາຊົນອາຊຽນ ແລະ ຈີນໄດ້. ເພິ່ນໄດ້ເວົ້າວ່າ, ການຂະຫຍາຍຕົວຂອງສາຍພົວພັນປະເທດຈີນກັບອາຊຽນ ແລະ ການສ້າງສຳເລັດເຂດການຄ້າເສລີຈີນ-ອາຊຽນ, ເປັນແບບຢ່າງດີທີ່ສຸດສຳຫລັບການຮ່ວມມືສາກົນ.




ວັນທີ 20ຕຸລາປີ 2009, ງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6ໄດ້ເປີດພິທີຢ່າງຄຶກຄື້ນທີ່ສູນທຳປະຊຸມສາກົນນານນິນກວາງຊີ ສປ ຈີນ. ພາບນີ້ແມ່ນທ່ານບົວສອນ ບຸບຜາວັນນາຍົກລັດຖະມົນຕີລາວພວມກ່າວຄຳປາໄສໃນພິທີເປີດງານ
2009 年 10 月 20 日，第六届中国 - 东盟博览会在广西南宁国际会展中心开幕。这是老挝总理波松 · 布帕万在开幕式上致词　新华社 图

ທ່ານນາຍົກບົວສອນໄດ້ກ່າວວ່າ, ຕໍ່ໜ້າວິກິດການການເງິນໂລກ, ເສດຖະກິດປະເທດຈີນຂະຫຍາຍຕົວຢ່າງວ່ອງໄວ, ລ້ວນແຕ່ມີບົດບາດຫລາຍສຳຫລັບປະເທດຈີນເອງ ແລະ ອາຊຽນ. ປະເທດຈີນໄດ້ໃຫ້ການຊ່ວຍເຫລືອຫລາຍໃຫ້ແກ່ບັນດາປະເທດອາຊຽນໃນການຕ້ານວິກິດການການເງິນ, ໃນພາຍຸການເງິນອາຊີເມື່ອປີ 1997 ແລະ ວິກິດການການເງິນໂລກປີ 2008, ປະເທດຈີນຍຶດໝັ້ນບໍ່ໃຫ້ເງິນຢວນຈີນຕົກມູນຄ່າ, ໄດ້ໃຫ້ການສະໜັບສະໜູນຢ່າງໃຫຍ່ຫລວງໃຫ້ແກ່ບັນດາປະເທດອາຊຽນ, ເຮັດໃຫ້ຜະລິດຕະພັນອາຊຽນໄດ້ສົ່ງອອກຕະຫລາດປະເທດຈີນຢ່າງສະດວກ.

ເພິ່ນຍັງແນະນຳວ່າ, ປະຈຸບັນນີ້, ສປປລາວກຳລັງດຳເນີນການສ້າງສາຕ່າງໆຢ່າງຕັ້ງໜ້າ, ພະຍາຍາມປັບປຸງໂຄງລ່າງພື້ນຖານຄືຄົມມະນາຄົມ ແລະ ອື່ນໆໃຫ້ດີ, ພວມຫ້າວຫັນກະກຽມສ້າງເສັ້ນທາງລົດໄຟ ແລະ ເສັ້ນທາງດ່ວນທີ່ເຊື່ອມໂຍງກັບ ສປ ຈີນ ແລະ ບັນດາປະເທດອາຊຽນ.




ວັນທີ 19 ຕຸລາປີ 2009.ກ່ອນຈະເປີດງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6 ທ່ານ ລີ ເຄີຊຽງ ກຳມະການປະຈຳກົມການເມືອງ,ຮອງນາຍົກລັດຖະມົນຕີຈີນມາສູນການຄ້າປ້ຽມຊິນຫໍວາງສະແດງ.ພາບນີ້ແມ່ນທ່ານ ລີ ເຄີຊຽງ ຕີຄ້ອງພ້ອມກັນກັບທ່ານບົວສອນ ບຸບຜາວັນນາຍົກລາວເພື່ອໄຂຫໍວາງສະແດງລາວ

2009 年 10 月 19 日，在第六届中国—东盟博览会开幕前夕，中共中央政治局常委、国务院副总理李克强来到南宁国际会展中心参观展馆。图为李克强敲响铜锣，与老挝总理波松共同为老挝馆开馆　新华社 图

# ສະຫວັນນະເຂດ—ຕົວເມືອງທີ່ມີສະເໜ່ຂອງລາວໄດ້ອອກໜ້າຢູ່ໃນງານວາງສະແດງສິນຄ້າຈີນ—ອາຊຽນ

## 老挝魅力之城沙湾拿吉省亮相中国 - 东盟博览会

文 / 苏雯雯

从第二届中国—东盟博览会开始，各国在国家专题展区推介的魅力之城便成为了博览会期间的一大亮点，吸引了众多客商的眼球。老挝作为第六届中国—东盟博览会的主题国，在此次展会上，也携带着其第二大城市沙湾那吉省在博览会上惊艳亮相，综合展示其在贸易、投资、科技、文化、旅游等方面的发展和商机。

ເລີ່ມແຕ່ງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 2 ເປັນຕົ້ນມາ,ຕົວເມືອງທີ່ມີສະເໜ່ຂອງປະເທດຕ່າງໆທີ່ໄດ້ສະເໜີໃນເຂດວາງສະແດງເຊິ່ງເປັນຫົວຂໍ້ຂອງຊາດນັ້ນກໍໄດ້ກາຍເປັນຈຸດຮຸ່ງໃສໃຫຍ່ຈຸດໜຶ່ງໄລຍະງານວາງສະແດງ,ໄດ້ດູດດຶງສາຍຕານັກທຸລະກິດເປັນຈຳນວນຫຼວງຫຼາຍ.ລາວເປັນປະເທດເຈົ້າພາບຂອງງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງທີ 6 ກໍໄດ້ນຳ




ຫໍວາງສະແດງແຂວງສະຫວັນນະເຂດ " ຕົວເມືອງທີ່ມີສະເໜ່ " ແຫ່ງປະເທດລາວ
老挝 " 魅力之城 " 沙湾拿吉省展厅　新华社 图

ເອົາແຂວງສະຫວັນນະເຂດເຊິ່ງເປັນແຂວງໃຫຍ່ທີ 2 ຂອງລາວ ໄດ້ອອກໜ້າໃນງານວາງສະແດງຄັ້ງນີ້ຢ່າງຈັບຕາ, ສະແດງ ສັງລວມການພັດທະນາ ແລະ ກາລະໂອກາດທຸລະກິດຂອງລາວ ທາງດ້ານການຄ້າ,ການລົງທຶນ,ວິທະຍາສາດເຕັກນິກ,ວັດທະ ນະທຳ ແລະ ການທ່ອງທ່ຽວເປັນຕົ້ນ.

ຍ່າງເຂົ້າສູ່ເຂດວາງສະແດງສະຫວັນນະເຂດຂອງລາວ, ເໝືອນດັ່ງເຂົ້າສູ່ເມືອງເກົ່າແກ່ເມືອງໜຶ່ງທີ່ໄດ້ຜ່ານຜ່າຟ້າຝົນ ລົມແດງເປັນເວລາຍາວນານ,ນັ່ງຢູ່ຫັ້ນສາມາດຟັງນິທານຂອງ ຕົວເມືອງດັ່ງກ່າວນີ້ທີ່ເປັນພັນໆປີມານີ້.

ບ່ອນປະຕູເຂົ້າຂອງເຂດວາງສະແດງນັ້ນແມ່ນປະຕູໂຂງ ຂອງຫໍສະໝຸດເກົ່າແກ່ທີ່ເປັນແບບຢ່າງຂອງພາກໃຕ້ລາວ.ຫໍສະ ໝຸດແຫ່ງນີ້ຕັ້ງຢູ່ບ້ານໜອງລານ,ເປັນຫ້ອງສາງໄວ້ສະບັບຕົ້ນ ປຶ້ມໜັງສືເກົ່າແກ່ທີ່ສຳຄັນຂອງລາວ.ການປຸກສ້າງທາງນອກ ຂອງມັນແມ່ນເຮືອນໄມ້ແບບແຜນບູຮານທີ່ໄດ້ລື່ນກາຍ 200 ກວ່າປີແລ້ວ,ພາຍໃນຫໍສະໝຸດນັ້ນມີຮ່າງໜັງສືໃບລານທີ່ບັນທຶກ ໄວ້ກ່ຽວກັບເລື່ອງທຳມະວົງແລະມີຮ່າງປຶ້ມໜັງສືເກົ່າແກ່ທີ່ຂຽນ ດ້ວຍມືເປັນຈຳນວນຫຼວງຫຼາຍ.

ປະມານ 20 ກ່ອນ,ໄດ້ປະກົດເຫັນຟອດຊຽວໄດໂນເສົາທີ່ ໃຫຍ່ໂຕໃນຂົງເຂດສະຫວັນນະເຂດໄດ້ກາຍເປັນ "ເທພະດາອາ ຮັກ" ໃນຂົງເຂດວາງສະແດງຕົວເມືອງທີ່ມີສະເໜ່.

ສິ່ງທີ່ໜ້າປະທັບໃຈພາຍໃນເຂດວາງສະແດງແມ່ນພຣະທາດ ອິງຮັງ,ເປັນຜາສາດຂອງຄົນຂະເໝນບູຮານທັງເປັນເມືອງເຄື່ອງ ເງິນແບບແຜນບູຮານຂະໜາດໃຫຍ່ຂອງເມືອງລາວ-ໄດ້ເລົ່າ ເລື່ອງວັດທະນະທຳປະຫວັດສາດແລະຮີດຄອງພື້ນແຜ່ນຂອງສະ ຫວັນນະເຂດຂອງລາວທີ່ມີແຕ່ອັນດຽວແກ່ຄົນທັງຫຼາຍ.

ຮູບຈຳລອງຂອງຫໍສະໜາມຊີເກມລາວ ແລະ ຮູບຈຳລອງ ເຂດພິເສດເສດຖະກິດສະຫວັນນະເຂດໄດ້ສະແດງການພັດທະ ນາຢ່າງຕໍ່ເນື່ອງຂອງເມືອງລາວ.

ລາວເປັນປະເທດເຈົ້າພາບຂອງງານວາງສະແດງສິນຄ້າ ຈີນ-ອາຊຽນຄັ້ງທີ 6 ລາວກໍໄດ້ຈັດການເຄື່ອນໄຫວເຊິ່ງເປັນເຈົ້າ ພາບທີ່ມີສີສັນອຸດົມສົມບູນໄລຍະງານວາງສະແດງນີ້ຄື: "ວັນອາ ຫານແຊບ", "ວັນເຄື່ອງນຸ່ງອາພອນ" ແລະ ອື່ນໆ,ການສະແດງ ຟ້ອນລຳທຳເພງທີ່ມີສີສັນຮີດຄອງພື້ນແຜ່ນຕ່າງຊາດຂອງຄະນະ ສິລປະກອນລາວຍິ່ງຈະໄດ້ຮັບຄວາມຮ້ອງໂຮໄຊໂຍ ແລະ ຕົບມື





ແຜນຮູບຈຳລອງເຂດພິເສດແຂວງສະຫວັນນະເຂດ
沙湾拿吉省特区模型　苏雯雯 摄



ຊົມເຊີຍຄັ້ງແລ້ວຄັ້ງອີກຈາກທ່ານຜູ້ຊົມທຸກທ່ານນະທີ່ນີ້.

ແຂວງສະຫວັນນະເຂດແມ່ນບ້ານເກີດຂອງທ່ານໄກສອນພົມວິຫານອະດີດປະທານປະເທດ ສ ປປ ລາວ,ພາຍໃນແຂວງໄດ້ມີຊັບພະຍາກອນແຮ່ທາດທີ່ອຸດົມສົມບູນເຊັ່ນ:ຫີນກາວ,ຄຳ,ທອງ,ອາຍທຳມະຊາດ,ນ້ຳມັນເຊື້ອເພີງ ແລະ ອື່ນໆ,ເປັນບ່ອນທີ່ຄຶນເດັ່ນດີນຮັ່ງ.ຕົວເມືອງສະຫວັນນະເຂດເປັນເມືອງເອກແຂວງສະຫວັນນະເຂດຕັ້ງຢູ່ຝັ່ງຊາຍຂອງແມ່ນ້ຳຂອງພາຍໃນລາວ,ເອີ້ນມັນວ່າ "ພະລາຊະທິດາຜູ້ທີສອງ" ເຊິ່ງມາຈາກມັນເປັນຕົວເມືອງໃຫຍ່ທີສອງຂອງລາວ.ແຫ່ງນີ້ເປັນທ່າເຮືອການຄ້າທີ່ສຳຄັນຕິດພັນກັບປະເທດລາວ,ໄທແລະຫວຽດນາມ.

ປັດຈຸບັນນີ້,ຂົວມິດຕະພາບໝາຍເລກທີ 2 ຂອງລາວເຊິ່ງແຂວງສະຫວັນນະເຂດຕິດພັນກັບຈັງຫວັດມູກດາຫານໄທໄດ້ສ້າງສຳເລັດແລ້ວ,ແລວທາງເສດຖະກິດແຕ່ທິດຕາເວັນອອກຫາຕາເວັນຕົກໄດ້ສ້າງເປັນຮູບເປັນຮ່າງຂຶ້ນນັ້ນໄດ້ກາຍເປັນຈຸດຮຸ່ງໃສໃໝ່ແຫ່ງການດູດດຶງນັກລົງທຶນ.ນອກນັ້ນ,ເຂດພິເສດເສດຖະກິດສະຫວັນ-ເຊໂນເຊິ່ງເປັນໜຶ່ງໃນໂຄງການຂັ້ນແຂວງສະຫວັນນະເຂດກໍເປັນຕົວເອກທີ່ດູດດຶງທຶນຕ່າງປະເທດເຂົ້າມາລາວ,ດູດດຶງສາຍຕາຂອງນັກລົງທຶນທີ່ມາຈາກປະເທດອ້ອມຂ້າງເຊັ່ນ:ປະເທດໄທ,ມາເລເຊຍ,ສິງກາໂປ,ຍີ່ປຸ່ນແລະປະເທດອື່ນໆ.ເຊື່ອແນ່ວ່າ,ໂດຍຜ່ານງານວາງສະແດງສິນຄ້າຈີນ-ອາຊຽນຄັ້ງນີ້ແລ້ວ,ແຂວງສະຫວັນນະເຂດຈະດູດດຶງນັກລົງທຶນຍິ່ງຫຼາຍກວ່າເກົ່າອີກ.

ກອງເລຂາງານວາງສະແດງສິນຄ້າຈີນ-ອາຊຽນໄດ້ສະເໜີອອກມາວ່າ,ເລີ່ມແຕ່ງານວາງສະແດງຄັ້ງທີ 2 ເປັນຕົ້ນມາປະເທດຈີນ ແລະ ປະເທດອື່ນໆຂອງອາຊຽນກໍໄດ້ເລືອກເອົາຕົວເມືອງໃນເຂດແຄ້ວນແຫ່ງໜຶ່ງ ທີ່ສາມາດເປັນຕົວແທນສີສັນພິເສດຂອງປະເທດຕົນເອງມາສະເໜີແນະນຳຢ່າງຄຶກຄື້ນໃນເຂດວາງສະແດງທີ່ເປັນຫົວຂໍ້ຂອງຊາດຢູ່ໃນງານວາງສະແດງ.ຫົວຂໍ້ "ຕົວເມືອງທີ່ມີສະເໜ່" ເຮັດໃຫ້ປະເທດຕ່າງໆໄດ້ມີໂອກາດສະແດງຮູບໂສມ ທີ່ມີເອກະລາດສະເພາະທີ່ຕົວເມືອງຂອງເຂົາ ແລະ ກາລະໂອກາດພັດທະນາການຄ້າຢ່າງເຕັມສ່ວນ,ຊຸກຍູ້ມິດຕະພາບແລະການຮ່ວມມືລະຫວ່າງບັນດາຕົວເມືອງ.ຫົວຂໍ້ດັ່ງກ່າວນີ້ຈະສືບຕໍ່ດຳເນີນໄປໃນງານວາງສະແດງຄັ້ງຕໍ່ໆໄປ.ຫົວຂໍ້ "ຕົວເມືອງທີ່ມີສະເໜ່" ເຮັດໃຫ້ຂັ້ນລະດັບການຮ່ວມມືລະຫວ່າງຈີນກັບອາຊຽນແຕ່ລະດັບຊາດລົງເລິກເຂົ້າສູ່ລະດັບລະຫວ່າງຕົວເມືອງ,ການຮ່ວມມືທັງສອງຝ່າຍຈະເຂົ້າສູ່ການເຮັດແທ້ທຳຈິງຍິ່ງຂຶ້ນກວ່າເກົ່າອີກ.



ງານມະຫາກຳກິລາຊີເກມຄັ້ງທີ 25 ຈະຈັດຂຶ້ນທີ່ນະຄອນຫຼວງວຽງຈັນ. ພາບນີ້ແມ່ນຮູບຈຳລອງຫໍສະໜາມກິລາ

第 25 届东南亚运动会即将在老挝万象举行。图为场馆模型　苏雯雯 摄



①



②

ພາບ1,2ແມ່ນບົດຟ້ອນລຳທຳເພງນັກສະແດງລາວສະແດງໄດ້ດຶງດູດສາຍຕາຂອງນັກທຸລະກິດເປັນຈຳນວນຫຼວງຫຼາຍ

图①②老挝演员们表演的优美歌舞吸引了众多客商的眼球　苏雯雯 摄

# ເປີດສຳນັກງານສະຖານກົງສຸນໃຫຍ່ ສ ປປ ລາວທີ່ໜານໜິງ




ວັນທີ 19 ຕຸລາປີ 2009.ສະຖານກົງສຸນໃຫຍ່ ສ ປປ ລາວທີ່ນານນິນໄດ້ເປີດສຳນັກງານຢ່າງເປັນທາງການທີ່ເຂດການຄ້າອາຊຽນ

2009 年 10 月 19 日，老挝驻南宁总领事馆在广西南宁市东盟商务区举行开馆仪式　新华社 图

## 老挝驻南宁总领事馆开馆

文 / 苏雯雯

2009 年 10 月 19 日上午，老挝驻南宁总领事馆在广西南宁东盟商务区正式开馆。老挝总理波松 · 布帕万、中共广西壮族自治区区委书记郭声琨等出席仪式，并为开馆剪彩。

ຕອນເຊົ້າວັນທີ 19 ເດືອນຕຸລາປີ 2009,ສະຖານກົງສຸນໃຫຍ່ ສປປ ລາວທີ່ໜານໜິງໄດ້ເປີດສຳນັກງານຢູ່ເຂດການຄ້າອາຊຽນທີ່ເມືອງນານນິງກວາງຊີຢ່າງເປັນທາງການ.ທ່ານບົວສອນ ບຸບຜາວັນ ນາຍົກລັດຖະມົນຕີລັດຖະບານ ສປປ ລາວ, ທ່ານ ໂກ ແຊງຄຸນ ເລຂາຄະນະພັກເຂດປົກຄອງຕົນເອງຊົນເຜົ່າຈວງແຫ່ງກວາງຊີ ສປ ຈີນໄດ້ເຂົ້າຮ່ວມພິທີເປີດສຳນັກງານ, ແລະ ໄດ້ຕັດແຖບຜ້າໃນພິທີເປີດສຳນັກງານ.

ທ່ານພົງສະຫວັດ ບຸບຜາລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດລາວໄດ້ກ່າວຄຳປາໄສເວົ້າວ່າ,ກວາງຊີ-ລາວເປັນເພື່ອນບ້ານໃກ້ຄຽງ,ຮີດຄອງປະເພດນີ້ຄ້າຍຄືກັນ,ຕັ້ງແຕ່ນານມາ,ຜູ້ນຳຂັ້ນສູງລາວກັບກວາງຊີໄດ້ດຳເນີນການຢ້ຽມຢາມເຊິ່ງກັນແລະກັນເລື້ອຍໆ,ນັກທຸລະກິດກວາງຊີທີ່ໄປປະເທດລາວດຳເນີນການລົງທຶນໃນຂົງເຂດຕ່າງໆນັບມື້ນັບຫຼາຍຂຶ້ນ,ນອກຈາກນັ້ນ,ກວາງຊີໃຫ້ການຊ່ວຍຫລາຍແກ່ລາວທາງດ້ານການຝຶກອົບຮົມບຸກຄະລາກອນ.ການສ້າງຕັ້ງສະຖານກົງສຸນໃຫຍ່ ສປປ ລາວທີ່ໜານໜິງຈະໄດ້ອຳນວຍຄວາມສະດວກສະບາຍ

ແກ່ນັກວິສາຫະກິດຂອງກວາງຊີ ແລະ ອົງເຂດໃກ້ຄຽງ,ຈະຊຸກຍູ້ການໄປມາຫາສູ່ກັນລະຫ່ວາງປະຊາຊົນຈີນ-ລາວທາງດ້ານການຄ້າ,ການລົງທຶນ,ການທ່ອງທຽວ .ໜານໜິງເຊິ່ງເປັນບ່ອນທີ່ຈັດງານວາງສະແດງສິນຄ້າຈີນ-ອາຊຽນ,ກໍ່ໄດ້ຈັດງານວາງສະແດງສິນຄ້າທຸກໆປີ,ຫຼັງຈາກເຂດການຄ້າເສລີຈີນ-ອາຊຽນໄດ້ສ້າງສຳເລັດແລ້ວຈະຊຸກຍູ້ມູນຄ່າການຄ້າ ແລະ ມູນຄ່າການລົງທຶນລະຫວ່າງຈີນກັບອາຊຽນເພີ່ມຂຶ້ນສູງ.

ທ່ານ ຫລີ ຈີນຈາວ ຮອງປະທານອຳນາດການປົກຄອງເຂດປົກຄອງຕົນເອງຂອງຊົນເຜົ່າກວາງຊີໄດ້ສະແດງວ່າ:ຄຽງຄູ່ກັບເຂດການຄ້າເສລີຈີນ-ອາຊຽນໃກ້ຈະສ້າງສຳເລັດ, ງານວາງສະແດງສິນຄ້າຈີນ-ອາຊຽນໄດ້ຈັດຂຶ້ນລຽນຕິດ 5 ປີຢູ່ໜານໜິງຢ່າງສຳເລັດຜົນ,ການເປີດກວ້າງແລະ ພັດທະນາເຂດເສດຖະກິດພາກເໜືອກວາງຊີໄດ້ຍົກຂຶ້ນເປັນຍຸດທະສາດແຫ່ງຊາດ,ກວາງຊີໄດ້ເປັນດິນແດນເໝາະສົມທີ່ດຸດດຶງນັກທຸລະກິດພາຍໃນ ແລະ ນອກມາລົງທຶນ ແລະ ສ້າງຕັ້ງກິດຈະການ,ການແລກປ່ຽນກັນ ແລະ ຮ່ວມມືກັນລະຫ່ວາງທັງສອງຝ່າຍໄດ້ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ,ການໄປມາຫາສູ່ກັນທາງດ້ານເສດຖະກິດການຄ້າໄດ້ນັບມື້ນັບຂະຫຍາຍຕົວຂຶ້ນ.ການສ້າງຕັ້ງກົງສຸນໃຫຍ່ ສປປ ລາວຢູ່ທີ່ໜານໜິງ,ແມ່ນການຢືນຢັນສາຍພົວພັນມິດຕະພາບໄມຕີຈິດລະຫ່ວາງຈີນ-ລາວອີກອັນໜຶ່ງ,ຈະກາຍເປັນສັນຍາຫຼັກໃໝ່ໃນປະຫວັດສາດແຫ່ງການພັດທະນາແລະການຮ່ວມມືຢ່າງຮອບດ້ານຈີນ-ລາວ.ຈະເປີດໜ້າໃໝ່ໃນການແລກປ່ຽນ ແລະ ການຮ່ວມມືລະຫວ່າງກວາງຊີ-ລາວ ແລະ ທ້ອງຖິ່ນລາວ,ຈະສ້າງເງື່ອນໄຂອັນສະດວກສະບາຍກ່ວາເກົ່າແກ່ການແລກປ່ຽນກັນແລະການຮ່ວມມືກັນລະຫ່ວາງທັງສອງຝ່າຍອີກດ້ວຍ.




苏雯雯 摄

# ສ ປປ ລາວຈັດເວທີປາໄສກ່ຽວກັບການລົງທຶນໃນໄລຍະ



**老挝在中国—东盟博览会期间举办投资论坛**

文 / 苏雯雯

作为今年的主题国，老挝不仅扩大了参展企业的规模，在今年的推介会上也做足功课，对选择推介的产业进行了更加充分的调研，精心挑选能够促进本国经济又能带来良好合作前景的产业到中国来推介。

# ງານເອກສະໂປຈີນ-ອາຊຽນ




ເວທີປາໄສທຸລະກິດການລົງທຶນລາວ-ຈີນ 老挝—中国商业投资论坛 苏雯雯 摄

ໃນຖານະເປັນປະເທດຫົວຂໍ້, ສປປລາວບໍ່ພຽງແຕ່ໄດ້ເພີ່ມຈຳນວນບໍລິສັດທີ່ມາເຂົ້າຮ່ວມການວາງສະແດງເທົ່ານັ້ນ,ຍັງໄດ້ເຮັດວຽກງານກະກຽມຢ່າງພຽງພໍໃນກອງປະຊຸມໂຄສະນາຂອງປີນີ້, ໂດຍໄດ້ດຳເນີນການສຳຫລວດຄົ້ນຄວ້າຢ່າງເຕັມສ່ວນກວ່າເກົ່າຕໍ່ຂະແໜງການຜະລິດທີ່ຈະຄັດເລືອກມາໂຄສະນາ, ເພື່ອເລືອກເອົາຂະແໜງການຜະລິດທີ່ສາມາດຊຸກຍູ້ໃຫ້ເສດຖະກິດຂອງປະເທດຕົນຂະຫຍາຍຕົວ ແລະ ມີອະນາຄົດອັນດີໃນການຮ່ວມມືນັ້ນມາໂຄສະນາຢູ່ປະເທດຈີນ.

ຕອນເຊົ້າວັນທີ 21 ຕຸລາ 2009,ທີ່ຫ້ອງປະຊຸມ 101 ສູນງານມະຫາກຳເອກສະໂປຈີນ-ອາຊຽນທີ່ບັນຈຸໄດ້ 400ຄົນນັ້ນບໍ່ມີບ່ອນນັ່ງຫວ່າງ,ໃນ "ເວທີປາໄສການຄ້າ ແລະການລົງທຶນລາວ-ຈີນ "ທີ່ຈັດໂດຍກະຊວງແຜນການ ແລະ ການລົງທຶນ ແລະກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສ ປປ ລາວ,ເຈົ້າໜ້າທີ່ລັດຖະບານລາວໄດ້ແນະນຳນະໂຍບາຍກ່ຽວກັບການລົງທຶນຂອງຕ່າງປະເທດ,ການຄ້າ ແລະ ສະພາບການທ່ອງທ່ຽວ, ແນະນຳສະພາບການຂອງເຂດພິເສດເສດຖະກິດສະຫວັນນະເຂດ.ໃນຖານະທີ່ເປັນປະເທດຢູ່ໃນໄລຍະພັດທະນາ,ລັດຖະບານລາວໄດ້ຖືເອົາການດຶງດູດການລົງທຶນເປັນຈຸດປະສົງຕົ້ນຕໍໃນການເຂົ້າຮ່ວມງານໃນຄັ້ງນີ້,ເພື່ອຈັດກອງປະຊຸມໂຄສະນາໃຫ້ໄດ້ດີ, ລັດຖະບານລາວຍັງໄດ້ກະກຽມນະໂຍບາຍ ແລະ ກົດໝາຍກ່ຽວກັບການລົງທຶນທີ່ກ່ຽວຂ້ອງທີ່ເປັນພາສາຈີນໂດຍສະເພາະໃຫ້ບັນດາຕົວແທນທີ່ມາຮ່ວມປະຊຸມ.

ຕໍ່ມາ,ກໍ່ມີການພົບປະເຈລະຈາດ້ານການຄ້າຈີນ-ລາວ, ພວກນັກທຸລະກິດທີ່ແຫ່ກັນມາໄດ້ເຮັດໃຫ້ເຈົ້າໜ້າທີ່ລັດຖະບານລາວຮັບຕ້ອນບໍ່ທັນ,ຄວາມກະຕືລືລົ້ນຂອງນັກລົງທຶນປະເທດຈີນໄດ້ເຮັດໃຫ້ປະເທດລາວຍິ່ງມີກຳລັງໃຈຫລາຍໃນການເຂົ້າຮ່ວມ

ງານເອກສະໂປຈີນ-ອາຊຽນ.ໃນກອງປະຊຸມເຈລະຈາ,ເຈົ້າໜ້າທີ່ລັດຖະບານແລະ ນັກທຸລະກິດຂອງຈີນ ແລະ ລາວທັງສອງຝ່າຍໄດ້ແລກປ່ຽນຄວາມເຫັນຢ່າງກວ້າງຂວາງກ່ຽວກັບບັນຫາຄືການລົງທຶນດ້ານການຄ້າ,ທັດສະນະການສຶກສາທາງການຄ້າ ແລະ ການຮ່ວມມືລະຫວ່າງບໍລິສັດເປັນຕົ້ນ,ຄະນະຜູ້ແທນການຄ້າແຫ່ງ ສປປ ລາວໄດ້ຕອບຄຳຖາມຕ່າງໆທີ່ບໍລິສັດຈີນໄດ້ຍົກຂຶ້ນ.ນັກທຸລະກິດຈີນລາວທັງສອງຝ່າຍຫວັງວ່າຈະເພີ່ມທະວີການຮ່ວມມືດ້ານການຄ້າຂອງສອງຝ່າຍ,ເພີ່ມການໄປມາຫາສູ່ກັນດ້ານການຄ້າ ແລະ ການລົງທຶນ,ຕ່າງຝ່າຍຕ່າງມີຜົນປະໂຫຍດພ້ອມກັນ,ສະແຫວງຫາການພັດທະນາ.ທ່ານລຽງສະວັນນາທີ່ປຶກສາສະພາການຄ້າແຫ່ງຊາດລາວທີ່ໄດ້ເຂົ້າຮ່ວມງານເອກສະໂປຈີນ-ອາຊຽນຕິດຕໍ່ກັນ 6 ຄັ້ງເວົ້າວ່າ,ຍອດຈຳນວນລົງທຶນຂອງບໍລິສັດຈີນຢູ່ ສປປ ລາວໃນແຕ່ລະປີໄດ້ເພີ່ມຂຶ້ນ



ຫໍວາງສະແດງລາວທີ່ມີສີສັນເອກະລາດສະເພາະ
极具特色的老挝展馆　苏雯雯 摄



ການສົນທະນາການຄ້າລະຫວ່າງລາວ-ຈີນ
中老商业对话　李　涛 摄

50%,ມູນຄ່າການຄ້າສອງຝ່າຍຂອງຈີນ ແລະ ລາວໃນປີ 2008 ບັນລຸໄດ້ 416 ລ້ານໂດລາສະຫະລັດ,ທຽບໃສ່ປີທີ່ແລ້ວເພີ່ມຂຶ້ນ 57.5%.ປະເທດຈີນໄດ້ກາຍເປັນໜຶ່ງໃນຈຳນວນຜູ້ລົງທຶນຕ່າງປະເທດທີ່ສຳຄັນໃນ ສ ປປ ລາວ,ຂະແໜງການລົງທຶນລວມທັງການຜະລິດປຸງແຕ່ງ,ການກະເສດ,ການກໍ່ສ້າງ,ການຄ້າ,ການໂຮງແຮມຮ້ານອາຫານ,ການຂຸດຄົ້ນບໍ່ແຮ່ ແລະ ການເຮັດເຟີນີເຈີໄມ້ເປັນຕົ້ນ.ເພິ່ນໄດ້ກ່າວວ່າ,ສປປ ລາວມີຊັບພະຍາກອນທຳມະຊາດອັນອຸດົມສົມບູນ ແລະ ນະໂຍບາຍລົງທຶນອັນເອື້ອອຳນວຍ,ເປັນບ່ອນທີ່ລໍຄອຍນັກທຸລະກິດຈີນອັນໄພສານໄປບຸກເບີກພັດທະນາ,ຍິນດີຕ້ອນຮັບບໍລິສັດຈີນໄປລົງທຶນກໍ່ສ້າງເສັ້ນທາງ,ລົງທຶນໃນຂະແໜງການບໍລິການ ແລະ ການທ່ອງທ່ຽວກໍ່ຄືຂະແໜງການຜະລິດໄຮເທັກເປັນຕົ້ນ,ຊຸກຍູ້ເສດຖະກິດລາວໃຫ້ມີການຂະຫຍາຍຕົວ.










ພາບ1,2,3,ສິນຄ້າລາວໄດ້ຮັບຄວາມນິຍົມຊົມຊອບຈາກແຂກ
图①②③ 老挝商品备受青睐 苏雯雯 摄

ສປປ ລາວໄດ້ແຕ່ງຄະນະຜູ້ແທນລັດຖະບານໃນລະດັບສູງມາເຂົ້າຮ່ວມງານເອກສະໂປຈີນ-ອາຊຽນຕິດຕໍ່ກັນ 6 ປີ,ມີນັກທຸລະກິດລາວເກືອບ 900 ກວ່າທ່ານເຂົ້າຮ່ວມການວາງສະແດງ ແລະ ເຂົ້າຮ່ວມກອງປະຊຸມ,ໂດຍຜ່ານເວທີງານເອກສະໂປນີ້ແມ່ນໄດ້ບຸກເບີກຕະຫລາດສາກົນໃຫ້ກວ້າງຂວາງຕື່ມອີກ.ທ່ານ ບົວສອນ ບຸບຜາວັນ ນາຍົກລັດຖະມົນຕີແຫ່ງ ສປປ ລາວໄດ້ນຳຄະນະຜູ້ແທນມາເຂົ້າຮ່ວມພິທີເປີດງານເອກສະໂປຈີນ-ອາຊຽນຄັ້ງທີ 6,ແລະ ການເຄື່ອນໄຫວທີ່ກ່ຽວຂ້ອງຂອງປະເທດຫົວຂໍ້.ລັດຖະບານລາວມີຄວາມເອົາໃຈໃສ່ໃນລະດັບສູງຕໍ່ງານເອກສະໂປຄັ້ງນີ້,ໂດຍໄດ້ສ້າງຕັ້ງຄະນະກຳມະການກະກຽມງານເອກສະໂປຈີນ-ອາຊຽນຄັ້ງທີ 6 ທີ່ມີຮອງນາຍົກລັດຖະບານເປັນປະທານ ແລະ ປະກອບດ້ວຍ 7 ກະຊວງຄືກະຊວງການເງິນ,ກະຊວງການຕ່າງປະເທດ,ກະຊວງອຸດສາຫະກຳ ແລະ ການຄ້າ,ກະຊວງແຜນການ ແລະ ການລົງທຶນ,ກະຊວງໂຍທາ ແລະ ຂົນສົ່ງ ແລະອົງການທ່ອງທ່ຽວແຫ່ງຊາດ,ເພື່ອປະຕິບັດພາລະບົດບາດຂອງຕົນ,ປະສານງານກັນຢ່າງໃກ້ຊິດ,ພ້ອມກັນເຮັດວຽກທຸກປະການຂອງ "ປະເທດຫົວຂໍ້" ໃຫ້ດີ.




# ກອງປະຊຸມລັດຖະມົນຕີຖະແຫລງຂ່າວອາຊຽນ ກັບ ຈີນ ຍີ່ປຸ່ນ ແລະ ສ.ເກົາຫລີຄັ້ງທຳອິດໄດ້ຈັດຂຶ້ນຢູ່ ສ ປປ ລາວ

## 首届东盟和中日韩新闻部长会议在老挝举行

首届东盟和中日韩（10＋3）新闻部长会议于 2009 年 11 月 6 日在老挝首都万象举行。来自东盟 10 国和中国、日本、韩国主管新闻事务的部长级官员出席会议，会议就进一步加强东盟国家与中日韩三国在信息和传媒领域的合作和交流进行了讨论。

ກອງປະຊຸມລັດຖະມົນຕີຖະແຫລງຂ່າວອາຊຽນກັບຈີນ ຍີ່ປຸ່ນ ແລະ ສ.ເກົາຫລີຄັ້ງທຳອິດໄດ້ຈັດຂຶ້ນຢູ່ ສປປລາວ(10+3)ໄດ້ຈັດຂຶ້ນໃນວັນທີ 6 ພະຈິກ 2009 ທີ່ນະຄອນຫລວງວຽງຈັນແຫ່ງ ສປປລາວ.ເຈົ້າໜ້າທີ່ຂັ້ນລັດຖະມົນຕີທີ່ຮັບຜິດຊອບວຽກງານຖະແຫລງຂ່າວທີ່ມາຈາກ 10 ປະເທດອາຊຽນ ແລະ ຈີນ, ຍີ່ປຸ່ນ ແລະ ສ.ເກົາຫລີໄດ້ເຂົ້າຮ່ວມກອງປະຊຸມ, ດຳເນີນການປຶກສາຕໍ່ການເພີ່ມທະວີການຮ່ວມມື ແລະ ການແລກປ່ຽນໃນຂົງເຂດຂໍ້ມູນຂ່າວສານ ແລະ ສື່ມວນຊົນລະຫວ່າງບັນດາປະເທດອາຊຽນກັບຈີນ,ຍີ່ປຸ່ນ ແລະ ສ.ເກົາຫລີທັງສາມປະເທດໃຫ້ຕື່ມອີກກ້າວໜຶ່ງ.

ທ່ານໝູນແກ້ວ ອໍລະບູນ ລັດຖະມົນຕີວ່າການກະຊວງຖະແຫລງຂ່າວ ແລະ ວັດທະນະທຳແຫ່ງສປປລາວ,ປະທານກອງປະຊຸມຄັ້ງນີ້ໄດ້ກ່າວຄຳປາໄສ,ເຊິ່ງໄດເວົ້າວ່າ,ໃນຊຸມປີໃກ້ໆນີ້,ການຮ່ວມມືໃນຂົງເຂດຂໍ້ມູນຂ່າວສານ ແລະ ສື່ມວນຊົນລະຫວ່າງອາຊຽນກັບຈີນ,ຍີ່ປຸ່ນ ແລະ ສ.ເກົາຫລີໄດ້ຮັບຜົນສຳເລັດເປັນຢ່າງດີ,ໂດຍໄດ້ເພີ່ມທະວີໃຫ້ເນື້ອໃນການຮ່ວມມື10+3ໃຫ້ອຸດົມສົມບູນຂຶ້ນກວ່າເກົ່າ,ອັນໄດ້ນຳເອົາຜົນປະໂຫຍດມາໃຫ້ການພັດທະນາຂອງປະເທດໃຜລາວ.ເພິ່ນເວົ້າວ່າ,ການທີ່ພັດທະນາການຮ່ວມມືດ້ານຂໍ້ມູນຂ່າວສານ ແລະ ສື່ມວນຊົນຂອງ10+3ແມ່ນມີຄວາມສຳຄັນທີ່ສຸດສຳຫລັບອາຊຽນສູ້ຊົນໃຫ້ບັນລຸເປົ້າໝາຍຂອງການພັດທະນາທີ່ກຳນົດໄວ້.ບັນດາປະເທດອາຊຽນຍິນດີທີ່ຈະສືບຕໍ່ເພີ່ມທະວີການຮ່ວມມື ແລະ ແລກປ່ຽນດ້ານຂໍ້ມູນຂ່າວສານ ແລະ ສື່ມວນຊົນກັບຈີນ,ຍີ່ປຸ່ນ ແລະ ສ.ເກົາຫລີ,ເພີ່ມເນື້ອໃນການຮ່ວມມືໃຫ້ສົມບູນຂຶ້ນ,ເປີດກວ້າງຂົງເຂດການຮ່ວມມື,ເພື່ອປະ

ກອບສ່ວນເຂົ້າໃນພາລະກິດສັນຕິພາບ,ສະຖຽນລະພາບການພັດທະນາແລະຄວາມວັດທະນາຂອງພາກພື້ນຂອງຕົນ.

ທ່ານ ຫວາງ ເສິນ ຫົວໜ້າຫ້ອງການຖະແຫລງຂ່າວຄະນະລັດຖະບານ,ຫົວໜ້າຄະນະຜູ້ແທນປະເທດຈີນໄດ້ຊີ້ແຈງໃນບົດປາໄສວ່າ,ກອງປະຊຸມລັດຖະມົນຕີວ່າການກະຊວງຖະແຫລງຂ່າວຂອງບັນດາປະເທດອາຊຽນກັບຈີນ,ຍີ່ປຸ່ນ ແລະ ສ.ເກົາຫລີທີ່ເປັນໜຶ່ງໃນຈຳນວນໝາກຜົນອັນສຳຄັນຂອງກອງປະຊຸມຜູ້ນຳ 10+3 ອາຊຽນກັບຈີນ,ຍີ່ປຸ່ນ ແລະ ສ.ເກົາຫລີໄດ້ເພີ່ມເນື້ອໃນຂອບການຮ່ວມມືຂອງ10+3,ແມ່ນມີຄວາມໝາຍສຳຄັນຕໍ່ການເພີ່ມຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນ,ຊຸກຍູ້ໃຫ້ຫລາຍຝ່າຍມີການປະສານງານກັນ.ເພິ່ນກ່າວວ່າ,ໃນຊຸມປີໃກ້ໆນີ້,ສື່ມວນຊົນປະເທດຈີນໄດ້ເພີ່ມທະວີການລາຍງານຂ່າວຕໍ່ກິດຈະການອາຊຽນ,ສື່ມວນຊົນຂອງອາຊຽນກໍ່ໄດ້ເພີ່ມການລາຍງານຂ່າວທີ່ກ່ຽວຂ້ອງກັບປະເທດຈີນ,ອັນໄດ້ເພີ່ມຄວາມຮັບຮູ້ ແລະ ອາລົມຈິດລະຫວ່າງປະຊາຊົນອາຊຽນ ແລະ ຈີນ. ໂດຍສະເພາະນັບແຕ່ "ກອງປະຊຸມລັດຖະມົນຕີວ່າການກະຊວງຖະແຫລງຂ່າວຈີນ-ອາຊຽນ" ເມື່ອ 2008 ມານີ້,ການແລກປ່ຽນ ແລະ ການຮ່ວມມືໃນຂົງເຂດຂໍ້ມູນຂ່າວສານ ແລະ ສື່ມວນຊົນຂອງທັງສອງຝ່າຍໄດ້ຮັບການຂະຫຍາຍຕົວຢ່າງໃຫຍ່ຫລວງ.

ເພື່ອຊຸກຍູ້ການແລກປ່ຽນ ແລະ ການຮ່ວມມືທາງຖະແຫລງຂ່າວ ແລະ ສື່ມວນຊົນລະຫວ່າງຈີນກັບບັນດາປະເທດອາຊຽນໃຫ້ຕື່ມອີກກ້າວໜຶ່ງ,ທ່ານ ຫວາງ ເສິນ ຕາງໜ້າຝ່າຍຈີນໄດ້ມີຂໍ້ສະເໜີ 3 ປະການດັ່ງລຸ່ມນີ້: 1.ສົ່ງເສີມຢ່າງເຕັມສ່ວນເຊິ່ງບົດບາດຊຸກຍູ້ຂອງພາກສ່ວນລັດຖະບານໃນການແລກປ່ຽນ ແລະ ການຮ່ວມມືທາງຖະແຫລວງຂ່າວ.ພາກສ່ວນລັດຖະບານຄວນສົ່ງເສີມບົດບາດຊັກນຳ ແລະ ຊຸກຍູ້ການແລກປ່ຽນຮ່ວມມືທາງສື່ມວນຊົນ,ພະຍາຍາມສ້າງ ແລະ ສະໜອງກາລະໂອກາດການແລກປ່ຽນຮ່ວມມືລະຫວ່າງສື່ມວນຊົນ,ເພີ່ມທະວີຄວາມເຂົ້າໃຈ ແລະ ຄວາມໄວ້ເນື້ອເຊື່ອໃຈລະຫວ່າງສື່ມວນຊົນເຊິ່ງກັນ ແລະ ກັນ,ຊຸກຍູ້ໃຫ້ພາກພື້ນນີ້ມີບັນຍາກາດທາງສຽງທີ່ເປັນມິດກັນເປັນຢ່າງດີ.2.ຍົກສູງລະດັບການແລກປ່ຽນດ້ານຖະແຫລງຂ່າວ ແລະ ການຮ່ວມມືຂອງສື່ມວນຊົນ.ເປີດກວ້າງຂົງເຂດລາຍງານຂ່າວທີ່ມີຕໍ່ແຕ່ລະປະເທດອື່ນຂອງສື່ມວນຊົນຕ່າງໆ,ສ້າງເນື້ອໃນລາຍງານຂ່າວໃຫ້ໜັກແໜ້ນ,ຍຶດໝັ້ນຫລັກການມີຄວາມເປັນຈິງ,ເປັນສິ່ງນອກຕົວ ແລະ ຮອບດ້ານ,ຍົກສູງຄຸນນະພາບ ແລະ ປະລິມານຂອງການລາຍງານຂ່າວຕໍ່ກັນ.3.ສົ່ງສຽງອັນພ້ອມກັນຂອງພວກເຮົາດ້ວຍທ່າທີອັນຕັ້ງໜ້າກວ່າເກົ່າໃນທາງສຽງສາກົນ,ຊຸກຍູ້ສະຖານະການທາງສຽງສາກົນຂະຫຍາຍຕົວໄປຕາມທິດທາງພາວະວິໄສ ແລະ ສົມເຫດສົມຜົນ.

ທ່ານຫວາງ ເສິນກ່າວວ່າ,ປະເທດຈີນຍິນດີທີ່ຈະສືບຕໍ່ເປີດກວ້າງການຮ່ວມມືໃນຫລາຍດ້ານຄືການຖະແຫລງຂ່າວ ແລະ ສື່ມວນຊົນເປັນຕົ້ນກັບບັນດາປະເທດອາຊຽນ ແລະ ຍີ່ປຸ່ນ,ສ.ເກົາຫລີ,ຄົ້ນຫາກົນໄກ ແລະ ຊ່ອງທາງຂອງການຮ່ວມມືອັນໃໝ່, ພ້ອມກັນກັບບັນດາປະເທດອາຊຽນ ແລະ ຍີ່ປຸ່ນ,ສ.ເກົາຫລີອອກແຮງປົກປັກຮັກສາສັນຕິພາບຂອງໂລກ,ສົ່ງເສີມການພັດທະນາຮ່ວມກັນ,ຊຸກຍູ້ການສ້າງສາໂລກທີ່ມີຄວາມປອງດອງກັນ.ຂໍ້ສະເໜີຂອງທ່ານຫວາງເສິນສະເໜີໃຫ້ເພີ່ມທະວີການແລກປ່ຽນຮ່ວມມືດ້ານຖະແຫລງຂ່າວລະຫວ່າງຈີນກັບອາຊຽນໄດ້ຮັບການຍິນດີຕ້ອນຮັບ ແລະ ຍ້ອງຍໍຊົມເຊີຍຈາກບັນດາຜູ້ແທນທີ່ເຂົ້າຮ່ວມການປະຊຸມ.

ໃນກອງປະຊຸມ,ຜູ້ແທນຮ່ວມປະຊຸມໄດ້ມີການປຶກສາຫາລືກ່ຽວກັບການສືບຕໍ່ເພີ່ມທະວີການຮ່ວມມືໃນຂົງເຂດຂໍ້ມູນຂ່າວສານ,ການກະຈາຍສຽງດີຈີຕອນ ແລະ ການແລກປ່ຽນຮ່ວມມືສື່ມວນຊົນເປັນຕົ້ນທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດ.ເຊິ່ງບັນດາຜູ້ແທນເຫັນວ່າ,ຜ່ານການປະຊຸມໃນຄັ້ງນີ້,ລວງກວ້າງ ແລະ ລວງເລິກຂອງການຮ່ວມມືດ້ານຂໍ້ມູນຂ່າວສານ ແລະ ສື່ມວນຊົນຂອງ 10+3ຈະໄດ້ຮັບການເປີດກວ້າງຕື່ມອີກ,ເຮັດໃຫ້ການຮ່ວມມືນີ້ໄດ້ຍ່າງເຂົ້າສູ່ລະດັບໃໝ່, ຊຸກຍູ້ໃຫ້ມີຄວາມເຂົ້າໃຈ ແລະ ແລກປ່ຽນເຊິ່ງກັນ ແລະ ກັນລະຫວ່າງບັນດາປະເທດອາຊຽນກັບຈີນ, ຍີ່ປຸ່ນ,ສ.ເກົາຫລີ.

ທີ່ປະຊຸມໄດ້ຕົກລົງກອງປະຊຸມລັດຖະມົນຕີຖະແຫລງຂ່າວອາຊຽນ ແລະ ຈີນ,ຍີ່ປຸ່ນ,ສ.ເກົາຫລີຄັ້ງທີສອງຈະຈັດຂຶ້ນໃນປີ 2011ທີ່ປະເທດມາເລເຊຍ.



ທ່ານ ສົມສະຫວາດ ເລັ່ງສະວັດ ຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວໄດ້ພົບປະທ່ານຫວາງເຊີນຫົວໜ້າຫ້ອງການຖະແຫຼງຂ່າວຄະນະລັດຖະບານ ສປ ຈີນທີ່ມາຢ້ຽມຢາມຢູ່ທີ່ວຽງຈັນ
老挝政府常务副总理宋萨瓦 · 凌萨瓦在万象会见到访的中国国务院新闻办主任王晨

# ສ ປປ ລາວຫວັງວ່າເພີ່ມທະວີການຮ່ວມມືກັບ ສ ປ ຈີນ ໃນຂົງເຂດຖະແຫລງຂ່າວ ແລະ ສື່ມວນຊົນ

## 老挝希望加强与中国在新闻传媒领域合作

老挝政府常务副总理宋萨瓦 · 凌萨瓦于 2009 年 11 月 7 日在万象会见到访的中国国务院新闻办主任王晨时说，中方对老挝成功举办首届东盟和中日韩（１０＋３）新闻部长会议作出了积极贡献，老挝愿加强与中国在新闻传媒领域的交流与合作。

ທ່ານສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານແຫ່ງ ສປປລາວໃນເວລາໃຫ້ກຽດພົບປະກັບທ່ານຫວາງ ເສີນ ຫົວໜ້າຫ້ອງການຖະແຫລງຂ່າວຄະນະ

ລັດຖະບານສປຈີນທີ່ມາຢ້ຽມຢາມໃນວັນທີ 7 ພະຈິກທີ່ນະຄອນຫລວງວຽງຈັນວ່າ,ຝ່າຍຈີນໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນກອງປະຊຸມລັດຖະມົນຕີຖະແຫລງຂ່າວອາຊຽນກັບຈີນ, ຍີ່ປຸ່ນ,ສ.ເກົາຫລີ(10+3)ຄັ້ງທຳອິດຢ່າງໄດ້ຮັບຜົນສຳເລັດເຊິ່ງ ສ ປປ ລາວເປັນຜູ້ຈັດຂຶ້ນ,ສປປລາວ ຍິນດີທີ່ຈະເພີ່ມທະວີການແລກປ່ຽນ ແລະ ການຮ່ວມມືໃນຂົງເຂດຖະແຫລງຂ່າວ ແລະ ສື່ມວນຊົນກັບ ສປ ຈີນ.

ທ່ານຮອງນາຍົກສົມສະຫວາດກ່າວວ່າ,ສື່ມວນຊົນລາວ ແລະ ຈີນມີພາລະໜ້າທີ່ອັນສຳຄັນໃນການເຮັດໃຫ້ປະຊາຊົນທັງສອງປະເທດເຂົ້າໃຈຢ່າງຖືກຕ້ອງຕໍ່ຄວາມໝາຍຂອງສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານລະຫວ່າງລາວ-ຈີນ,ຫວັງວ່າທັງສອງຝ່າຍຈະເພີ່ມທະວີການຮ່ວມມືໃນດ້ານຖະແຫລງຂ່າວ,ການພິມຈຳໜ່າຍ,ການແລກປ່ຽນທາງສື່ມວນຊົນ ແລະ ການອົບຮົມພະນັກງານທີ່ປະກອບອາຊີບຖະແຫລງຂ່າວເປັນຕົ້ນ.

ທ່ານຫວາງ ເສີນໄດ້ຊົມເຊີຍສປປລາວຈັດກອງປະຊຸມລັດຖະມົນຕີຖະແຫລງຂ່າວ 10+3 ຄັ້ງທຳອິດຢ່າງມີໄຊ.ເພິ່ນໄດ້ກ່າວວ່າ,ກອງປະຊຸມຄັ້ງນີ້ໄດ້ບັນລຸລະດັບຄາດໝາຍທີ່ວາງໄວ້,ເຮັດໃຫ້ການຮ່ວມມືຖະແຫລງຂ່າວ 10+3 ມີການເລີ່ມຕົ້ນອັນດີ,ຝ່າຍຈີນຫວັງວ່າຈະສົ່ງເສີມບົດບາດອັນຕັ້ງໜ້າໃນການຮ່ວມມືດ້ານຖະແຫລງຂ່າວ 10+3.

ທ່ານຫວາງ ເສີນກ່າວວ່າ, ການຮ່ວມມືຂອງຈີນ-ລາວທັງສອງປະເທດໃນທຸກຂົງເຂດມີຄວາມໃກ້ຊິດສະໜິດແໜ້ນຂຶ້ນ,ຄະນະຜູ້ແທນພວກເຮົາໄດ້ມີຄວາມຮູ້ສຶກຢ່າງເລິກເຊິ່ງກັບຈິດໃຈມິດຕະພາບຂອງປະຊາຊົນລາວທີ່ມີຕໍ່ປະເທດຈີນ ແລະ ປະຊາຊົນຈີນ. ຝ່າຍຈີນຍິນດີທີ່ຈະສືບຕໍ່ເພີ່ມທະວີການແລກປ່ຽນ ແລະ ການຮ່ວມມືໃນຂົງເຂດຖະແຫລງຂ່າວ,ການພິມຈຳໜ່າຍກັບສປປລາວ, ແລະຊຸກຍູ້ການຮ່ວມມືດັ່ງກ່າວໄປສູ່ລະດັບໃໝ່.

ໃນມື້ດຽວກັນ,ທ່ານຫວາງ ເສີນ ຍັງໄດ້ພົບປະກັບທ່ານໝູນແກ້ວ ອໍລະບູນ ລັດຖະມົນຕີກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ແຫ່ງ ສປປ ລາວ.ທ່ານ ຫວາງ ເສີນກ່າວວ່າ,ກອງປະຊຸມລັດຖະມົນຕີຖະແຫລງຂ່າວ 10+3 ຄັ້ງນີ້ ໄດ້ເພີ່ມທະວີການຮ່ວມມືກັນຂອງພາກສ່ວນຖະແຫລງຂ່າວຂອງແຕ່ລະປະເທດ, ໂດຍໄດ້ມີການຈັດວາງຕໍ່ການສືບຕໍ່ເພີ່ມຄວາມເຂົ້າໃຈ ແລະ ການຮ່ວມມືເຊິ່ງກັນ ແລະ ກັນຕື່ມອີກ.ຝ່າຍຈີນຍິນດີທີ່ຈະສືບຕໍ່ເພີ່ມທະວີການຮ່ວມມືກັບກະຊວງຖະແຫລງຂ່າວ ແລະ ວັດທະນະທຳກໍ່ຄືສື່ມວນຊົນຂອງ ສປປລາວ, ພ້ອມກັນສ້າງສະພາບການໃໝ່ຂອງການແລກປ່ຽນດ້ານຖະແຫລງຂ່າວ ແລະ ວັດທະນະທຳລະຫວ່າງຈີນ-ລາວ.

ທ່ານໝູນແກ້ວ ອໍລະບູນກ່າວວ່າ,ການຮ່ວມມືມິດຕະພາບລາວ-ຈີນໄດ້ກ້າວເຂົ້າສູ່ໄລຍະໃໝ່,ພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານທັງສອງປະເທດຄວນສົ່ງເສີມບົດບາດອັນຕັ້ງໜ້າ, ເພີ່ມເນື້ອໃນການຮ່ວມມືໃຫ້ໜາແໜ້ນ,ການທີ່ສືບຕໍ່ເພີ່ມທະວີການຮ່ວມມືດ້ານຖະແຫລງຂ່າວລະຫວ່າງຈີນ-ລາວຈະມີຜົນດີໃຫ້ແກ່ການຊຸກຍູ້ສາຍພົວພັນການຮ່ວມມືມິດຕະພາບທີ່ມີມູນເຊື້ອຂອງສອງປະເທດໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

# ກະແສແຫ່ງການສຶກສາຢູ່ຕ່າງປະເທດເປັນເວລາ 60 ປີ



ທ່ານ ຮູ ຈິນທາວ ປະທານປະເທດຈີນຢ້ຽມຢາມຖາມຂ່າວນັກສຶກສາຈີນທີ່ຮຽນຢູ່ມະຫາວິທະຍາໄລຮາວານາ.

中国国家主席胡锦涛看望哈瓦那大学中国留学生　新华社 图

## 留学潮涌六十年

在新中国 60 年的历史上，有这样一个特殊的群体，他们以“留学”的形式一批批跨出国门，勤奋攻读于异域，孜孜不倦地汲取先进的知识与理念。60 年光阴荏苒，一代代留学生学成归来，将理想与抱负融入国家发展与民族振兴，在中国现代化进程中，做出了特殊的贡献。

ໃນປະຫວັດສາດ 60 ປີຂອງປະເທດຈີນໃໝ່ມີໝູ່ຄະນະພິເສດຄະນະໜຶ່ງ, ພວກຂະເຈົ້າຍ່າງອອກໄປຕ່າງປະເທດດ້ວຍຮູບການ "ສຶກສາຢູ່ຕ່າງປະເທດ" ເປັນງວດງວດໜຶ່ງ, ໝັ່ນພຽນຮໍ່າຮຽນຢູ່ຕ່າງແດນ, ດູດເອົາຄວາມຮູ້ອັນໃໝ່ສົດ ແລະຈິດສໍານຶກທີ່ກ້າວໜ້າຢ່າງບໍ່ຮູ້ອິດບໍ່ຮູ້ເມື່ອຍ. ກະພິບຕາ 60 ປີກໍຜ່ານພົ້ນໄປ, ນັກສຶກສາແບກຫາບໜ້າທີ່ໜັກໜາກັບຄືນປະເທດເປັນຊຸ່ນຊຸ່ນໜຶ່ງ, ເອົາອຸດົມຄະຕິແລະຄວາມມຸ້ງມາດປາຖະໜາເຊື່ອມເຂົ້າສູ່ໃນການພັດທະນາແຫ່ງຊາດ ແລະຟື້ນຟູຊົນຊາດຊົນເຜົ່າໃຫ້ຈະເລີນ, ໄດ້ທໍາການອຸທິດທາງປະຫວັດສາດທີ່ພິເສດເຂົ້າໃນຂະບວນການພັດທະນາແບບທັນສະໄໝຂອງຈີນ.

### "ຄວາມຫວັງຝາກໄວ້ນໍາພວກເຈົ້າ"

ໃນປີ1948, ກ່ອນສົງຄາມປົດປ່ອຍກໍາລັງເຂົ້າສູ່ຄວາມເດືອດຮ້ອນ, ການປະຕິວັດຈີນໄປສູ່ໄຊຊະນະນັ້ນ, ຜູ້ນໍາຂອງພັກຄອມມູນິດຈີນໄດ້ເລີ່ມຕົ້ນວາງແຜນຜັງຂອງສາທາລະນະລັດ. ທຸກສິ່ງທຸກຢ່າງລໍຖ້າຈະເລີນຂຶ້ນ, ຈະຕ້ອງສ້າງສາປະເທດອັນໃໝ່ປະ

ເທດໜຶ່ງ,ຕ້ອງການບຸກຄະລາກອນຄຸ້ມຄອງບໍລິຫານ ແລະ ນັກຊ່ຽວຊານເຕັກນິກເປັນຈຳນວນຫລວງຫຼາຍ,ສູນກາງພັກໄດ້ຕົກລົງຄັດເລືອກເອົາພະນັກງານລຸ້ນໜຸ່ມທີ່ມີຄວາມສາມາດດີເດັ່ນ,ການເມືອງໄວ້ໃຈໄດ້ໄປໂຊວຽດໄດ້ຮັບການສຶກສາຊັ້ນສູງ,ບຳລຸງກໍ່ສ້າງເຂົາເຈົ້າກາຍເປັນກຳລັງແກ່ນສານ ແລະ ບຸກຄົນນຳໜ້າໃນຂົງເຂດຕ່າງໆຂອງປະເທດຈີນໃໝ່.

ຕໍ່ມາ,ວຽກງານເລືອກເອົານັກສຶກສາໄປຮຽນຢູ່ຕ່າງປະເທດໄດ້ເຂົ້າແຜນແມ່ບົດ 10 ປີແຫ່ງການພັດທະນາວິທະຍາສາດແລະການສຶກສາຂອງຈີນ.ສູນກາງຈີນສະເພາະຕັ້ງຄະນະນຳພານັກສຶກສາ,ຈຳນວນເລືອກເອົານັກສຶກສາ ແລະ ວິຊາແມ່ນທ່ານນາຍົກລັດຖະມົນຕີໂຈວເອິນໄລເປັນຜູ້ກວດອະນຸມາດເອງ.ແຕ່ຊຸມປີ 50 ເຖິງຊຸມປີ 60ສະຕະວັດທີ່ຜ່ານມາຈີນໄດ້ແຕ່ງຕັ້ງນັກສຶກສາໄປຮຽນຢູ່ໂຊວຽດເປັນຈຳນວນ 10 ພັນກວ່າຄົນ,ໄປຮຽນຢູ່ປະເທດສັງຄົມນິຍົມເອີລົບຕາເວັນອອກ 1000 ກວ່າຄົນ.ຫລັງຈາກປີ1956,ຈີນໄດ້ຕົກລົງແຕ່ງຕັ້ງສົ່ງນັກສຶກສາອີກໄປຮຽນຢູ່ປະເທດຕາເວັນຕົກທີ່ໄດ້ສ້າງສາຍພົວພັນການທູດກັບຈີນແລະປະເທດອ້ອມຂ້າງ.

ມີຊາວໜຸ່ມ 21 ຄົນທີ່ຖືກເລືອກອອກໂດຍຜ່ານການຄັດເລືອກຢ່າງເຄັ່ງຄັດນັ້ນໄດ້ຂີ່ລົດໄຟເດີນທາງໄປໂຊວຽດ,ພວກເຂົາເຈົ້າເປັນນັກສຶກສາທີ່ສົ່ງໄປຮຽນຢູ່ຕ່າງປະເທດງວດທີ 1,ເຖິງວ່າຈຳນວນຄົນບໍ່ຫຼາຍປານໃດ,ແຕ່ມັນກໍເໝືອນດັ່ງດອກກະແສຟອງທີ່ກໍ່ຂຶ້ນໃນທະເລ,ຕໍ່ນີ້ໄປໜ້າ,ນັກສຶກສາຈີນໄປແຫ່ງຕ່າງໃນທົ່ວໂລກກໍຄືກະແສຟອງໃຫຍ່ຄື່ນທະເລກະທົບຝັ່ງ,ໄດ້ບັນເລງບົດດົນຕີປະສານສຽງທີ່ດັງກ້ອງອະລິຍະທຳໂລກເຊິ່ງປະເທດຈີນດູດເອົາທາດບຳລຸງວັດທະນະທຳທີ່ກ້າວໜ້າ,ບຳລຸງກໍ່ສ້າງບຸກຄະລາກອນທີ່ມີຄຸນທາດສູງຈາກໂລກເພື່ອຊຸກຍູ້ການພັດທະນາຂອງຈີນ.

ໃນກະແສການສຶກສາໄປຕ່າງປະເທດໄລຍະ 60 ປີທີ່ຜ່ານມາ,ນັກສຶກສາທີ່ຮຽນຢູ່ໂຊວຽດໃນສະໄໝຊຸມປີ 60 ສະຕະວັດທີ່ຜ່ານມາຮ່ວມກັນຈັດຕັ້ງເປັນເຄື່ອງໝາຍວັດທະນະທຳພິເສດອັນໜຶ່ງ,ປັດຈຸບັນນີ້,ພວກເຂົາເຈົ້າສ່ວນຫຼາຍເປັນຜູ້ເຖົ້າຊະລາ,ມີຄົນບໍ່ໜ້ອຍໄດ້ລາໂລກໄປແລ້ວ,ແຕ່ວ່າ,ໝູ່ຄະນະດັ່ງກ່າວນີ້



ວັນທີ 9 ເດືອນ 12 ປີ 2008,ທ່ານເຈຍຊິນລິນກຳມະການປະຈຳກົມການເມືອງ,ປະທານສະພາປຶກສາການເມືອງທົ່ວປະເທດຈີນໄດ້ພົບປະຄະນະສະພາທັງໝົດຂອງສະມາຄົມເພື່ອນຮຽນເອີຣົບ,ອາເມລິກາແລະສະມາຄົມປະຊາມິດນັກສຶກສາຈີນທີ່ຮຽນຢູ່ຕ່າງປະເທດຄັ້ງ 1 ສະໄໝທີ 6 ຢູ່ທີ່ຫໍສະພາປະຊາຊົນປັກກິ່ງ.

2008 年 12 月 9 日，中共中央政治局常委、全国政协主席贾庆林在北京人民大会堂会见出席欧美同学会·中国留学人员联谊会第六届理事会第一次会议的全体理事　新华社 图



ທ່ານ ຊຽນ ເຊຍແຊນ ນັກວິທະຍາສາດທີ່ມີຊື່ສຽງດັ່ງດັງຂອງຈີນກັບຄືນປະເທດຈາກອາເມລິກາ ມາຮອດຊຽງໄຮໃນວັນທີ 12 ເດືອນ 10 ປີ 1955
中国著名科学家钱学森从美国返国，在 1955 年 10 月 12 日到达上海　新华社 图



ກັນຍາປີ 1953, ທ່ານ ຮວາ ລໍເກີນ ນັກວິທະຍາສາດປະຊາຊົນ, ນັກຄະນິດສາດທີ່ມີຊື່ສຽງຂອງຈີນ (ຂວາ1) ເລົ່າຄວາມຮູ້ສຶກຢ້ຽມຢາມໂຊວຽດແກ່ບັນດາສາດສະດາຈານທີ່ມາຢ້ຽມ.
1953 年 9 月，中国人民科学家、著名数学家华罗庚（右一）在向来访问的教授谈述访苏观感　新华社 图

ໄດ້ປະທັບໃຈຢ່າງເລິກເຊິ່ງໃນປະຫວັດສາດ.

ທ່ານຈູອີລີອະດີດຜູ້ອຳນວຍການໃຫຍ່ຂອງບໍລິສັດໃຫຍ່ອຸດສາຫະກຳເດີນອາກາດຈີນ, ຮອງຫົວໜ້າກຳມະການປົກປັກຮັກສາສິ່ງແວດລ້ອມແລະຊັບພະຍາກອນຂອງສະພາຜູ້ແທນປະຊາຊົນທົ່ວປະເທດຄັ້ງທີ 10, ແມ່ນສະມາຊິກຜູ້ໜຶ່ງໃນໝູ່ຄະນະນັກສຶກສາຮຽນຢູ່ໂຊວຽດ. ສິ່ງທີ່ໃຫ້ລາວປະທັບໃຈຢ່າງເລິກເຊິ່ງທີ່ສຸດນັ້ນແມ່ນສະພາບທີ່ທ່ານປະທານເໝົາເຈີຕຸງພົບປະຕົວແທນນັກສຶກສາທີ່ຮຽນຢູ່ໂຊວຽດທີ່ສະໂມສອນມະຫາວິທະຍາໄລໂມສະກູ.

ວັນທີ 17 ເດືອນ 11 ປີ 1957, ໃນສະໂມສອນມີຄົນຫຼາຍປານທະເລຄົນ, ທ່ານປະທານເໝົາເຈີຕຸງໄດ້ປະເຊີນໜ້າກັບບັນດານັກສຶກສາຮຽນຢູ່ໂຊວຽດທີ່ມີກຳລັງວັງຊາ ແລະ ເຕັມໄປດ້ວຍຊີວິດຊີວາ, ໄດ້ກ່າວຄຳປາໄສທີ່ມີຊື່ສຽງວ່າ: "ໂລກເປັນຂອງພວກເຈົ້າ, ກໍເປັນຂອງພວກເຮົາ, ແຕ່ວ່າ, ເວົ້າເຖິງກົກເຖິງຮາກແລ້ວ, ກໍເປັນຂອງພວກເຈົ້າ, ຊາວໜຸ່ມພວກເຈົ້າມີຊີວິດຊີວາ, ພວມຢູ່ໄວເຕີບຕົວຈະເລີນ, ປານຕາວັນ 8, 9 ໂມງເຊົ້າ. ຄວາມຫວັງຝາກໄວ້ນຳພວກເຈົ້າ."

ຄຳປະໂຫຍກດັ່ງກ່າວນີ້ບໍ່ພຽງແຕ່ກາຍເປັນແຫຼ່ງກຳເນີດແມ່ແຮງຂອງນັກສຶກສາທີ່ຮຽນຢູ່ໂຊວຽດແລະຂອງຊາວໜຸ່ມ



ທັນວາປີ 1953 ບັນດາຊາວໜຸ່ມທີ່ກັບຄືນປະເທດໄດ້ເຂົ້າຮ່ວມວຽກງານເລືອກຕັ້ງ
1953 年 12 月，归国青年们参加普选工作　新华社 图

ຈີນລຸ່ນແລ້ວລຸ່ນອີກບາກບັ່ນສູ້ຊົນ,ສະແຫວງຫາອຸດົມຄະຕິ ແລະ ຕອບບຸນແທນຄຸນຕໍ່ຊາດ

ທ່ານລີວປາຍເຊີນລັດຖະບັນດິດສະຖາບັນວິສະວະກຳຈີນ, ສາດສະດາຈານມະຫາວິທະຍາໄລຊິນຮວາບໍ່ທ່ອນຊິຫລົງລືມມື້ ລະດູໜາວວັນໜຶ່ງທີ່ບໍ່ທຳມະດາທີ່ປັກກິ່ງ 30 ປີກ່ອນເຊັ່ນ: ວັນທີ 26 ທັນວາປີ 1978,ລາວເປັນນັກສຶກສາໜຶ່ງໃນຈຳນວນ 52 ຄົນ ເຊິ່ງແມ່ນລັດຖະບານສົ່ງໄປຮຽນຢູ່ປະເທດອາເມລິກາ ງວດທຳອິດ,ແຕ່ນີ້ໄປ,ຊາຕາກຳຊົ່ວຊີວິດຂອງລາວໄດ້ມີການປ່ຽນແປງແລ້ວ.

"ເມື່ອພວກເຮົາມາເຖິງສະໜາມບິນນິວຢອກ,ນັກຂ່າວຂອງສື່ມວນຊົນຫຼາຍສິບສື່ມາປິດອ້ອມພວກເຮົາ,ພວກເຮົາອອກຖະແຫຼງການສັ້ນໆໃຕ້ແສງໄຟກ້າຢືນຢັນວ່າ:ຈຸດປະສົງຂອງພວກເຮົາມາເພື່ອຮ່ຳຮຽນວິທະຍາສາດເຕັກນິກທີ່ກ້າວໜ້າຂອງອາເມລິກາ ແລະ ຊຸກຍູ້ມິດຕະພາບລະຫວ່າງປະຊາຊົນທັງສອງປະເທດຈີນ-ອາເມລິກາ".

ເດືອນ 6 ປີນັ້ນ,ທ່ານເຕິງຊຽວຜິງໄດ້ຊີ້ນຳກ່ຽວກັບເລື່ອງເພີ່ມຕື່ມຈຳນວນຄົນສົ່ງນັກສຶກສາໄປຮຽນຢູ່ຕ່າງປະເທດ,ສົ່ງເສີມແລະຂະຫຍາຍຈຳນວນນັກສຶກສາທີ່ໄປຮຽນຢູ່ຕ່າງປະເທດ,



ໃນງານຮັບສະໝັກບຸກຄະລາກອນການເງິນທີ່ອຳນາດການປົກຄອງຊຽງໄຮຈັດຂຶ້ນທີ່ປະເທດອັງກິດນັ້ນ,ມີນັກສຶກສາຈີນທີ່ຮຽນວິຊາການເງິນແລະບຸກຄົນໃນວົງການການເງິນ 500 ກວ່າຄົນມາສືບຖາມ ແລະ ປຶກສາຫາລືກັນ.
上海市政府在英国举办的金融人才招聘会上，有 500 多位在英国攻读金融专业的中国留学生和金融界人士前来咨询、商谈　新华社 图

ເຫັນວ່າ, "ອັນນີ້ແມ່ນໜຶ່ງໃນວິທີທີ່ສຳຄັນໃນການຍົກລະດັບວິທະຍາສາດແລະການສຶກສາຂອງພວກເຮົາໃຫ້ສູງຂຶ້ນ,ເພື່ອເຮັດໃຫ້ປະເທດມັ່ງຄັ່ງເຂັ້ມແຂງດ້ວຍວິທະຍາສາດເຕັກນິກ."

ສຳລັບການຂະຫຍາຍຈຳວນນັກສຶກສາເວລານັ້ນມີຄວາມຄິດຄວາມເຫັນແຕກຕ່າງກັນ.ຕໍ່ບັນຫານີ້,ທ່ານເຕິງຊຽວຜິງຊີ້ອອກວ່າ: "ຈະຕ້ອງແຕ່ງຕັ້ງນັກສຶກສາເປັນລ້ານເປັນໂກ໊ດ,ບໍ່ແມ່ນວ່າພຽງແຕ່ແຕ່ງຕັ້ງ 8 ຄົນຫຼື 10 ຄົນເທົ່ານັ້ນ", "ຈະຕ້ອງເລັ່ງລັດບາດກ້າວໃຫ້ໄວ,ທາງຍ່າງຕ້ອງແຮງຍ່າງແຮງກ້ວາງ". ບໍ່ດົນ,ນັກສຶກສາງວດທຳອິດທີ່ສົ່ງໄປຮຽນຢູ່ອາເມລິການັ້ນໄດ້ຄັດເລືອກອອກມາແລ້ວ.

ທ່ານລີວປາຍເຊີນມາເຖິງອາເມລິກາບໍ່ດົນ,ທ່ານໄດ້ເຂົ້າຮ່ວມພິທີຢ່າງຄຶກຄື້ນເຊິ່ງແມ່ນທ່ານຄາກປະທານາທິບໍດີອາເມລິກາຕ້ອນຮັບທ່ານເຕິງຊຽວຜິງຢ້ຽມຢາມອາເມລິກາ. "ໃນງານ



ເດືອນ 6 ປີ 1979,ນັກສຶກສາຈີນບຳລຸງສ້າງພາສາອັງກິດໃນໂຮງຮຽນມັດທະຍົມຜູ້ຍິງແວນລິງຕັນນູແວນເຊລັງ
1979 年 6 月，中国留学生在新西兰首都惠灵顿女子中学补习英文　新华社 图



ເຊຍເໝີນກໍ່ຮັ່ງດຶງດູດນົກມາເພື່ອດູດດຶງນັກສຶກສາກັບຄືນປະເທດຕັ້ງວິຊາອາຊີບ
厦门筑巢引凤吸引留学人员回国创业　新华社 图



新华社 图

ລ້ຽງຮັບຕ້ອນຄັ້ງນີ້, ທ່ານນາງ ໂຈລິນພັນລະຍາຂອງທ່ານເຕີງຊຽວຜິງຕ່າງໜ້າເຕີງຊຽວຜິງສົ່ງພວກເຮົາສາມຄໍາດ້ວຍຄວາມໜັກໜາວ່າ, ພະຍາຍາມຮໍ່າຮຽນ, ຮຽນຈົບກັບຄືນປະເທດ, ຮັບໃຊ້ປະເທດຊາດ. ອັນໄດ້ກາຍເປັນແມ່ແຮງແລະເປົ້າໝາຍໃນການດໍາລົງຊີວິດແລະການຮໍ່າຮຽນຂອງພວກເຮົາ."

ຄຽງຄູ່ກັບປະເທດຈີນໄດ້ເປີດກວ້າງນະໂຍບາຍການສຶກສາຢູ່ຕ່າງປະເທດເປັນກ້າວໆ, ນັກຮຽນຈີນນັບມື້ນັບຫຼາຍຂຶ້ນໄດ້ຍ່າງອອກຈາກປະເທດເດີນທາງໄປຮຽນຢູ່ຕ່າງປະເທດ, ກາຍເປັນກະແສການສຶກສາຢູ່ຕ່າງປະເທດໃນປະຫວັດສາດຢ່າງກວ້າງຂວາງທີ່ສຸດ.

ເປັນສ່ວນປະກອບທີ່ສໍາຄັນຂອງການປະຕິຮູບ ແລະ ເປີດປະຕູສູ່ໂລກພາຍນອກ, ວຽກງານນັກສຶກສາໄດ້ຮັບການບຸກທະລຸ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງໃຕ້ຄວາມເອົາໃຈໃສ່ຢ່າງສູງຈາກພັກຄອມມູນິດຈີນແລະລັດຖະບານຈີນ, ໃນປີ 1984, ລັດໄດ້ຊີ້ອອກຢ່າງຈະແຈ້ງວ່າ: ໄປຮຽນຢູ່ຕ່າງປະເທດດ້ວຍທຶນເອງກໍແມ່ນຊ່ອງທາງບໍາລຸງກໍ່ສ້າງບຸກຄະລາກອນເສັ້ນໜຶ່ງ, ລັດມີນະໂຍບາຍສະເໝີພາບດ້ານການເມືອງຕໍ່ນັກສຶກດ້ວຍທຶນເອງເທົ່າທ່ຽງກັບນັກສຶກສາດ້ວຍທຶນການສຶກສາຂອງລັດ. ໃນຂະນະແລກປ່ຽນສະຕະວັດ, ໝູ່ຄະນະນໍາພາສູນກາງລຸ້ນທີ 3 ຂອງພັກໂດຍແມ່ນທ່ານຈຽງເຈີມິງເປັນແກ່ນສານໄດ້ສເໜີທິດທາງວຽກງານນັກສຶກສາທີ່ວ່າ: "ສະໜັບສະໜູນໄປສຶກສາຢູ່ຕ່າງປະເທດ, ສົ່ງເສີມກັບຄືນປະເທດ, ໄປມາຢ່າງເສລີ" ແລະ "ສົ່ງເສີມນັກສຶກສາກັບຄືນປະທດມາເຮັດວຽກ ຫຼື ຮັບໃຊ້ປະເທດຊາດດ້ວຍຮູບການຢ່າງເໝາະສົມ", ໄດ້ເຮັດໃຫ້ເນື້ອໃນວຽກງານນັກສຶກສາຂອງຈີນໃຫ້ຄົບຖ້ວນສົມບູນ, ສະໜອງຂົງເຂດແລະຊ່ອງລະຫວ່າງອັນກວ້າງຂວາງໃຫ້ແກ່ນັກສຶກສາອັນໄພສານທີ່ຮຽນຢູ່ພົ້ນທະເລ



ສະຫະພາບເອີຣົບເພີ່ມຕື່ມເງິນຊ່ວຍເຫຼືອນັກສຶກສາຈີນ
欧盟追加拨款资助中国留学项目　新华社 图




ເວທີວາງສະແດງສະພາການຄ້ານັກສຶກສາທີ່ຮຽນຢູ່ຕ່າງປະເທດກວາງໂຈວໃນສັບປະດາອອກແບບສາກົນກວາງໂຈວ
广州国际设计周上的广州留学人员商会展台　新华社 图

ເພື່ອກັບຄືນຮັບໃຊ້ປະເທດຊາດ,ອັນໄດ້ເປັນສັນຍາລັກວຽກງານການສຶກສາຂອງຈີນໄດ້ເຂົ້າສູ່ຄວາມສຸກງອມຢ່າງຕໍ່ເນື່ອງ.

ຫວ່າງມໍ່ໆປີມານີ້,ວຽກງານນັກສຶກສາຈີນໄດ້ຄືບໜ້າຖອນສົມບູນຕື່ມອີກ,ໄດ້ສ້າງຕັ້ງລະບົບອົງການບໍລິການສາລະທິດ ແລະມີຫຼາຍຊັ້ນລະດັບແຕ່ການຄັດເລືອກຫາການແຕ່ງຕັ້ງ,ການນໍາພາຕະຫລາດນັກສຶກສາ ແລະ ເຮັດເປັນແບບແຜນ,ການຄຸ້ມຄອງຢູ່ຕ່າງປະເທດແລະການບໍລິການ,ກັບຄືນປະເທດຫາວຽກເຮັດວຽກທໍາແລະປະດິດສ້າງກິດຈະການ. ໂດຍສະເພາະແມ່ນກອງປະຊຸມໃຫຍ່ຂອງພັກຄັ້ງທີ 16ໄດ້ມີແນວຄິດຢ່າງຈະແຈ້ງຄືຊັບພະຍາກອນບຸກຄະລາກອນເປັນຊັບພະຍາກອນອັນດັບທີ 1,ສະເໜີເປົ້າໝາຍຍຸດທະສາດໃຫ້ປະເທດຊາດເຂັ້ມແຂງດ້ວຍບຸກ



ອອກໄປຮຽນຢູ່ຕ່າງປະເທດແມ່ນການຄັດເລືອກຂອງນັກຮຽນເສັ່ງມະຫາວິທະຍາໄລ
出国留学，高考生的新选择　新华社 图



ນາງໝໍກູຫົງທີ່ກັບມາຈາກຕ່າງປະເທດຊຶ່ງເປັນ " ພະເຈົ້າທີ່ມີຊີວິດ " ໃນສາຍຕາປະຊາຊົນເຜົ່າຕິເບດ
藏族群众眼中的 " 活菩萨 " — " 海归 " 医生顾虹　新华社 图



ໂຮງຮຽນຊັ້ນສູງ,ມະຫາວິທະຍາໄລຕ່າງປະເທດມານານກິ່ງຍາດເອົາແຫຼ່ງນັກຮຽນ
海外院校南京抢生源　新华社 图

ຄະລາກອນ;ກອງປະຊຸມໃຫຍ່ຂອງພັກຄັ້ງທີ 17 ສະເໜີຄໍາຮຽກຮ້ອງໃນການພັດທະນາການສຶກສາຢ່າງມີບູລິມະສິດ,ສ້າງສາປະເທດໃຫ້ເຂັ້ມແຂງດ້ວຍຊັບພະຍາກອນບຸກຄະລາກອນອີກ. ໃຕ້ສະຖານະການໃໝ່,ວຽກງານນັກສຶກສາຂອງຈີນໄດ້ຮັບການຂະຫຍາຍຕົວແບບກະໂດດຂັ້ນຢ່າງໃຫຍ່,ເຂົ້າສູ່ໄລຍະດີທີ່ສຸດໃນປະຫວັດສາດ.

ສຶກສາຮໍ່າຮຽນຢູ່ຕ່າງປະເທດໄດ້ໄຂປະຕູໃຫ້ຄົນຈີນໄປສູ່ທົ່ວໂລກ,ເປັນປະກົດການແບບສາກົນທີ່ເປັນສັນຍາລັກຂອງປະເທດຈີນເປີດປະຕູສູ່ໂລກພາຍນອກ. ໃນມື້ນີ້,ຫລຽວເບິ່ງແຜນທີ່ໂລກ,ຮອຍຕີນຂອງນັກສຶກສາຈີນມີຢູ່ທົ່ວໂລກຫ້າທະວີບ 100 ກວ່າປະເທດແລະເຂດແຄ້ວນ,ພວກເຂົາເຈົ້າບໍ່ພຽງແຕ່ໄດ້ເຄື່ອນໄຫວໃນຂົງເຂດວິທະຍາສາດອັນກວ້າງຂວາງເທົ່ານັ້ນເຊັ່ນ:ວິທະຍາສາດເຕັກໂນໂລຊີ,ການສຶກສາ,ເສດຖະກິດ ແລະ ວັດທະ



ງານວາງສະແດງສຶກສາທິການສາກົນສາລະເວສປຈີນຄັ້ງທີ 12 ໄດ້ຈັດຂຶ້ນທີ່ນານກິ່ງມີມະຫາວິທະຍາໄລ,ວິທະຍາຄານແລະອົງການສຶກສາທີ່ມາຈາກປະເທດຕ່າງໆເກືອບ 100 ຫລັງຮ່ວມງານເພື່ອສະໜອງການບໍລິການດ້ານທີປຶກສາແກ່ນັກສຶກສາຈີນທີ່ລັດສົ່ງອອກຫຼືໃຊ້ທຶນສ່ວນຕົວ
第十二届中国国际教育巡回展在南京举行，来自各国的近百家院校和教育机构参展，为中国公派和自费出国留学人员提供咨询服务　新华社 图

ນະທຳເປັນຕົ້ນ,ຍັງໄດ້ເຜີຍແຜວັດທະນະທຳຈີນທີ່ກົມກຽວ ແລະ ພາບພົດຂອງຈີນທີ່ມີດຕະພາບໄມຕີຈິດແກ່ທົ່ວໂລກອີກດ້ວຍ.

**"ປະເທດຊາດແລະປະຊາຊົນຄອງຄອຍຫາພວກເຈົ້າຮຽນຈົບກັບຄືນປະເທດ,ປະກອບສ່ວນເຂົ້າໃນການສ້າງສາປະເທດຊາດເປັນແບບທັນສະໄໝ"**

ວັນທີ 18 ເດືອນ 11 ປີ2008,ທ່ານຮູຈິນທາວປະທານປະເທດ ສປ ຈີນກຳລັງຢ້ຽມຢາມລັດຖະກິດກູຍບາ,ສະເພາະໄປຢ້ຽມເບິ່ງນັກສຶກສາຈີນຢ່າງສະໜິດສະໜົມທີ່ໂຮງຮຽນທະລາລາຂອງມະຫາວິທະຍາໄລຮາວານາ.ຢູ່ຕໍ່ໜ້ານັກສຶກສາທີ່ລ້ຳບາກຍາກເຂັ້ນທັງເບີກບານມ່ວນຊື່ນນັ້ນ,ທ່ານປະທານຮູຈິນທາວເວົ້າຢ່າງໜັກໜາວ່າ:"ປະເທດຊາດແລະປະຊາຊົນຄອງຄອຍຫາພວກເຈົ້າຮຽນຈົບກັບຄືນປະເທດ,ປະກອບສ່ວນເຂົ້າໃນການສ້າງສາປະເທດຊາດເປັນແບບທັນສະໄໝ".

ທ່ານສົມຈຽນອະດີດກຳມະການຄະນະລັດຖະບານທັງເປັນຫົວໜ້າຄະນະກຳມະການວິທະຍາສາດແຫ່ງຊາດ,ໄລຍະຮ່ຳຮຽນ




ງານແລກປ່ຽນວິທະຍາສາດເຕັກນິກກວາງໂຈວນັກສຶກສາຈີນຄັ້ງທີ11
第十一届中国留学人员广州科技交流会　新华社 图

ຢູ່ໂຊວຽດເຄີຍເປັນຜູ້ຮັບຜິດຊອບຄະນະກຳມະການນັກສຶກສາຈີນທີ່ຮຽນຢູ່ໂຊວຽດ, ໃນ 60 ປີທີ່ຜ່ານມາມີຄວາມປະທັບໃຈຢ່າງເລິກເຊິ່ງຕໍ່ນັກສຶກສາໝັ່ນພຽນຮ່ຳຮຽນເພື່ອຮັບໃຊ້ປະເທດຊາດເປັນລຸ້ນແລ້ວລຸ້ນອີກ. ລາວເວົ້າວ່າ, ຫລັງຈາກສະຖາປະນາປະເທດຈີນໃໝ່ພຽງແຕ່ 50 ປີເທົ່ານັ້ນ, ກໍໄດ້ສ້າງຕັ້ງລະບົບອຸດສາຫະກຳ, ກະສິກຳ, ແລະ ວິທະຍາສາດການສຶກສາຂອງຕົນເພື່ອສ້າງພື້ນຖານທີ່ໝັ້ນຄົງແກ່ການສ້າງສາແບບທັນສະໄໝ. ນັກສຶກສາອັນໄພສານໄດ້ທຳການອຸທິດທີ່ບໍ່ສາມາດດັບມອດໄດ້.

ການສະແຫວງຫາຄວາມຮູ້ທີ່ພົ້ນເຫລ, ຮຽນຈົບກັບຄືນປະເທດແມ່ນການຄັດເລືອກຂອງນັກສຶກສາອັນໄພສານທີ່ຮຽນຢູ່ຕ່າງປະເທດ. ໂດຍສະເພາະຫວ່າງມໍ່ໆປີມານີ້, ຈຳນວນຄົນນັກສຶກສາທຸກປະເພດທີ່ຮຽນຈົບແລ້ວກັບຄືນປະເທດນັບວັນນັບເພີ່ມຂຶ້ນ, ຕາມການສະຖິຕິະໃນປີ 2002-2008, ມີນັກສຶກສາ 250 ກວ່າ ພັນຄົນກັບຄືນປະເທດເຮັດວຽກ, ນັກສຶກສາທີ່ດີເລີດເປັນຈຳນວນຫລວງຫຼາຍທີ່ໄດ້ກັບຄືນປະເທດໄດ້ກາຍເປັນບຸກຄົນນຳໜ້າໃນຂົງເຂດວິທະຍາສາດເຕັກນິກ, ການສຶກສາ, ເສດຖະກິດ, ວັດທະນະທຳເປັນຕົ້ນ, ໄດ້ທຳການອຸທິດພິເສດໃຫ້ແກ່ການເພີ່ມທະວີການຮ່ວມມື ແລະ ການແລກປ່ຽນລະຫວ່າງຈີນ ແລະ ປະເທດຕ່າງໃນໂລກ, ສ້າງສາປະເທດແບບທັນສະໄໝສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ.




ທ່ານ ຊຸນ ດາໄຮ ທີ່ຈົບປະລິນຍາເອກກັບມາຈາກອາເມລິກາຕັ້ງວິຊາອາຊີບ(ຂວາ2)ພວມວາງແຜນພັດທະນາສວນຕັ້ງອາຊີບຂອງນັກສຶກສາທີ່ຮຽນຈົບກັບມາຈາກຕ່າງປະເທດແຫ່ງຊາດເຊີຍເໜີນກັບເພື່ອນຮ່ວມງານ

留美回国创业的孙大海博士（右二）在与同事规划国家留学人员创业园的发展
新华社 图



ປະເທດຈີນອອກແຮງກໍ່ສ້າງຕາໜ່າງທາງລົດໄຟພາກຕາເວັນຕົກສຽງໃຕ້ອອກສູ່ທະເລ ແລະ ອອກສູ່ຊາຍແດນ
中国全力打造西南出海出边铁路网络 新华社 图

# ປີ 2012 ປະເທດຈີນຈະສ້າງສຳເລັດວົງຄົມມະນາຄົມ1–8ຊົ່ວໂມງທີ່ມີນະຄອນປັກກິ່ງເປັນໃຈກາງ

## 2012 年中国形成以北京为中心 1 至 8 小时交通圈

北京至天津 29 分钟、北京至石家庄 1 小时、北京至上海 4.5 小时、北京至广州 8 小时左右……三年后，与飞机速度相媲美，却可以节省大量候机时间、乘坐更加便利、舒适，且载客量更高的高速列车将遍布全中国，形成以北京为中心到绝大部分省会城市的耗时约 1 至 8 小时的交通圈，给人们出行带来极大便利。

ປັກກິ່ງເຖິງທຽນຈິນ 29 ນາທີ,ປັກກິ່ງເຖິງສີເຈຍຈວງ 1 ຊົ່ວໂມງ,ປັກກິ່ງເຖິງຊຽງໄຮ 4.5 ຊົ່ວໂມງ,ປັກກິ່ງເຖິງກວາງໂຈວຢູ່ລະຫວ່າງ 8 ຊົ່ວໂມງ....ອີກ 3 ປີຕໍ່ໄປ,ຂະບວນລົດໄຟແລ່ນໄວທີ່ມີຄວາມໄວປຽບທຽບກັບເຮືອບິນໄດ້,ພັດປະຢັດເວລາລໍຖ້າຂຶ້ນເຮືອບິນເປັນຈຳນວນຫລວງຫລາຍ,ຜູ້ໂດຍສານໄດ້ສະດວກສະບາຍກວ່າ ແລະ ປະລິມານບັນຈຸຜູ້ໂດຍສານຍິ່ງຫລາຍ

ນັ້ນຈະແຜ່ຂະຫຍາຍໄປທົ່ວປະເທດຈີນ, ຜູ້ໂດຍສານເປັນວົງຄົນມະນາຄົມ 1 ຫາ 8 ຊົ່ວໂມງທີ່ເຖິງຕົວເມືອງເອກສ່ວນໃຫຍ່ຂອງແຂວງທີ່ຖືນະຄອນປັກກິ່ງເປັນໃຈກາງ, ອັນໄດ້ອຳນວຍຄວາມສະດວກເປັນຈຳນວນຫລາຍໃຫ້ແກ່ຜູ້ຄົນທີ່ເດີນທາງ.

ທ່ານ ຫວາງ ຈືໂກວ ລັດຖະມົນຕີຊ່ວຍວ່າການກະຊວງທາງລົດໄຟແຫ່ງປະເທດຈີນໄດ້ສະແດງວ່າ, ເຖິງປີ 2012, ປະເທດ


ນາງບໍລິການຂະບວນຕູ້ລົດໄຟດ່ວນພວມນຸ່ງເຄື່ອງຊ່ວຍກັນ
动车组乘务员正在互相整理着装　新华社 图

ຈີນຈະມີເສັ້ນທາງຂົນສົ່ງຜູ້ໂດຍສານສະເພາະ ແລະ ເສັ້ນທາງລົດໄຟລະຫວ່າງຕົວເມືອງກັບຕົວເມືອງຈຳນວນ 13 ພັນກິໂລແມັດປະກອບເຂົ້າໃນການດຳເນີນທຸລະກິດຂົນສົ່ງ, ອັນໄດ້ສ້າງໂດຍພື້ນຖານໃຫ້ກາຍເປັນຕາໜ່າງຂົນສົ່ງຜູ້ໂດຍສານຢ່າງໄວວາໃນທົ່ວປະເທດທີ່ມີໂຄງຮ່າງ "ສີ່ສາຍຕັ້ງສີ່ສາຍຂວາງ" ກໍ່ຄືລະບົບເສັ້ນທາງລົດໄຟລະຫວ່າງຕົວເມືອງກັບຕົວເມືອງຂອງເຂດສາມຫລ່ຽມແມ່ນ້ຳຢາງເຊຈຽງ, ສາມຫລ່ຽມແມ່ນ້ຳຈູຈຽງ, ເຂດອ້ອມຮອບທະເລໂປໄຮ ແລະ ເຂດເຕົ້າໂຮມຕົວເມືອງອື່ນໆ. ໃນລະຫວ່າງ 73 ປີ ນັບແຕ່ປີ 1986 ທີ່ມີເສັ້ນທາງລົດໄຟຊຽງໄຮ - ອູສົງເຊິ່ງເປັນເສັ້ນທາງລົດໄຟສາຍທຳອິດຂອງປະເທດຈີນມາເຖິງປີ 1949, ລະຍະທາງດຳເນີນທຸລະກິດຂອງເສັ້ນທາງລົດໄຟທົ່ວປະເທດຈີນມີພຽງ 22 ພັນກິໂລແມັດ, ການຂະຫຍາຍຕົວຂອງເສັ້ນທາງລົດໄຟແມ່ນຊັກຊ້າທີ່ສຸດ. ພາຍຫລັງທີ່ໄດ້ສະຖາປະນາປະເທດຈີນໃໝ່, ບົນພື້ນຖານສ້ອມແປງເສັ້ນທາງລົດໄຟປະ



ຂະບວນລົດໄຟດ່ວນ " ໝາຍເລກກົມກຽວ " ອອກຈາກສະຖານີລົດໄຟຊຽງໄຮໄປເຖິງສະຖານີລົດຝູໂຈວ
从上海始发的"和谐号"高速列车抵达福州火车站　新华社 图

ເທດຈີນເກົ່າ,ປະເທດຈີນໄດ້ຖືການທະລຸພາກຕາເວັນຕົກສຽງໃຕ້ ແລະ ພາກຕາເວັນຕົກສຽງເໜືອເປັນຈຸດໜັກ, ໂດຍໄດ້ກໍ່ສ້າງເສັ້ນທາງລົດໄຟ ແລະ ສະຖານີລົດໄຟໃຈກາງເປັນຈຳນວນຫລວງຫລາຍ,ຂະໜາດ ແລະ ຄຸນນະພາບຂອງເສັ້ນທາງ ແລະ ຕານ່າງເສັ້ນທາງລົດໄຟໄດ້ຮັບການຍົກສູງຂຶ້ນຢ່າງເດັ່ນຊັດ.ຕາມຂໍ້ມູນສະຖິຕິທີ່ກ່ຽວຂ້ອງຂອງກະຊວງເສັ້ນທາງລົດໄຟໄດ້ສະແດງໃຫ້ເຫັນວ່າ,ແຕ່ປີ 2003 ຫາປີ 2008,ເສັ້ນທາງລົດໄຟປະເທດຈີນໄດ້ເຮັດສຳເລັດບໍລິມາດວຽກງານຂອງເສັ້ນທາງລົດໄຟໂລກຈຳນວນ 25% ດ້ວຍລະຍະທາງດຳເນີນທຸລະກິດຈຳນວນ 6% ຂອງເສັ້ນທາງລົດໄຟໂລກ,ປະສິດທິພາບໃນການຂົນສົ່ງນອນຢູ່ອັນດັບໜຶ່ງຂອງໂລກ.

"ໄລ່ມາຮອດທ້າຍປີປີນີ້,ລະຍະທາງດຳເນີນທຸລະກິດຂອງເສັ້ນທາງລົດໄຟປະເທດຈີນຈະບັນລຸເຖິງ 86 ພັນກິໂລແມັດ,ລື່ນກາຍລັດເຊຍ ແລະ ຖັດຈາກອາເມລິກາໂດຍນອນຢູ່ອັນດັບສອງຂອງໂລກ."ທ່ານ ຫວາງ ຈືໂກວໄດ້ເວົ້າ,ໃນລະຫວ່າງ 60 ປີເສັ້ນທາງລົດໄຟປະເທດຈີນໄດ້ບັນລຸການຂະຫຍາຍຕົວແບບກະໂດດຂັ້ນໃຫ້ປະກົດເປັນຈິງ,ໃນນັ້ນ,ການກໍ່ສ້າງເສັ້ນທາງຂົນສົ່ງຜູ້ໂດຍສານສະເພາະ ແລະ ເຕັກນິກຍົກສູງຄວາມໄວຂອງເສັ້ນທາງທີ່ມີຢູ່ແລ້ວນັ້ນຍິ່ງໄດ້ຮັບຄວາມຄືບໜ້າອັນໃຫຍ່ຫລວງ ແລະ ສຳຄັນ.ຜ່ານການຍົກລະດັບຄວາມໄວໃນຂອບເຂດກວ້າງຂວາງຄັ້ງທີ 6 ທີ່ໄດ້ຈັດຕັ້ງປະຕິບັດໃນປີ 2007,ເສັ້ນ ທາງລົດໄຟປະ



ບົວລະບັດທາງລົດໄຟຊີນໄຮຕິເບດຢ່າງລະອຽດຖີ່ຖ້ວນ
精心养护青藏铁路 新华社 图




ທາງລົດໄຟຕາລີ-ຫລີຈຽງແຂວງຢູນນານໄດ້ສຳເລັດປູລາງເຫຼັກທົ່ວທັງສາຍແລ້ວ.
云南大丽铁路全线铺通 新华社 图



ການດັດສ້າງແບບໄຟຟ້າຂອງຂົວເຫຼັກໃຫຍ່ແມ່ນ້ຳຢາງຊີກຽງຈິວຈຽງທາງລົດໄຟປັກກິ່ງ-ຈິວຈຽງໄດ້ສຳເລັດສ້າງເຄືອຂ່າຍວາງສາຍ
京九铁路九江长江大桥铁路桥电气化改造完成挂网架线　新华社 图

ເທດຈີນກຳໄດ້ຢ່າງຮອບດ້ານເຊິ່ງເຕັກນິກຄົບຊຸດຄືການອອກແບບ,ການກໍ່ສ້າງ,ການບົວລະບັດຮັກສາ,ການສະ ໜອງໄຟຟ້າຖືງຈູງ,ສັນຍານສື່ສານ ແລະ ການຄວບຄຸມຂະ ບວນລົດໄຟເປັນຕົ້ນຂອງເສັ້ນທາງທີ່ມີຄວາມໄວ 200 ກິໂລແມັດ/ຊົ່ວໂມງ( ແລະ ຂຶ້ນເມືອ),ອັນໄດ້ຢ່າງເຂົ້າຖັນແຖວທັນສະໄໝໃນການຍົກສູງລະດັບຄວາມໄວຂອງເສັ້ນທາງທີ່ມີຢູ່ໃນປະຈຸບັນຂອງເສັ້ນທາງລົດໄຟໂລກ.

ປະຈຸບັນ,ເສັ້ນທາງລົດໄຟຂົນສົ່ງຜູ້ໂດຍສານສະເພາະທີ່ມີຄວາມໄວ 250 ກິໂລແມັດຕໍ່ຊົ່ວໂມງຄື: ເຫີເຝີຍ-ນານກິ່ງ,ເຫີເຝີຍ-ອູຫານ,ຈີນານ-ຊິງຕາວ ແລະ ສືເຈຍຈວງ-ໄທຢວນເປັນຕົ້ນໄດ້ເປີດບໍລິການ.ກ່ອນທ້າຍປີປີນີ້,ເສັ້ນທາງລົດໄຟຂົນສົ່ງຜູ້ໂດຍສານສະເພາະທີ່ມີຄວາມໄວ 350 ກິໂລແມັດຕໍ່ຊົ່ວໂມງຄື: ອູຫານ-ກວາງໂຈວ,ເຈິງໂຈວ-ຊີອານ,ເສັ້ນທາງລົດໄຟຂົນສົ່ງຜູ້ໂດຍສານສະເພາະທີ່ມີຄວາມໄວ 250 ກິໂລແມັດຕໍ່ຊົ່ວໂມງຄື: ນິງໂປ-ໄທໂຈວ-ອຸ່ນໂຈວ,ອຸ່ນໂຈວ - ຝູໂຈວ,ຝູໂຈວ-ເຊຍເໝີນກໍ່ຈະເດີນລົດໄຟຕາມລຳດັບ.ສ່ວນເສັ້ນທາງລົດໄຟຂົນສົ່ງຜູ້ໂດຍສານສະເພາະ ແລະ ເສັ້ນທາງລົດໄຟລະຫວ່າງຕົວເມືອງກັບຕົວເມືອງທີ່ມີຄວາມໄວ 200-250 ກິໂລແມັດຕໍ່ຊົ່ວໂມງຄື: ປັກກິ່ງ-ຊຽງໄຮ,ປັກກິ່ງ-ສືເຈຍຈວງ,ຮາເອີປິນ-ຕາຫລຽນ,ຊຽງໄຮ-ນານກິ່ງ,ກຸ້ຍຢາງ-ກວາງໂຈວເປັນຕົ້ນກໍ່ກຳລັງຂຸ້ນຂ້ຽວດຳເນີນການກໍ່ສ້າງຢູ່,ໂດຍພະຍາຍາມສຸດຂີດໃຫ້ດຳເນີນທຸລະກິດກ່ອນປີ 2012ໄດ້.

ປີ 2008 ຫາ ປີ 2012 ເປັນໄລຍະໜຶ່ງທີ່ບໍ່ເຄີຍມີມາກ່ອນຂອງຂະໜາດການກໍ່ສ້າງເສັ້ນທາງ ແລະ ຕານ່າງເສັ້ນທາງລົດໄຟປະເທດຈີນ,ພ້ອມກັນນັ້ນກໍ່ແມ່ນໄລຍະໜຶ່ງທີ່ໄດ້ຮັບໝາກຜົນ,ສະເລ່ຍແລ້ວແຕ່ລະປີລົງທຶນ 700ຕື້ຢວນຂຶ້ນໄປ,ມີສາຍໃໝ່ຈຳນວນ 5 ພັນກິໂລແມັດຂຶ້ນໄປປະກອບເຂົ້າໃນການດຳເນີນທຸລະກິດ."ທ່ານ ຫວາງ ຈື່ໂກວໄດ້ເປີດເຜີຍ,ເຖິງປີ 2012,ຍອດລະຍະທາງດຳເນີນທຸລະກິດຂອງເສັ້ນທາງລົດໄຟປະເທດຈີນຈະຍົກລະດັບແຕ່ 80 ພັນກິໂລແມັດມາເຖິງ 110 ພັນກິໂລແມັດຂຶ້ນໄປ,ສາຍສຳຄັນຂອງເສັ້ນທາງລົດໄຟຈະບັນລຸໄດ້ການຂົນສົ່ງຜູ້ໂດຍສານກັບການຂົນສົ່ງເຄື່ອງສິນຄ້າແຍກສາຍກັນ,ຕານ່າງເສັ້ນທາງລົດໄຟທີ່ຈະເລີນສົມບູນແບບຈະກໍ່ຮ່າງສ້າງຕົວຂຶ້ນມາ,ໂດຍຈະຜ່ອນຄາຍຂໍ້ຈຳກັດຂອງການຂົນສົ່ງທາງລົດໄຟຄື"ປີ້ລົດໄຟໃບດຽວກໍ່ຫາຍາກ"ເປັນຕົ້ນໃຫ້ອ່ອນລົງ.



ມົງໂກນໃນພວມກໍ່ສ້າງທາງລົດໄຟໃໝ່ 6000 ກວ່າກິໂລແມັດໄດ້ເປີດຊ່ອງທາງຄວາມຮຽກຮ້ອງຕ້ອງການພາຍໃນ.
内蒙古正新建近 6000 公里铁路打开内需通道　新华社 图

# ການຄ້າຂາຍທີ່ປາຈາ(ຕະຫລາດນັດ)ນະຄອນຄາສືເຂດຊິນຈຽງຍັງມີຄວາມຄຶກຄື້ນຄືເກົ່າ

## 新疆喀什巴扎交易热度不减

每个星期的周日是丝绸之路古城喀什的“巴扎天”，在喀什市郊的巴扎、喀什中西亚国际贸易市场等地，当天一些巴扎有上万农牧民参加，各种农副产品交易热度不减。此外，有的巴扎还吸引了众多国内外游客，成为当地旅游的新亮点。

ວັນອາທິດໃນທຸກໆສັບປະດາແມ່ນ "ວັນປາຈາ" ຂອງຄາສືເຊິ່ງເປັນເມືອງເກົ່າແກ່ຕາມເສັ້ນທາງສາຍໄໝ,ຢູ່ປາຈາຂອງຊານເມືອງຄາສື,ຕະຫລາດການຄ້າສາກົນອາຊີກາງ ແລະ ອາຊີຕາເວັນຕົກທີ່ຄາສືເປັນຕົ້ນ,ປາຈາຈຳນວນໜຶ່ງໃນວັນນັ້ນມີຊາວກະສິກອນ ແລະ ຊາວລ້ຽງສັດຈຳນວນເປັນ 10 ພັນກວ່າຄົນເຂົ້າຮ່ວມ,ການຄ້າຂາຍຜະລິດຕະພັນການກະເສດລ້ຽງສັດຕ່າງໆຍັງຄົງຄຶກຄື້ນຄືເກົ່າ.ນອກນັ້ນ,ມີບາງປາຈາຍັງດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດເປັນຈຳນວນຫລວງຫລາຍອີກດ້ວຍ,ອັນໄດ້ກາຍເປັນຈຸດຮຸ່ງໃສອັນໃໝ່ຂອງການທ່ອງທ່ຽວໃນທ້ອງຖິ່ນນັ້ນ.

ຢູ່ປາຈາແຫ່ງໜຶ່ງທີ່ຊານເມືອງຄາສືເຊິ່ງມີການຄ້າຂາຍສັດລ້ຽງເປັນຫລັກນັ້ນ,ຊາວກະສິກອນ ແລະ ລ້ຽງສັດທີ່ມາຈາກຊົນ


ນາງສາວຜັດເຜົ່າວີອູເອີພວມທ່ຽວຊົມຕະຫລາດເຄືຊືປາຈາ
维吾尔族姑娘在逛喀什市巴扎　新华社 图



ແມ່ຍິງຫຼາຍຄົນກຳລັງຂາຍໂຕແກະທີ່ລ້ຽງເອົາເອງໃນຕະຫລາດນັດສາກົນເຄີຊີບາຈາ.
几名农村妇女在喀什国际大巴扎上销售自家喂养的羊　新华社 图



ຊາວນາທ້າວອາບຸໄລທິດ(ຊ້າຍ2)ພວມເກັບຊື້ເຄື່ອງໃນຕະຫລາດກະສິກຳການຄ້າສະຕະວັດໃໝ່
农民阿不来提（前左二）在新世纪农贸市场上采购　新华社 图

ມະບົດໃກ້ຄຽງໄດ້ເຕົ້າໂຮມກັນຢູ່ທີ່ນີ້ແຕ່ເຊົ້າ,ເຊິ່ງພວກເຂົາຕ່າງກໍ່ຊອກຫາບ່ອນເພື່ອສ້າງຄອກຊົ່ວຄາວ ແລະ ໄລ່ງົວ ແລະ ແກະຂອງຕົນເຂົ້າໃນຄອກ,ລໍຖ້າພໍ່ຄ້າທີ່ຈະມາເຖິງ.ກວຽນມ້າ,ກວຽນລໍ,ລົດຈັກສາມລໍ້ ແລະ ລົດບັນທຸກໄດ້ສວານສົນກັນໃນປາຈາ,ລໍຖ້າແຕ່ຕົກລົງທຳການຄ້າຂາຍກັນ,ກໍ່ບັນທຸກງົວແກະອອກປາຈາກັບເລີຍ.

ປາຈາທີ່ມີອາທິດໜຶ່ງເທື່ອໜຶ່ງນັ້ນບໍ່ພຽງແຕ່ແມ່ນງານບຸນມະໂຫລານຂອງຊາວກະສິກອນລ້ຽງສັດເທົ່ານັ້ນ,ຍັງດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດອີກ,ອັນໄດ້ກາຍເປັນຈຸດທິວທັດໃໝ່ຂອງການທ່ອງທ່ຽວໃນທ້ອງຖິ່ນນັ້ນ.ນັກຂ່າວໄປເກັບຂ່າວໄດ້ເຫັນ,ບ່ອນທາງເຂົ້າຂອງປາຈາມີລົດບັດທ່ອງທ່ຽວຫລາຍສິບຄັນຈອດໄວ້ຢ່າງມີລະບຽບ,ນັກທ່ອງທ່ຽວພາຍໃນເປັນຈຳນວນຫລາຍ ແລະ ນັກທ່ອງທ່ຽວຕ່າງປະເທດທີ່ມາຈາກອາເມລິກາ,ອົດສະຕຣາລີ,ເບນຊິກ ແລະ ແອັດສະປາຍເປັນຕົ້ນ,ຕ່າງກໍ່ຈັບກ້ອງຖ່າຍຮູບໄວ້ເພື່ອເປັນທີ່ລະນຶກ.

ທ່ານ ກາວຫານ ແລະ ພັນລະຍາທີ່ມາຈາກເບນຊິກມາທ່ອງທ່ຽວທີ່ຊິນຈຽງເປັນຄັ້ງທຳອິດ,ເຂົາໄດ້ເວົ້າວ່າ,ການຄ້າຂາຍທີ່ປາຈາເປັນໜ້າອັດສະຈັນ,ຢູ່ບ່ອນນີ້ສາມາດປະກົດເຫັນໄດ້ອັນທີ່ຈັບໃຈເປັນຈຳນວນຫລາຍ.

ຢູ່ຕະຫລາດການຄ້າສາກົນອາຊີກາງ ແລະ ອາຊີຕາເວັນອອກຄາສີທີ່ມີຊື່ສຽງດັ່ງດັງ,ພວກພໍ່ຄ້າໃນຮ້ານຂາຍໝາກໄມ້ແຫ້ງ,ຮ້ານເຄື່ອງຫັດຖະກຳ ແລະ ເຄື່ອງນຸ່ງຖື,ຕ່າງກໍ່ທັງຕໍ່ລາຄາກັບລູກຄ້າ,ທັງຊວນຄົນທັງຫລາຍເຂົ້າໄປຊົມໃນຮ້ານ.ນັກທ່ອງທ່ຽວບາງຄົນຖ່າຍຮູບລະນຶກ,ບາງຄົນຊອກຫາສິນຄ້າທີ່ຕົນເອງມັກ,ບາງຄົນພັດໄດ້ຫິ້ວກະເປົານ້ອຍໃຫຍ່ທີ່ໃສ່ເຕັມກັບບ້ານແລ້ວ.

## 世博会带来旅游新契机

2008 年 6 月至 9 月西班牙萨拉戈萨世博会期间，据当地旅游局统计，萨拉戈萨接待游客数量比 2007 年同期增长了将近 42%，共计 40.9 万人次在该市至少停留一晚，其中 23% 为外国游客，这给西班牙旅游业带来了一大笔利润。

根据目前预测，上海世博会平均日游客量将达 30 万以上，这笔预计将达到 7000 万人次，包括 350 万海外游客的大单，将给金融危机下饱经风霜的中国旅游业，尤其是长三角地区带来一场及时雨。

# ງານເອກສະໂປໂລກນຳເອົາໂອກາດໃໝ່ໃຫ້ແກ່ການທ່ອງທ່ຽວ




ພູຕຸງຊຽງໄຮ 上海浦东 新华社 图

ວັນທີ 9 ເດືອນ 6 ປີ 2008, ໄລຍະງານເອກສະໂປສັກລາໂກສແອດສະປາຍ, ອີງຕາມການສະຖິຕິຂອງກົມທ່ອງທ່ຽວທ້ອງຖິ່ນ, ຈຳນວນຮັບແຂກທ່ອງທ່ຽວຂອງສັກລາໂກສໄດ້ເພີ່ມຂຶ້ນເກືອບ 42% ທຽບໃສ່ປີ 2007 ເວລາດຽວກັນ, ລວມທັງໝົດມີ 409 ພັນເທື່ອຄົນພັກເຊົາຢູ່ໃນຕົວເມືອງນີ້ຢ່າງໜ້ອຍ 1 ຄືນ, ໃນນັ້ນມີ 23% ແມ່ນແຂກທ່ອງທ່ຽວຕ່າງປະເທດ, ອັນໄດ້ນຳເອົາກຳໄລເປັນຈຳນວນຫລວງຫຼາຍໃຫ້ແກ່ການທ່ອງທ່ຽວຂອງແອດສະປາຍ.




ອີງຕາມການຄາດຄະເນລ່ວງໜ້າໃນປັດຈຸບັນນີ້, ຈຳນວນແຂກທ່ອງທ່ຽວຂອງເອກສະໂປໂລກຊຽງໄຮ ສະເລ່ຍບັນລຸ 3 ແສນຄົນຕໍ່ມື້ຂຶ້ນໄປ, ຈຳນວນຄາດຄະເນດັ່ງກ່າວນີ້ຈະບັນລຸເຖິງ 70 ລ້ານເທື່ອຄົນ. ລວມທັງຈຳນວນສ່ວນຫຼາຍຂອງແຂກທີ່ມາຈາກພື້ນທະເລ, ຈະນຳເອົານ້ຳຝົນທັນກັບເວລາຣຸດໜຶ່ງໃຫ້ແກ່ການທ່ອງທ່ຽວຂອງຈີນ ໂດຍສະເພາະແມ່ນເຂດສາມຫລ່ຽມແມ່ນ້ຳຢາງຊີກຽງທີ່ໄດ້ຜ່ານຟ້າຝົນລົມແດງໃຕ້ວິກິດການການເງິນ.

**ເທສະການທ່ອງທ່ຽວຊຽງໄຮເຮັດໃຫ້ການທ່ອງທ່ຽວເຂດສາມຫລ່ຽມຢາງຊີກຽງຮ້ອນຂຶ້ນ**

ວັນທີ 12 ກັນຍາ, ເທສະການທ່ອງທ່ຽວຊຽງໄຮໄດ້ເປີດສາກທີ່ຮ່ອມພູບັນເທີນຊົມຈຽງເຊີ່ງແມ່ນພະແນກທ່ອງທ່ຽວຊຽງໄຮ, ຈຽງຊູ, ເຈີ້ຈຽງຮ່ວມກັນເປັນຜູ້ວາງແຜນ ແລະ ຈັດວາງສາຍທ່ອງທ່ຽວເອກສະໂປ 55 ສາຍດຳເນີນການຊ້ອມສະແດງເພື່ອກະກຽມການຕ້ອນຮັບເອກສະໂປຊຽງໄຮໃນປີໜ້ານີ້. ສາຍທ່ອງທ່ຽວຍອດກະທິ 55 ສາຍດັ່ງກ່າວນີ້ປະກອບດ້ວຍຜະລິດຕະພັນການທ່ອງທ່ຽວເຊັ່ນ: ຮີດຄອງພື້ນແຜ່ນຕົວເມືອງ, ພັກຜ່ອນຢ່ອນອາລົມໃນຊົນນະບົດ, ອາຫານແຊບ ແລະ ຊອບປິ້ງ(ຊື້ເຄື່ອງ), ຮີດຄອງປະເພນີຄຸ້ມບ້ານບູຮານ, ການກິລາແລະ ວັດທະນະທຳເປັນຕົ້ນ, ແຂກທ່ອງທ່ຽວຈະສາມາດດຳເນີນການສຳຜັດລວງເລິກທີ່ເປັນຫົວຂໍ້ຕາມຄວາມມັກຮັກຂອງຕົນໄດ້. ຄຳຂວັນ "ການທ່ອງທ່ຽວເຮັດໃຫ້ຊີວິດການເປັນຢູ່ຍິ່ງສວຍງາມດີ" ແລະ "ຕົວເມືອງເຮັດໃຫ້ຊີວິດການເປັນຢູ່ຍິ່ງສວຍງາມດີ" ໄດ້ກາຍເປັນຫົວຂໍ້ຫຼັກໃນພິທີເທສະການການທ່ອງທ່ຽວຊຽງໄຮ.

ຊຽງໄຮເຊິ່ງເປັນສະຖານທີ່ຈັດງານເອກສະໂປໂລກ ແລະ ເຂດບໍລິເວນຂອງມັນ ໂດຍບໍ່ຕ້ອງສົງໄສເປັນຜູ້ໄດ້ປະໂຫຍດຫຼາຍທີ່ສຸດຈາກງານມະໂຫລານການທ່ອງທ່ຽວຄັ້ງນີ້. ຕາມການຄາດຄະເນລ່ວງໜ້າຂອງອົງການທ່ອງທ່ຽວໂລກ, ຜູ້ຊົມຕ່າງປະເທດໄລຍະງານເອກສະໂປໂລກຊຽງໄຮນັ້ນ, 95% ມີຄວາມຮຽກຮ້ອງຕ້ອງການພັກເຊົາຢູ່ທີ່ນີ້, ຍັງມີ 38% ສືບຕໍ່ໄປທ່ອງທ່ຽວຢູ່ອ້ອມເຂດສາມຫລ່ຽມແມ່ນ້ຳຢາງຊີກຽງ, ຈະກະຕຸ້ນເສດຖະກິດໂດຍກົງຕໍ່ເຂດທ່ອງທ່ຽວ, ໂຮງແຮມ, ຮ້ານອາຫານ, ການຄົມມະນາຄົມ ແລະ ສະຖານທີ່ພັກຜ່ອນຢ່ອນອາລົມນ້ອຍໃຫຍ່ອ້ອມຂ້າງເຂດດັ່ງ

ກ່າວນີ້.ຕາມທີ່ຮັບຮູ້ວ່າ,ມີຄະນະທ່ອງທ່ຽວບໍ່ໜ້ອຍທີ່ມາເຂົ້າຮ່ວມງານເອກສະໂປໂລກຊຽງໄຮນັ້ນໄດ້ເລືອກເອົາຕົວເມືອງທ່ອງທ່ຽວໃນອ້ອມແອ້ມຊຽງໄຮເປັນບ່ອນພັກເຊົາ.ຢູ່ໃນການເຄື່ອນໄຫວສົ່ງເສີມແນະນຳຜະລິດຕະພັນການທ່ອງທ່ຽວຍີ່ປຸ່ນ,ສ.ເກົາຫລີທີ່ຈັດຂຶ້ນຢູ່ຫາງໂຈວໃນເດືອນ 8 ນັ້ນ,ກໍມີບໍລິສັດທ່ອງທ່ຽວທີ່ບໍ່ໜ້ອຍໄດ້ຮັບໃບສັ່ງຈອງທີ່ພັກເຊົາຂອງເອກສະໂປໂລກຊຽງໄຮ.

## ຜະລິດຕະພັນເອກສະໂປໂລກທຸກປະເພດໄດ້ຜະລິດອອກ

ຫວ່າງມໍ່ໆມານີ້,ຜະລິດຕະພັນ "ການທ່ອງທ່ຽວເອກສະໂປໂລກຊຽງໄຮເປັນວັນດຽວໂດຍສາຍໄວປີ 2010 "ໄດ້ຈຳໜ່າຍໃນເວັບໄຊທ່ອງທ່ຽວຢ່າງເປັນທາງການ,ນີ້ແມ່ນຜະລິດຕະພັນການທ່ອງທ່ຽວເອກສະໂປໂລກງວດທຳອິດໃນຂົງເຂດປັກກິ່ງ.ຕາມທີ່ຮັບຮູ້ວ່າ, "ການທ່ອງທ່ຽວເອກສະໂປໂລກເປັນວັນດຽວໂດຍສາຍໄວ",ປັດຈຸບັນນີ້,ມີຈຸດອອກເດີນທາງຂອງລົດບັສ 10 ແຫ່ງ,ຈະອຳນວຍຄວາມສະດວກໃຫ້ແກ່ຊາວເມືອງອອກເດີນ,ການແຈ້ງລາຄາຂອງມັນປະກອບດ້ວຍປີ້ຜ່ານປະຕູສວນໂລກຊຽງໄຮແລະຄ່າປີ້ລົດບັສໃຫຍ່ຮັບສົ່ງແຂກພາຍໃນຕົວເມືອງຊຽງໄຮ.

ເພື່ອຢາກໄດ້ການປັ່ນຜົນສ່ວນໜຶ່ງຈາກການທ່ອງທ່ຽວເອກສະໂປໂລກຊຽງໄຮ,ບັນດາບໍລິສັດທ່ອງທ່ຽວ ຂະໜາດໃຫຍ່ ຫຼື ນ້ອຍພາຍໃນປະເທດໄດ້ດຳເນີນການເຄື່ອນໄຫວແຕ່ດົນແລ້ວ.ເດືອນ11ປີກາຍນີ້,ບໍລິສັດໃຫຍ່ທ່ອງທ່ຽວສາກົນແຫ່ງຊາດຈີນໄດ້ສ້າງຕັ້ງສຳນັກງານໃຫຍ່ຂົງເຂດຮວາຕຸງຂອງບໍລິສັດທ່ອງທ່ຽວສາກົນແຫ່ງຊາດຈີນຢ່າງເປັນທາງການໃນໂອກາດເທສະການແລກປ່ຽນການທ່ອງທ່ຽວຊຽງໄຮປີ 2008,ບຸກຄົນພາຍໃນວ່າ,ບໍລິສັດໃຫຍ່ສາກົນແຫ່ງຊາດຈີນເອົາບາດກ້າວທີໜຶ່ງຂອງ "ສຳນັກງານໃຫຍ່ສາມຂົງເຂດ "ໄວ້ຢູ່ໃນເຂດຮວາຕຸງ,ໝາຍຄວາມວ່າຢາກຖືໂອກາດເອກສະໂປໂລກເພື່ອຂະຫຍາຍກິດຈະການທ່ອງທ່ຽວ.ມີ 24 ບໍລິສັດທ່ອງທ່ຽວທີ່ນອນຢູ່ໃນບັນຊີລາຍຊື່ບໍລິສັດທ່ອງທ່ຽວທີ່ຖືກຄັດເລືອກບົ່ງໄວ້ເປັນບໍລິສັດທ່ອງທ່ຽວເອກສະໂປໂລກຊຸດທີໜຶ່ງໃນເດືອນ 4 ປີນີ້ກໍໄດ້ທະຍອຍກັນອອກແບບສາຍທ່ອງທ່ຽວຈຳນວນໜຶ່ງໃນໄວໆນີ້,ແນ່ໃສ່ເງື່ອນໄຂແຕກຕ່າງກັນຄືະຈຸດພິເສດແຫຼ່ງແຂກ,ທ່າແຮງຂອງຕົນເປັນຕົ້ນມາດຳເນີນການໂຮມເຂົ້າຊັບພະຍາກອນການທ່ອງທ່ຽວ.ທຽບໃສ່ກັບຊື້ປີ້ແຂກຍ່ອຍເຂົ້າໄປຊົມເບິ່ງເອງ,ຜູ້ທີ່ເຂົ້າຮ່ວມທີມຄະນະທ່ອງທ່ຽວນັ້ນສາມາດໄດ້ຮັບບໍລິການນຳທ່ຽວວິຊາສະເພາະ ແລະ ບໍລິສັດໃຊ້ລົດສະເພາະໄປກັບຮັບສົ່ງຕາມເວລາກຳນົດໄດ້.ຍັງຈະສາມາດຄັດເລືອກຫໍສະໜາມດ່ວນຮ້ອນສຸດມັດເວລາເຂົ້າປະຕູ,ແຮ່ງປະຢັດເວລາ.

ນອກຈາກຮາດແວ່ແລ້ວ,ກຳລັງຊ໋ອບແວ່ໃນການຕ້ອນຮັບການທ່ອງທ່ຽວເອກສະໂປໂລກກໍໄດ້ຈັດວາງຢູ່ໃນວາລະວຽກງານປະຈຳວັນຢ່າງເປັນທາງການ.ເພື່ອໃຫ້ແຂກກິນນອນອອກເດີນມີຄວາມສະດວກດີຢູ່ທີ່ຊຽງໄຮ,ໃນມໍ່ໆນີ້,ບັດຍິນດີຕ້ອນຮັບແຂກມາທ່ອງທ່ຽວຊຽງໄຮທີ່ມີບົດບາດລົດເປີເຊັນກໍໄດ້ປະກົດເຫັນຢ່າງຈັດແຈ້ງຢູ່ໃນຊຽງໄຮ.ໃນຄຸ້ມຖະໜົນທີ່ສຳຄັນ,ເຂດທິວທັດ,ສະໜາມບິນ,ສະຖານີລົດ,ທ່າເຮືອແລະພາຍໃນສວນໂລກນັ້ນກໍໄດ້ ເພີ່ມຕື່ມສ້າງຕັ້ງສູນ(ຈຸດ)ຊັກຖາມ ຫຼື "ລະບົບຂໍ້ມູນຂ່າວສານການທ່ອງທ່ຽວແບບບາຍຈັບ "ດ້ວຍຕົນເອງ,ສະໜອງເອກະສານໂຄສະນາທ່ອງທ່ຽວໂດຍບໍ່ເສຍຄ່າ ແລະ ສະໜອງບໍລິການພາສາຕ່າງປະເທດຫຼາຍພາສາເປັນຕົ້ນ.

## ກິດຈະການທ່ອງທ່ຽວເຂດຕ່າງໆໄດ້ຕິດປ້າຍເອກສະໂປໂລກຢ່າງຄ່ອງແຄ່ວ

ເວົ້າສຳລັບແຂກທ່ອງທ່ຽວຕ່າງປະເທດມາຢ້ຽມຊົມງານເອກສະໂປໂລກຊຽງໄຮແມ່ນຖືໂອກາດນີ້ສະໜອງກາລະໂອກາດທີ່ດີມາຊົມເບິ່ງທັດສະນີຍະພາບຕ່າງໆຂອງຈີນ.ອັນນີ້ໄດ້ນຳເອົາຜົນສະທ້ອນການທ່ອງທ່ຽວຈາກເອກສະໂປໂລກສົ່ງລັດສະໝີແຜ່ຂະຫຍາຍໄປແຫ່ງຕ່າງໆໃນທົ່ວປະເທດຈາກເຂດສາມຫລ່ຽມແມ່ນ້ຳຢາງຊືກຽງ.

ຫວ່າງມໍ່ໆນີ້,ເວທີປາໄສຊິນຈຽງເອກສະໂປໂລກເຊິ່ງແມ່ນ "ການພົ້ນຂຶ້ນຂອງຕົວເມືອງທ່ອງທ່ຽວອາຊີກາງ "ເປັນຫົວຂໍ້ໄດ້ຈັດຂຶ້ນທີ່ນະຄອນອູລູມູຈີ. "ງານເອກສະໂປໂລກແລະຈິດສຳນຶກຂອງກິດຈະການທ່ອງທ່ຽວມີສິ່ງທີ່ຮ່ວມກັນກໍຄືະຈະຕ້ອງມີການ

ປະກົດ,ປະດິດສ້າງໃໝ່ແລະສະແດງອອກ. "ນາງປາງຈາງຜີນ ນັກຄົ້ນຄວ້າສະຖາບັນຄົ້ນຄວ້າພູມສາດ ແລະ ນິເວດວິທະຍາຊີນຈຽງຂອງສະຖາບັນວິທະຍາສາດແຫ່ງປະເທດຈີນເຫັນວ່າ,ການທີ່ຈັດງານເອກສະໂປໂລກຊຽງໄຮຈະເປັນການຊຸກຍູ້ການພັດທະນາກິດຈະການທ່ອງທ່ຽວອູລູມູຈີແລະຊີນຈຽງໂດຍຜ່ານເວທີເອກສະໂປໂລກດັ່ງກ່າວນີ້,ເຮັດໃຫ້ຊັບພະຍາກອນພິເສດ ແລະ ຊັບໃນດິນສິ່ງໃນນ້ຳຂອງຊີນຈຽງເຂົ້າສູ່ຕະຫລາດສາກົນໂດຍຜ່ານຊ່ອງທາງທີ່ກວ້າງກວ່າເກົ່າອີກເພື່ອດູດດຶງຄົນຍິ່ງຫຼາຍກວ່າເກົ່າມາລົງທຶນ ແລະ ທ່ອງທ່ຽວ.

ເວທີປາໄສດັ່ງກ່າວນີ້ແມ່ນປະກອບສ່ວນຂອງສັບປະດາໂຄສະນາຊີນຈຽງຂອງເອກສະໂປໂລກຊຽງໄຮ,ກ່ອນຈະມາເຖິງຊີນຈຽງ,ເອກສະໂປໂລກໄດ້ມາເຖິງນິນເຊຍ,ຕີເບດດຳເນີນການໂຄສະນາສົ່ງເສີມແລ້ວ,ຫວ່າງແລ້ວນີ້ໄດ້ໂຄສະນາຢູ່ໜຽວນິນ,ຕໍ່ມາຈະຕ້ອງເດີນເຂົ້າສູ່ມົງໂກນໃນ,ການເຄື່ອນໄຫວຊຸກຍູ້ສົ່ງເສີມເອກສະໂປໂລກຢ່າງຖີ່ຖ້ວນແບບນີ້ບໍ່ພຽງແຕ່ໄດ້ເພີ່ມຄວາມເລິກແລະຄວາມກວ້າງໃນການໂຄສະນາເອກສະໂປໂລກເທົ່ານັ້ນ,ຍັງໄດ້ສ້າງເວທີຕິດຕໍ່ຊັບພະຍາກອນທ່ອງທ່ຽວແຫ່ງຕ່າງໆກັບເອກສະໂປໂລກຊຽງໄຮ.ເພື່ອຂຶ້ນທັນລົດເອກສະໂປໂລກ,ແຫ່ງຕ່າງໆໄດ້ວາງວິທີແປກປະຫລາດຂອງໃຜລາວ,ບາງຄົນຖືໂອກາດຮ້ອນຂອງເອກສະໂປໂລກດຳເນີນການຊູກຍູ້ແນະນຳເອົາເອງ,ດູດດຶງແຂກທ່ອງທ່ຽວດ້ວຍທັດສະນີຍະພາບພິເສດ ແລະ ຮີດຄອງປະເພນີຂອງຕົນ,ຕົວຢ່າງຄື:ທ້າຍເດືອນ 8,ກຸຍໂຈວກໍໄດ້ດຳເນີນການເຄື່ອນໄຫວຊຸກຍູ້ທີ່ຊຽງໄຮເປັນເວລາໜຶ່ງອາທິດ,ໄດ້ຕ້ອນຮັບທ່ານຜູ້ຊົມລວມ 20 ພັນກວ່າຄົນ;ຍັງມີບາງຄົນເອົາປັດໃຈເອກສະໂປໂລກ ເຊື່ອມເຂົ້າໃນການເຄື່ອນໄຫວທີ່ເປັນມູນເຊື້ອຫຼື ການເຄື່ອນໄຫວສະຫລອງວັນເທສະການ.ຕົວຢ່າງຄືບຸນເທສະການການທ່ອງທ່ຽວຊາງຊູແຂວງຈຽງຊູກໍຈະຕ້ອງຈັດກອງປະຊຸມສຸດຍອດປາຖະກະຖາເອກສະໂປໂລກ ແລະ ການພັດທະນາທ່ອງທ່ຽວ.



ວັນທ່ອງທ່ຽວຊຽງໄຮປີ 2009 ໄດ້ເປີດສາກ.ຂະບວນລົດປະດັບດອກໄມ້ເດີນຂະບວນຢ່າງຂະໜາດໃຫຍ່
2009 上海旅游节开幕 花车大巡游盛装亮相 CFP 图



# ຢຸນນານເລັ່ງລັດການສ້າງ ສາດ່ານເອເລັກໂຕຼນິກ

ລະບົບແຈ້ງການກວດກາໃນອິນເຕີເນັດປະດິດສ້າງ "ດ່ານເອເລັກໂຕຼນິກ"
网上报检系统打造 " 电子口岸 " 新华社 图

## 云南加快电子口岸建设

近年来，云南省对外开放工作和口岸建设迎来了快速发展时期，相继出台了《云南省人民政府关于加快通关便利化的若干意见》等政策性文件，并积极实施 7 大举措，使全省口岸建设和口岸通关便利化进程不断加速。

ໃນຊຸມປີໃກ້ໆມານີ້, ວຽກງານເປີດປະຕູສູ່ໂລກພາຍນອກ ແລະ ການສ້າງສາດ່ານຂອງແຂວງຢຸນນານໄດ້ກ້າວເຂົ້າສູ່ໄລຍະຂະຫຍາຍຕົວຢ່າງວ່ອງໄວ, ໂດຍໄດ້ປະກາດໃຊ້ເອກະສານລັກສະນະນະໂຍບາຍຄື "ຄວາມເຫັນຂອງອຳນາດການປົກຄອງປະຊາຊົນແຂວງຢຸນນານກ່ຽວກັບການເລັ່ງລັດອຳນວຍຄວາມສະດວກໃນການຜ່ານດ່ານ" ເປັນຕົ້ນ, ພ້ອມທັງຈັດຕັ້ງປະຕິບັດມາດຕະການ 7 ປະການຢ່າງຫ້າວຫັນ, ເຮັດໃຫ້ການສ້າງສາດ່ານ ແລະ ຂະບວນວິວັດແຫ່ງການອຳນວຍຄວາມສະດວກໃນການຜ່ານດ່ານໃນທົ່ວແຂວງໄດ້ເລັ່ງລັດໃຫ້ໄວເຂົ້າຢ່າງບໍ່ຢຸດຢັ້ງ.

ປັບປຸງລະບົບໃຫ້ກົມກຽວກັນ, ຊຸກຍູ້ຊຸກຍູ້ພະຍາກອນຄືນໃໝ່. ໄດ້ສ້າງຕັ້ງໜ່ວຍຄຸ້ມຄອງນຳພາການສ້າງສາດ່ານ, ໂດຍເພີ່ມທະວີການນຳພາຢ່າງເປັນເອກະພາບຕໍ່ວຽກງານຄຸ້ມຄອງການສ້າງສາດ່ານ; ພະແນກການຄ້າແຂວງຢຸນນານຕິດປ້າຍຫ້ອງການດ່ານອຳນາດການປົກຄອງພ້ອມທັງຈັດຕັ້ງຂະແໜງວາງແຜນ ແລະພັດທະນາດ່ານ, ຂະແໜງດ່ານທາງບົກ ແລະ ຂະແໜງດ່ານທາງນ້ຳ ແລະ ທ່າອາກາດສະຍານ. ປະຈຸບັນ, ສະພາບລະບົບຄຸ້ມຄອງ "ລະບົບມີອັນບົກພ່ອງ, ກົງຈັກການຈັດຕັ້ງອ່ອນເພຍ; ພາລະບົດບາດບໍ່ຄົບຖ້ວນ, ການປະສານງານອ່ອນເພຍ; ຂາດການຄຸ້ມຄອງ, ມາດຕະການອ່ອນເພຍ" ຂອງດ່ານແຂວງຢຸນນານໃນເມື່ອກ່ອນແມ່ນໄດ້ຮັບການແກ້ໄຂໂດຍພື້ນຖານ.

ຈັດຕັ້ງປະຕິບັດແຜນພັດທະນາດ່ານໃຫ້ປະກົດເປັນຈິງ. ໃນດ່ານປະເພດໜຶ່ງ(ດ່ານລະດັບຊາດ)ໄດ້ກຳນົດເອົາເຫີໂຂວ, ຢຸຍລີ, ບໍ່ຫານ ແລະ ໂຫສຽວເມືອງເຖິງຊົງເປັນດ່ານກໍ່ສ້າງທີ່ເປັນຈຸດໜັກ; ກຳນົດເອົານານສັນ, ອີງຈຽງ, ເມີງລຽນເຊິ່ງເປັນດ່ານປະເພດທີສອງ(ດ່ານລະດັບແຂວງ) ແລະ ເມີງຄຳດ່ານທີ່ກຽມຈະເປີດໃໝ່ເປັນດ່ານເປົ້າໝາຍໃຫ້ໄດ້ລະດັບຄາດໝາຍທີ່ເປັນຈຸດໜັກໃນປີ 2009; ດ່ານອື່ນຄາດວ່າຈະສ້າງສຳເລັດ ແລະ ເປີດບໍລິການໃນປີ 2010. ປະຈຸບັນ, ກິດຈະກຳຫລັກຂອງສູນກວດກາປະຕູດຽວຂອງດ່ານທາງຫລວງເຫີໂຂວໄດ້ສ້າງສຳເລັດແລ້ວ; ຂົວຂ້າມແມ່ນ້ຳຫົງເຫີຈີນ- ຫວຽດນາມໄດ້ເຮັດສຳເລັດໂດຍພື້ນຖານ; ສະໜາມກວດກາສິນຄ້າທີ່ມີມາດຕະຖານສູງຢູ່ດ່ານຢຸຍ

ລິຄາດວ່າຈະເຮັດສຳເລັດໃນທ້າຍປີນີ້; ສູນກວດກາປະຕູດຽວຢູ່ດ່ານບໍ່ຫານກຽມຈະດຳເນີນການທົດລອງ; ເຄື່ອງອຸປະກອນກວດກາທີ່ສ້າງໃໝ່ຢູ່ດ່ານໂຫສຽວເມືອງເຖິງຊົງເລີ່ມການກະກຽມໄລຍະລ່ວງໜ້າ; ແຜນລວມຂອງດ່ານຄືດ່ານປຸຍລີ,ຫວັນຕິງ ແລະ ຕາລໍເປັນຕົ້ນໄດ້ຜ່ານການປະເມີນຜົນ ແລະ ຮັບຮອງ.

ໃຊ້ເງິນທຶນສະເພາະກິດສ້າງດ່ານ.ເພື່ອເລັ່ງລັດການສ້າງສາດ່ານແຂວງຢຸນນານ ແລະ ສົ່ງເສີມໃຫ້ອຳນວຍຄວາມສະດວກໃນການຜ່ານດ່ານ,ແຕ່ປີ 2009 ເຖິງປີ 2012,ອຳນາດການປົກຄອງແຂວງຢຸນນານແຕ່ລະປີຈັດວາງເງິນທຶນສະເພາະກິດສຳຫລັບດ່ານບໍ່ຕ່ຳກວ່າ 220 ລ້ານຢວນ.ເພື່ອເພີ່ມທະວີ ແລະ ປັບປຸງການຄຸ້ມຄອງຕໍ່ການນຳໃຊ້ເງິນທຶນສະເພາະກິດໃນການກໍ່ສ້າງດ່ານໃຫ້ເຂົ້າລະບົບລະບຽບ,ພະແນກການຄ້າແຂວງຢຸນນານໄດ້ຮ່າງ "ວິທີຄຸ້ມຄອງເງິນທຶນສະເພາະກິດດ່ານແຂວງ" (ສະບັບທົດລອງ) , ໂດຍໄດ້ກຳນົດຢ່າງຈະແຈ້ງຫລັກການຈັດວາງທຶນ ແລະ ການສະເໜີ,ພິຈາລະນາ,ອະນຸມັດ ແລະ ຕິດຕາມກວດກາຄຸ້ມຄອງ,ອັນໄດ້ສະໜອງຄວາມຮັບປະກັນທາງນະໂຍບາຍໃຫ້ແກ່ການຈັດຕັ້ງປະຕິບັດເງິນທຶນສະເພາະກິດດ່ານແຂວງໃຫ້ເກີດມີປະສິດທິຜົນ.

ດຳເນີນການສຳຫລວດຄົ້ນຄວ້າດ່ານກັບທີ່.ພາກສ່ວນທີ່ກ່ຽວຂ້ອງຄືພະແນກການຄ້າ,ຄະນະກຳມະການປະຕິຮູບ ແລະ ພັດທະນາ,ພະແນກການເງິນ ແລະ ຫ້ອງການພົວພັນການຕ່າງປະເທດແຂວງຢຸນນານເປັນຕົ້ນ,ໄດ້ແບ່ງເປັນຊຸດເປັນໜ່ວຍ,ດຳເນີນການສຳຫລວດຄົ້ນຄວ້າໂດຍທົ່ວໄປຢ່າງລະອຽດຕໍ່ສະພາບການກໍ່ສ້າງສະຖານທີ່ເຄື່ອງອຸປະກອນກວດກາຮ່ວມກັນ ແລະ ສະພາບອຳນວຍຄວາມສະດວກໃນການດ່ານດ່ານທີ່ຢູ່ 19 ດ່ານ ແລະ 10 ກວ່າຊ່ອງທາງຈຸດໜັກຂອງ 8 ກິ່ງແຂວງ ແລະ ນະຄອນຊາຍແດນຄືອຸນຊານ,ຫົງເຫີ,ຜູເອີ,ປັນນາ,ຫລິນຊາງ,ເຕີຫົງ,ປາວຊານ ແລະ ນູຈຽງ,ເພີ່ມທະວີການຊີ້ນຳຕາມປະເພດ ແລະ ການປະສານງານກັນ,ເພື່ອສະໜອງຄວາມເຫັນຮັບມື ແລະ ຂໍ້ສະເໜີໃຫ້ແກ່ມາດຕະການອຳນວຍຄວາມສະດວກຜ່ານດ່ານ.

ພາກສ່ວນກ່ຽວຂ້ອງວາງມາດຕະການປະຕິບັດ. ໂດຍປະຕິບັດຕາມຄວາມຮ້ອງຂໍຂອງຄະນະພັກ,ຄະນະປົກຄອງແຂວງທີ່ມີຕໍ່ການອຳນວຍຄວາມສະດວກໃນການຜ່ານດ່ານ,ຫົວໜ່ວຍທີ່ກ່ຽວຂ້ອງຂອງແຕ່ລະດ່ານໄດ້ວາງ ແລະ ປະຕິບັດວິທີ ແລະ ມາດຕະການໃນການຈັດຕັ້ງປະຕິບັດໃຫ້ອຳນວຍຄວາມສະດວກໃນການຜ່ານດ່ານອີກຮອບໜຶ່ງ.ພາກສ່ວນທີ່ກ່ຽວຂ້ອງຄືພະແນກຄົມມະນາຄົມແຂວງໄດ້ຕັ້ງໜ້າປະສານສົມທົບບັນຫາອຳນວຍຄວາມສະດວກຜ່ານດ່ານຕາມເສັ້ນທາງຫລວງຄຸນມິງ-ກຸງເທບ, ໂດຍຖືເອົາການຂົນສົ່ງດ້ວຍລົດຂອງຈີນຫລືໄທໂດຍກົງເປັນຈຸດເລີ່ມ,ຊຸກຍູ້ໃຫ້ເຮັດໄປກ່ອນ ແລະ ທົດລອງໄປກ່ອນ.

ຊຸກຍູ້ການກໍ່ສ້າງດ່ານເອເລັກໂຕຼນິກ.ດ່ານເອເລັກໂຕຼນິກຢຸນນານໄດ້ເຂົ້າເນັດແລ່ນທົດລອງໃນທ້າຍເດືອນ 6 ,ວັນທີ 21 ກໍລະກົດ,ອຳນາດການປົກຄອງໄດ້ເຊັນບົດບັນທຶກຊົງຈຳກ່ຽວກັບການຮ່ວມມືດ່ານເອເລັກໂຕຼນິກຢຸນນານກັບສຳນັກງານໃຫຍ່ດ່ານພາສີແຫ່ງຊາດຢ່າງເປັນທາງການ.ໃນຂັ້ນຕໍ່ໄປ,ຈະເລັ່ງລັດດຳເນີນການຊັບຊ້ອນ ແລະ ພັດທະນາໂຄງການຜ່ານດ່ານ,ຊຸກຍູ້ ແລະ ຊັບຊ້ອນຊັບພະຍາກອນຂໍ້ມູນຂ່າວສານຂອງທຸກຝ່າຍປະຈຳດ່ານ,ເພື່ອບັນລຸໃຫ້ໄດ້ມີຂໍ້ມູນຂ່າວສານພ້ອມກັນ ແລະ ຕໍ່ເນັດກັນກວດກາທີ່ຂ້າມເຂດ,ຂ້າມພາກສ່ວນ ແລະ ຂ້າມຂະແໜງການ,ຍົກສູງຄວາມອັດຕະໂນມັດຂອງຂັ້ນຕອນຜ່ານດ່ານ ແລະ ປະສິດທິພາບໃນການຜ່ານດ່ານ.

ລົງເລິກການຮ່ວມມືທັງພາຍໃນ ແລະ ຕ່າງປະເທດ.ສ້າງຕັ້ງໜ່ວຍງານຮ່ວມການສ້າງສາດ່ານທາງຫລວງເຫີໂຂວແຂວງຢຸນນານ,ຮ່ວມກັນກັບຝ່າຍຫວຽດນາມຊຸກຍູ້ຂະບວນວິວັດເປີດປະຕູຂອງດ່ານ ແລະ ການຂະຫຍາຍຕົວຂອງເສດຖະກິດດ່ານສອງຝ່າຍ; ໄດ້ເຊັນ "ຂອບສັນຍາກ່ຽວກັບການຮ່ວມມືດ່ານ 9 ເຂດແຂວງໃນອົງເຂດແພນສາມຫລ່ຽມແມ່ນ້ຳຈູຈຽງ "ກັບຫ້ອງການດ່ານ 9 ເຂດແຂວງໃນເຂດແພນສາມຫລ່ຽມແມ່ນ້ຳຈູຈຽງ; ໄດ້ຈັດກອງປະຊຸມສຳມະນາລະຫວ່າງປະເທດກ່ຽວກັບການອຳນວຍຄວາມສະດວກໃນການຂົນສົ່ງ ແລະ ຈໍລະຈອນສິນຄ້າ( ໂລຈິດສະຕິກ)ຕາມເສັ້ນທາງຄຸນມິງ-ກຸງເທບ ແລະ ອື່ນໆ.




# 60ປີ ສປ ຈີນ

ໂດຍ:ສີຄູນ ບຸນວິໄລ

## 中国六十年

文 / 西昆 · 本维莱

中国位于亚洲东部、太平洋西岸，是有着几千年悠久历史和灿烂文化的伟大国家。自 1978 年 12 月 18 日—23 日，中共十一届三中全会的召开，确立了邓小平提出的改革开放政策，从此中国人民在建设中国特色社会主义事业方面取得了显著成效，经济迅速发展，国家逐渐由弱变强。

ປະເທດຈີນຕັ້ງຢູ່ພາກຕາເວັນອອກຂອງທະວີບອາຊີ ແລະ ຝັ່ງຕາເວັນຕົກຂອງມະຫາສະມຸດປາຊີຟິກແມ່ນປະເທດທີ່ມີປະຫວັດສາດອັນຍາວນານຫລາຍພັນປີ,ມີວັດທະນະທຳເກົ່າແກ່ ແລະຈະເລີນຮຸ່ງເຮືອງ.

ກ່ອນໜ້ານີ້ 60 ປີປະເທດຈີນອັນກວ້າງໃຫຍ່ໄພສານຍັງເປັນປະເທດເຄິ່ງສັກດີນາ ແລະ ເຄິ່ງເມືອງຂຶ້ນ.ການປະຕິວັດຊິນໄຮ້(Xin Hai )ວັນທີ 10 ຕຸລາ 1911 ນຳພາໂດຍທ່ານ ດຣ.ຊຸນຢັດເຊັນສຳເລັດຜົນ,ໄດ້ໂຄ່ນລົ້ມລະບອບສັກດີນາທີ່ປົກຄອງປະເທດຈີນມາເປັນເວລາຫຼາຍພັນກ່ວາປີ.ແຕ່ເສັ້ນທາງເດີນຂອງປະເທດກໍຍັງຄົດໂຄ້ງຢູ່.

ຈາກຊຸມປີ 20 ສະຕະວັດ 20 ທີ່ຜ່ານມາປະຊາຊົນຈີນອັນໄພສານໃຕ້ການນຳພາຂອງພັກກອມມູນິດຈີນໄດ້ຕໍ່ສູ້ຢ່າງທໍລະຫົດອົດທົນ ແລະ ເສຍສະຫລະສຳເລັດຜົນຢ່າງມີໄຊ,ສະຖາປະນາສາທາລະນະລັດປະຊາຊົນຈີນຂຶ້ນໃນວັນທີ 1 ຕຸລາ 1949 ຢ່າງສະຫງ່າຜ່າເຜີຍຕໍ່ຊາວໂລກ.ທ່ານປະທານ ເໝົາ ເຈີຕຸງ ໄດ້ປະກາດຢ່າງສະຫງ່າຜ່າເຜີຍວ່າ: "ສາທາລະນະລັດປະຊາຊົນຈີນໄດ້ຮັບການສະຖາປະນາຂຶ້ນແລ້ວ,ແຕ່ນີ້ຕໍ່ໄປປະຊາຊົນຈີນໄດ້ລຸກຂຶ້ນມາແລ້ວ." ໂດຍຢຶດໝັ້ນເສັ້ນທາງເດີນສັງຄົມນິຍົມຕະຫລອດ 60 ປີໃນພາລະກຳປະຫວັດສາດແຫ່ງການຊີ້ນຳນຳພາພັກກອມມູນິດຈີນຍາມໃດກໍໄດ້ຊອກຫາທາງອອກທີ່ດີເພື່ອພາປະເທດຊາດໄປສູ່ຄວາມມັ່ງຄັ່ງເຂັ້ມແຂງ,ປະຊາຊົນຮັ່ງມີຜາສຸກ ແລະ ສັງຄົມມີຄວາມສີວິໄລຍຸດຕິທຳ.

ພັກກອມມູນິດຈີນໂດຍທ່ານ ເຕິ້ງ ສຽວຜິງ ໄດ້ວາງອອກນະໂຍບາຍປະຕິຮູບແລະ ເປີດປະຕູສູ່ໂລກພາຍນອກ ແລະ ໄດ້ຮັບຮອງເອົາໂດຍກອງປະຊຸມຄົບຄະນະບໍລິຫານງານສູນກາງພັກກອມມູນິດຈີນຄັ້ງທີ 3 ສະໄໝທີXI ເຊິ່ງໄຂຂຶ້ນແຕ່ວັນທີ18-23 ທັນວາ 1978,ຈາກນັ້ນມາ,ປະຊາຊົນຈີນຍາດໄດ້ໝາກຜົນສຳເລັດອັນໃຫຍ່ຫລວງໃນພາລະກິດສ້າງສາສັງຄົມນິຍົມຕາມສີສັນທີ່ມີເອກະລັກພິເສດຂອງຈີນ,ເສດຖະກິດແຫ່ງຊາດໄດ້ຂະ

ຫຍາຍຕົວຢ່າງໄວວາກ້າວກະໂດດ ແລະ ຕໍ່ເນື່ອງຈາກປະເທດອ່ອນແອເປັນປະເທດເຂັ້ມແຂງ.60ປີມານີ້,ດ້ວຍຈັງຫວະການຂະຫຍາຍຕົວຢ່າງວ່ອງໄວສະເລ່ຍລວມຍອດຜະລິດຕະພັນພາຍໃນເພີ່ມຂຶ້ນ 8,1%/ປີ. ໃນນັ້ນປີ 1979-2008 ເພີ່ມຂຶ້ນເປັນ 9,8%/ປີ.60ປີຜ່ານມາເສດຖະກິດລວມຂອງ ສປ ຈີນເພີ່ມຂຶ້ນ77ເທົ່າເຊິ່ງເຮັດໃຫ້ ສປ ຈີນກ້າວກະໂດດຈາກອັນດັບທີ 29ໃນປີ 1978ຂຶ້ນເປັນອັນທີ 3 ຂອງໂລກຖັດຈາກສະຫະລັດອາເມຣິກາ ແລະຍີ່ປຸ່ນ,ສໍາລັບປີ 2008 ຍອດມູນຄ່າການຜະລິດພາຍໃນ (GDP) ຂອງຈີນເທົ່າກັບ4.400ຕື້ໂດລາສະຫະລັດສາຍຮັບຕໍ່ຫົວຄົນ 3.315ໂດລາສະຫະລັດເພີ່ມຂຶ້ນ 32,4ເທົ່າທຽບໃສ່ປີ1952 ການປະຕິຮູບໃນຂົງເຂດຕ່າງໆມີຄວາມຄືບໜ້າດ້ວຍບາດກ້າວອັນໜັກແໜ້ນ,ລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທໍາຂອງປະຊາຊົນໄດ້ຮັບການຍົກສູງຂຶ້ນຢ່າງໃຫຍ່ຫຼວງ, ບັນດາໂຄງການກິດຈະກໍາຕ່າງໆທາງສັງຄົມໄດ້ຖືກພັດທະນາ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ,ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບມີຄວາມໜັກແໜ້ນ,ການພົວພັນຮ່ວມມືກັບຕ່າງປະເທດນັບມື້ໄດ້ຮັບການເປີດກ້ວາງ ແລະ ຂະຫຍາຍໄປທົ່ວທຸກທະວີບເຂດແຄ້ວນ ແລະ ທົ່ວທຸກມຸມໂລກ;ຈາກມີພຽງ18ປະເທດທີ່ໄດ້ສ້າງສາຍພົວພັນການທູດກັບຈີນໃນໄລຍະຂອງການສະຖາປະນາປະເທດຈີນໃໝ່ຂຶ້ນເປັນ 171ປະເທດໃນປັດຈຸບັນ,ເຊິ່ງທັງໝົດນັ້ນໄດ້ເຮັດໃຫ້ຖານະບົດບາດອິດທິພົນ ແລະ ຊື່ສຽງຂອງ ສປ ຈີນສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ,ອັນໄດ້ເປັນການປະກອບສ່ວນທີ່ສໍາຄັນໃນການເສີມສ້າງສັນຕິພາບສະຖຽນລະພາບ ແລະ ຄວາມໝັ້ນຄົງໃນພາກພື້ນອາຊີ-ປາຊີຟິກ ແລະ ໃນໂລກ.

ສປຈີນໄດ້ກາຍເປັນປະເທດທີ່ໃຫ້ການຊ່ວຍເຫຼືອລາຍໃຫຍ່ທີ່ບໍ່ມີເງື່ອນໄຂແກ່ຕ່າງປະເທດເຊິ່ງໃນນັ້ນກໍມີ ສປປ ລາວ.ມາຮອດປະຈຸບັນ ສປ ຈີນໄດ້ໃຫ້ການຊ່ວຍເຫຼືອ ສປປ ລາວດ້ວຍຫຼາຍຮູບການ ແລະ ຫຼາຍວິທີການເປັນຈໍານວນຫຼາຍກວ່າ 4 ຕື້ປອນ ແລະ 5ຮ້ອຍກວ່າລ້ານໂດລາສະຫະລັດເພື່ອປະຕິບັດຫຼາຍກວ່າ 90ໂຄງການຢູ່ລາວ,ອັນເປັນການປະກອບສ່ວນທີ່ສໍາຄັນຍິ່ງເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາເສດຖະກິດ-ສັງຄົມ ສປປ ລາວ.ສິ່ງສໍາຄັນອີກແມ່ນສາຍພົວພັນລາວ-ຈີນໄດ້ມີບາດກ້າວຂະຫຍາຍຕົວດີເລື້ອຍມາ.ຈາກສາຍພົວພັນມິດຕະພາບທີ່ມີມູນເຊື້ອດີງາມ ແລະ ບົນພື້ນຖານແຫ່ງການພົວພັນລາວ-ຈີນອັນໜັກແໜ້ນຕາມຈິດໃຈໝັ້ນຄົງຍາວນານຮັກແພງກັນຖານບ້ານໃກ້ເຮືອນຄຽງ,ໄວ້ເນື້ອເຊື່ອໃຈກັນ ແລະ ຮ່ວມມືກັນຮອບດ້ານໃນຜ່ານມານັ້ນະໃນການພົບປະກັນຢູ່ປັກກິ່ງວັນທີ 9 ກັນຍາປີ 2009ລະຫວ່າງທ່ານ ຈູມມາລີ ໄຊຍະສອນ ເລຂາທິການໃຫຍ່ພັກປະຊາຊົນປະຕິວັດລາວ ປະທານປະເທດແຫ່ງ ສປປ ລາວ ແລະ ທ່ານ ຫູ ຈິນທາວ ເລຂາທິການໃຫຍ່ພັກກອມມູນິດຈີນປະທານປະເທດແຫ່ງ ສປ ຈີນທັງສອງຝ່າຍໄດ້ເປັນເອກະພາບກັນຍົກລະດັບການພົວພັນລາວ-ຈີນຂຶ້ນຕື່ມອີກກ້າວໜຶ່ງເປັນການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານເພື່ອໃຫ້ລາວ ແລະ ຈີນເປັນບ້ານໃກ້ເຮືອນຄຽງທີ່ດີ.ເພື່ອນມິດທີ່ດີ.ສາຫາຍທີ່ດີ ແລະ ຄູ່ຮ່ວມມືທີ່ດີຕະຫຼອດໄປເພື່ອຕອບສະໜອງຄວາມມຸ້ງຫວັງຂອງສອງພັກສອງລັດ ແລະ ປະຊາຊົນຂອງສອງຊາດລາວ-ຈີນ.



# ຊີວິດແຫ່ງການຮຽນນັກຄົ້ນຄວ້າປະລິນຍາເອກຂອງຂ້າພະເຈົ້າ

ໂດຍຈັນທາ ຫີມະວັນ(ຫ້ອງເລຂາສຳນັກນາຍົກລາວ)

## 我的博士研究生生活

文、图 / 占达 · 黑马万

我今年 6 月浙江大学毕业，顺利获得博士学位。经过四年的中国生活，我不仅进入到了科研领域，也加深了对中国社会的理解。我的留学生活既有意义又充实，给我留下了许多美好的回忆和感受。





ເດືອນ 6 ປີນີ້,ຂ້ອຍໄດ້ຈົບການຮຽນມະຫາວິທະຍາໄລເຈີຈຽງ,ໄດ້ຮັບປະລິນຍາເອກຢ່າງມີໄຊ. ໂດຍຜ່ານຊີວິດຢູ່ຈີນເປັນເວລາ 4 ປີ,ຂ້ອຍບໍ່ພຽງແຕ່ໄດ້ເຂົ້າສູ່ຂົງເຂດການຄົ້ນຄວ້າວິທະຍາສາດເທົ່ານັ້ນ,ຍັງໄດ້ເຂົ້າໃຈທາງດ້ານສັງຄົມຂອງຈີນຢ່າງເລິກເຊິ່ງອີກດ້ວຍ. ຊີວິດແຫ່ງການສຶກສາຢູ່ຕ່າງປະເທດຂອງຂ້າພະເຈົ້າໄດ້ມີຄວາມໝາຍແຕ່ກໍໄດ້ຮັບຄວາມຮູ້ອຸດົມສົມບູນຂຶ້ນ. ຂ້າພະເຈົ້າດຳລົງຊີວິດຢູ່ໃນປະເທດຈີນເປັນເວລາ 4 ປີນັ້ນ,ໄດ້ມີຄວາມຮູ້ສຶກແລະຄວາມຄິດຄືນຫຼັງອັນດີງາມເປັນຈຳນວນຫຼວງຫຼາຍໃຫ້ແກ່ຂ້າພະເຈົ້າ,ມະທີ່ນີ້ຂ້າພະເຈົ້າຈະແນະນຳຄວາມຮູ້ສຶກຂອງຂ້ອຍທີ່ມີຕໍ່ປະເທດຈີນມີດັ່ງລຸ່ມນີ້:

ກ່ອນອື່ນໝົດ,ຄວາມຮູ້ສຶກຕໍ່ຊີວິດແຫ່ງການສຶກສາຢູ່ຕ່າງປະເທດ. ມະຫາວິທະຍາໄລເຈີຈຽງເປັນມະຫາວິທະຍາໄລຊື່ດັງທີ່ເປັນໜຶ່ງຂອງຈີນ,ບັນຍາກາດການສຶກສາ ແລະ ສະພາບແວດລ້ອມແຫ່ງນີ້ລ້ວນແຕ່ຈົບງາມດີຫຼາຍ. ຄູອາຈານຂອງໂຮງຮຽນດັ່ງກ່າວນີ້ມີທ່າທີເຂັ້ມງວດແລະຕັ້ງໜ້າຕໍ່ການຄົ້ນຄວ້າ ແລະການສິດສອນ,ຂ້ອຍກັບໝູ່ຮຽນຈີນອາຍຸໜຸ່ມກວ່າຂ້ອຍ 12 ປີດຳເນີນການອະພິປາຍຫົວເລື່ອງບົດສອນ,ເຂົາເຈົ້າກັບມາຈາກບ້ານນຳເອົາຂອງພິເສດ ແລະ ອາຫານພື້ນເມືອງທ້ອງຖິ່ນໃຫ້ຂ້ອຍຊີມເບິ່ງ. ເວົ້າສຳລັບຂ້ອຍເອງ,ອາຫານດັ່ງກ່າວນີ້ແມ່ນຂ້ອຍຍາກທີ່ມີໂອກາດກິນໄດ້. ໃຕ້ການຊ່ວຍເຫຼືອກຈາກຄູອາຈານແລະ ໝູ່ຮຽນ,ຊີວິດການຮຽນຢູ່ຕ່າງປະເທດແມ່ນມີຄວາມເບີກບານມ່ວນຊື່ນທີ່ສຸດ,ຂໍສະແດງຄວາມຂອບອົກຂອບໃຈນຳເຂົາເຈົ້າ.

ທີ່ພັກເຊົາຂອງນັກສຶກສາຈີນແຕກຕ່າງການກັບປະເທດອື່ນ,ນັກສຶກສາຕ່າງປະເທດເກືອບບໍ່ມີຈັກຄົນນອນຢູ່ນ ໂຮງຮຽນ,ເຂົາເຈົ້ານອນຢູ່ນອກໄປເຂົ້າຮຽນ,ໃນປະເທດຈີນເກືອບໝົດທຸກຄົນລ້ວນແຕ່ນອນຢູ່ໃນໂຮງຮຽນດຳລົງຊີວິດແລະຮ່ຳຮຽນ,ແຕ່ລະມື້,ບໍ່ຈຳເປັນແກ້ໄຂບັນຫາຄົມມະນາຄົມ,ແຕ່ເຊົ້າຮອດຄ່ຳສາມາດຮ່ຳຮຽນຢູ່ໃນຫໍສະໝຸດຫຼືຫ້ອງທົດລອງໄດ້. ມີເວລາຍິ່ງຫຼາຍກວ່າດຳເນີນການແລກປ່ຽນກັນກັບໝູ່ຮຽນ,ມີຜົນດີທີ່ສຸດໃຫ້ແກ່ຊີວິດການຮ່ຳຮຽນຂອງນັກສຶກສາ,ແລະຈະບຳລຸງສ້າງຄຸນສົມບັດຮັກແພງກັນຂຶ້ນ.

ໃນເວັບໄຊອິນເຕີເນັດຂອງໂຮງຮຽນມີຂໍ້ມູນຂ່າວສານເອເລັກໂຕຼນິກອຸດົມສົມບູນ,ບໍ່ພຽງແຕ່ສາມາດເປີດເບິ່ງບົດນິພົນວາລະສານຂອງຈີນເທົ່ານັ້ນ,ຍັງສາມາດເປີດເບິ່ງຂໍ້ມູນຂ່າວສານທຸກປະເພດຂອງຕ່າງປະເທດໄດ້. ແຕ່ກໍສາມາດກຳໄດ້ເນື້ອໃນຄົ້ນຄວ້າອັນໃໝ່ສຸດຂອງພາຍໃນ

ແລະ ນອກປະເທດໂດຍທັນທີໄດ້. ໄດ້ຍິນວ່າ, ຂໍ້ມູນຂ່າວສານດັ່ງກ່າວນີ້ແມ່ນມະຫາວິທະຍາໄລເຈີຈຽງໄດ້ເສຍເງິນຫຼາຍຊື້ມາສະໜອງໃຫ້ນັກສຶກສາອ່ານເບິ່ງ. ເນື່ອງຈາກວ່າ, ມີຂໍ້ມູນຂ່າວສານອັນອຸດົມສົມບູນ, ສະນັ້ນ, ທຸກໆປີ, ມະຫາວິທະຍາໄລເຈີຈຽງຈຶ່ງໄດ້ປະກາດໝາກຜົນຄົ້ນຄວ້າທີ່ບໍ່ໜ້ອຍໃນວາລະສານຫຼືກອງປະຊຸມພາຍໃນ ແລະ ນອກປະເທດ.

ນອກຈາກນັ້ນ, ເພື່ອເປັນການເພີ່ມທະວີການແລກປ່ຽນສາກົນໃນການສຶກສາຂອງນັກຄົ້ນຄວ້າ, ໂຮງຮຽນດັ່ງກ່າວນີ້ໄດ້ວາງລະບອບອຸດໜູນນັກຄົ້ນຄວ້າເຂົ້າຮ່ວມກອງປະຊຸມສາກົນ. ຂ້າພະເຈົ້າກໍໄດ້ໄປນິວຢອກອາເມລິກາປະກາດອ່ານຜົນການຄົ້ນຄວ້າດິນຊຸ່ມ ແລະ ສະພາບແວດລ້ອມນິເວດວິທະຍາຂອງລາວ, ແລກປ່ຽນກັນກັບນັກຊ່ຽວຊານຂອງປະເທດຕ່າງໆ. ເວົ້າລວມແລ້ວ, ສະພາບແວດລ້ອມການສຶກສາຮ່ຳຮຽນຂອງຈີນແມ່ນຈົບງາມດີຫຼາຍ, ຂ້າພະເຈົ້າຫວັງວ່າ, ໃນຂ້າງໜ້າຈະມີນັກສຶກສາລາວຍິ່ງຫຼາຍກວ່າເກົ່າມາຮຽນຢູ່ປະເທດຈີນ, ບັນລຸຄວາມຝັນຂອງຕົນໃຫ້ປາກົດເປັນຈິງ

ໃນໄລຍະຮ່ຳຮຽນເປັນເວລາ4ປີຢູ່ຈີນ, ຂ້າພະເຈົ້າເຄີຍໄປປັກກິ່ງຕັ້ງຫຼາຍເທື່ອ, ປັກກິ່ງຢູ່ໃນສາຍຕາຂອງຂ້ອຍເປັນຕົວເມືອງທີ່ມີເນື້ອຫາວັດທະນະທຳປະຫວັດສາດອັນຍາວນານຢ່າງເລິກເຊິ່ງ, ທັງເປັນຕົວເມືອງທັນສະໄໝທີ່ມີເສດຖະກິດສັງຄົມຈະເລີນຮຸ່ງເຮືອງທີ່ມີສະເໜ່ຫຼາກຫຼາຍ. ກ່ອນຈະມາຈີນ, ຂ້າພະເຈົ້າປາຖະໜາຢາກໄປປັກກິ່ງ, ໄປຢ້ຽມຊົມພະລາຊະວັງເກົ່າກູ້ກົງ ແລະກຳແພງຍັກເຊິ່ງເປັນທັດສະນີຍະພາບ ແລະ ວັດຖຸບູຮານທີ່ມີຊື່ສຽງດັງດັງ, ຄວາມມຸ້ງມາດປາຖະໜາເປັນເວລາຫຼາຍປີຂອງຂ້າພະເຈົ້າໄດ້ປາກົດເປັນຈິງແລ້ວ. ຂ້ອຍກໍໄດ້ຂຶ້ນສູ່ກຳແພງຍັກ, ເປັນລູກຜູ້ຊາຍເທື່ອໜຶ່ງ, ກຳແພງຍັກແມ່ນມີຄວາມອົງອາດຜ່າເຜີຍມະໂຫລານແທ້ອີຫລີ! ອີກເທື່ອໜຶ່ງໄດ້ສຳຜັດກັບປະຫວັດສາດອັນຍາວນານຂອງຈີນ. ພ້ອມກັນນັ້ນ, ຂ້າພະເຈົ້າມີຄວາມຮູ້ສຶກຢ່າງເລິກເຊິ່ງ "ກຳແພງຍັກແມ່ນຄວາມເອກອ້າງທະນົງໃຈຂອງປະຊາຊົນຈີນ" ເຊິ່ງໄດ້ຜ່ານຂະບວນການວິວັດເປັນເວລາ 2000ກວ່າປີ, ໃນໂລກນີ້ຍັງຄົງຮັກສາໄວ້ມໍລະດົກອັນຍິ່ງໃຫຍ່ປານນີ້, "ກຳແພງຍັກແມ່ນຄວາມເອກອ້າງທະນົງໃຈຂອງປະຊາຊົນທົ່ວໂລກ", ຂ້າພະເຈົ້າຍອມຮັບປະເທດຈີນທີ່ສຸດ. ແຕ່ວ່າ, ຂ້າພະເຈົ້າຮູ້ສຶກເສຍໃຈທີ່ສຸດທີ່ໄດເຫັນນັກທ່ອງທ່ຽວບາງຄົນຂຽນໜັງສື, ຊື່ແລະນາມສະກຸນຫຼືທີ່ຢູ່ມາກຫຼາຍໆຕາມລຳພັງໃຈຢູ່ເທິງກຳແພງຍັກ. ທັດສະນີຍະພາບແລະວັດຖຸບູຮານທີ່ມີຊື່ສຽງດັງດັງດັ່ງກ່າວນີ້ເປັນຫຍັງມີການກະທຳທີ່ບໍ່ອະລິຍະທຳດັ່ງກ່າວນີ້ແດ່? ເພື່ອໃຫ້ລູກຫລານເຫລັນຫລ້ອນສືບທອດມໍລະດົກຂອງມວນມະນຸດດັ່ງກ່າວນີ້ຈົນເທົ່າໃດໆ, ຮ່ຳຮຽນສະຕິປັນຍາຂອງມວນມະນຸດແລະວັດທະນະທຳປະຫວັດສາດ, ພວກເຮົາຈະຕ້ອງໂຄສະນາຄວາມສຳຄັນໃນການປົກປັກຮັກສາມໍລະດົກດັ່ງກ່າວນີ້ໃຫ້ຫຼາຍ, ຍົກສູງຈິດສຳນຶກແຫ່ງການປົກປັກຮັກສາມໍລະດົກ.

ແຂວງຢູນນານຕັ້ງຢູ່ພາກເໜືອລາວ, ພູມສາດ, ດິນຟ້າອາກາດແລະວັດທະນະທຳ, ຮີດຄອງປະເພນີ, ຄວາມຊິນເຄີຍການກິນຢູ່ແລະອື່ນໆຂອງຊົນເຜົ່າຄ້າຍຄືກັບປະເທດລາວ, ສະນັ້ນ, ຂ້ອຍກໍໄດ້ໃກ້ຊິດຕິດແທດແລະຮັກແພງກັນພິເສດກັບແຂວງຢູນນານຂ້ອຍເຄີຍໄປຢ້ຽມເມືອງເກົ່າຫລີຈຽງ, ໄດ້ເຫັນກັບຕາຮີດຄອງປະເພນີແລະຊີວິດການເປັນຢູ່ຂອງເຜົ່ານາຊີ, ວັດທະນາທຳນ້ຳຂອງເຜົ່ານາຊີໄດ້ປະທັບໃຈຢ່າງເລິກເຊິ່ງແກ່ຂ້ອຍ, ເມືອງເກົ່າຫລີຈຽງໄດ້ຮຽບຮຽງເຂົ້າສາລະບານມໍລະດົກວັດທະນະທຳໂລກ, ພ້ອມກັນນັ້ນ, ການພັດທະນາການທ່ອງທ່ຽວເມືອງເກົ່າຫລີຈຽງກໍໄດ້ຮັບຜົນສຳເລັດຢ່າງໃຫຍ່ຫຼວງ ແລະ ໄດ້ຮັບປະສິດທິພາບດ້ານເສດຖະກິດ ແລະ ສັງຄົມຢ່າງເດັ່ນຊັດ. ປະເທດລາວກໍມີວັດທະນະທຳຊົນເຜົ່າທີ່ມີສີສັນຫຼາກຫຼາຍ, ພວກເຮົາຈະຕ້ອງນຳເອົາຮູບແບບພັດທະນາຂອງຫລີຈຽງມາສຶກສາຄົ້ນຄວ້າເພື່ອການພັດທະນາອົງເຂດຂອງລາວ. ຢູນນານຫ່າງຈາກປະເທດລາວໃກ້ໆທີ່ສຸດແລະມີຮີດຄອງປະເພນີ, ດິນຟ້າອາກາດຄ້າຍຄືກັນກັບລາວ. ດັ່ງນັ້ນ, ມີຜົນດີໃຫ້ແກ່ນັກສຶກສາລາວມາຮ່ຳຮຽນຢູ່ຈີນ. ຢູນນານກໍມີໂຮງຮຽນຫຼາຍແຫ່ງຮັບເອົານັກສຶກສາລາວຄືມະຫາວິທະຍາໄລຢູນນານ, ມະຫາວິທະຍາໄລເສດຖະກິດການເງິນ, ມະຫາວິທະຍາໄລສ້າງຄູຢູນນານ, ມະຫາວິທະຍາໄລວິທະຍາສາດເຕັກນິກຄຸນມິງ, ມະຫາວິທະຍາໄລຊົນເຜົ່າຢູນນານ ແລະ ອື່ນໆ. ມະຫາວິທະຍາໄລຊົນເຜົ່າຢູນນານມີນັກສຶກສາຈີນທີ່ຮຽນພາສາລາວ, ຂ້ອຍໄດ້ແນະນຳສະພາບການວັດທະນະທຳ, ເສດຖະກິດ, ລະບອບສັງຄົມດ້ວຍພາສາລາວໃຫ້ເຂົາເຈົ້າ, ພວກເຮົາຮູ້ສຶກດີອົກດີໃຈຫຼາຍທີ່ໄດ້ມີໂອກາດດຳເນີນການແລກປ່ຽນກັນ.

ຂ້ອຍຫວັງວ່າ, ຈະມີນັກສຶກສາລາວຍິ່ງຫຼາຍກວ່າເກົ່າມາຮຽນຢູ່ຈີນ, ດຳເນີນການແລກປ່ຽນກັນກັບນັກສຶກສາຈີນ, ບັນລຸຄວາມຝັນຂອງຕົນເພື່ອເປັນການຊ່ວຍເຫຼືອການພັດທະນາຂອງລາວແລະຊຸກຍູ້ການພັດທະນາທັງສອງປະເທດລາວ-ຈີນ.

ສຸດທ້າຍ, ປະເທດລາວໃກ້ຈະຈັດງານກິລາຊີເກມຄັ້ງທີ 25, ຄົນລາວພວກເຮົາປາຖະໜາວັນເປີດງານກິລາຊີເກມ, ເພື່ອການຈັດງານກິລາຄັ້ງນີ້ໃຫ້ດີ, ມີບາງຫໍສະໜາມກິລາແມ່ນລັດຖະບານຈີນໃຫ້ການຊ່ວຍເຫຼືອຢ່າງໃຫຍ່ຫຼວງກໍ່ສ້າງຂຶ້ນ, ເພື່ອນມິດລາວກໍໄດ້ສະແດງຄວາມຂອບອົກຂອບໃຈນຳການຊ່ວຍເຫຼືອຂອງລັດຖະບານຈີນຢ່າງລົ້ນເຫຼືອ, ພວກເຮົາຫວັງວ່າເພື່ອນມິດສະຫາຍຈີນເປັນຈຳນວນຫຼວງຫຼາຍມາລາວຢ້ຽມຊົມງານກິລາຊີເກມ. ພ້ອມກັນນັ້ນໄປທັດສະນະສຶກສາທັດສະນີຍະພາບ ແລະ ວັດຖຸບູຮານຂອງລາວ, ຍິນດີຕ້ອນຮັບທ່ານສູ່ປະເທດລາວ.

# ປະເທດອາຊີຕາເວັນອອກສຽງໃຕ້ເຊີນຊວນວິສາຫະກິດຂອງຈີນພັດທະນາບໍ່ແຮ່ ພ້ອມກັນສ້າງ"ທະວີບອາຊີທີ່ມີຊີວິດຊີວາ"


新华社 图

## 东南亚五国热邀
## 中国企业开发矿产 共创“活力亚洲”

柬埔寨工业矿产能源部大臣、老挝能源矿产部部长、泰王国驻昆明总领事、缅甸矿业部部长、越南自然资源部副部长等东南亚五国政府高级官员近日在首届中国昆明国际矿业合作论坛开幕式上分别代表各自政府发出诚挚邀请，欢迎中国企业到本国投资开发矿产资源，共同为实现“活力亚洲”做出贡献。

ໃນພິທີເປີດກອງປະຊຸມສຳມະນາກ່ຽວກັບການຮ່ວມມືບໍ່ແຮ່ສາກົນຄຸນມິງ ສປ ຈີນຄັ້ງທີໜຶ່ງທີ່ໄດ້ໄຂຂຶ້ນໃນວັນທີ 3 ກັນຍາ 2009,ເຈົ້າໜ້າທີ່ລະດັບສູງຂອງລັດຖະບານ 5 ປະເທດອາຊີຕາເວັນອອກສຽງໃຕ້ຄືທ່ານລັດຖະມົນຕີວ່າການກະຊວງບໍ່ແຮ່ ແລະ ພະລັງງານກຳປູເຈຍ,ທ່ານລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່ແຫ່ງ ສປປ ລາວ,ທ່ານກົງສຸນໃຫຍ່ແຫ່ງລາຊະອານາຈັກໄທປະຈຳຄຸນມິງ,ທ່ານລັດຖະມົນຕີວ່າການກະຊວງບໍ່ແຮ່ຂອງມຽນມ້າ ແລະ ເຈົ້າໜ້າທີ່ອາວຸໂສກະຊວງຊັບພະຍາກອນທຳມະຊາດຫວຽດນາມ,ຕ່າງກໍ່ໄດ້ຕາງໜ້າໃຫ້ລັດຖະບານຂອງຕົນສະແດງຄວາມເຊື້ອເຊີນອັນຈິງໃຈ,ຍິນດີຕ້ອນຮັບວິສາຫະກິດຂອງຈີນໄປປະເທດຂອງໃຜລາວເພື່ອລົງທຶນພັດທະນາຊັບພະຍາກອນບໍ່ແຮ່,ພ້ອມກັນປະກອບສ່ວນເຂົ້າໃນການບັນລຸ"ອາຊີທີ່ມີຊີວິດຊີວາ"ໃຫ້ປະກົດເປັນຈິງ.

ທ່ານລັດຖະມົນຕີວ່າການກະຊວງອຸດສາຫະກຳ,ບໍ່ແຮ່ ແລະ ພະລັງງານຂອງກຳປູເຈຍໄດ້ສົ່ງຄຳເຊື້ອເຊີນໃຫ້ວິສາຫະກິດຝ່າຍຈີນວ່າ: "ເນື່ອງຈາກວ່າຖືກກະທົບຈາກວິກິດການການເງິນໂລກ,ເສດຖະກິດຂອງກຳປູເຈຍໃນໄລຍະໃກ້ໆນີ້ຂະຫຍາຍຕົວຊ້າ,ພວກຂ້າພະເຈົ້າມີຄວາມຕ້ອງການອັນຮີບດ່ວນເຊິ່ງການຮ່ວມມື ແລະ ການຊ່ວຍເຫຼືອສາກົນ.ລັດຖະບານກຳປູເຈຍພວມຄົ້ນຄວ້າ ແລະ ວາງນະໂຍບາຍພິເສດຕ່າງໆເພື່ອຊຸກຍູ້ຂະແໜງການບໍ່ແຮ່ໃຫ້ຂະຫຍາຍຕົວ,ພວກຂ້າພະເຈົ້າຂໍເຊື້ອເຊີນບັນດາວິສາຫະກິດຂອງປະເທດຈີນໄປດຳເນີນການພັດທະນາຊັບພະຍາກອນບໍ່ແຮ່ຢູ່ກຳປູເຈຍ."

ທ່ານ ສຸລິວົງ ດາລາວົງ ລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່ຂອງປະເທດລາວໄດ້ຕີລາຄາສູງຕໍ່ຄວາມໝາຍຂອງການເປີດກອງປະຊຸມສຳມະນາກ່ຽວກັບການຮ່ວມມືບໍ່ແຮ່ສາກົນຄຸນມິງປະເທດຈີນຄັ້ງທີໜຶ່ງ,ໂດຍເຫັນວ່າກອງປະຊຸມສຳ

ມະນາມີບົດບາດຕັ້ງໜ້າໃນການປະດິດສ້າງ "ອາຊີທີ່ມີຊີວິດຊີວາ". ທ່ານລັດຖະມົນຕີເຫັນວ່າ, ລະດັບລວມຂະແໜງການບໍ່ແຮ່ຂອງອາຊີໃນປະຈຸບັນຍັງຕໍ່າ, ຜະລິດຕະພັນເປັນຜະລິດຕະພັນລະດັບຕໍ່າເປັນຫລັກ, ບັນດາປະເທດໃນອາຊີຄວນຕັ້ງໜ້າເພີ່ມທະວີການຮ່ວມມື ແລະ ແລກປ່ຽນສາກົນ, ຍົກສູງລະດັບຂະແໜງການບໍ່ແຮ່ຂອງອາຊີເທື່ອລະກ້າວ. "ຈົນມາເຖິງປະຈຸບັນ, ປະເທດລາວໄດ້ອອກໜັງສືອະນຸມັດພັດທະນາບໍ່ແຮ່ຈຳນວນ 140 ກວ່າສະບັບໃຫ້ບໍລິສັດຕ່າງປະເທດ, ໃນນັ້ນມີ 50 ກວ່າສະບັບອອກໃຫ້ບໍລິສັດຈີນ, ແມ່ນຫລາຍກວ່າໝູ່, ພາຍຫລັງທີ່ໄດ້ປັບປຸງຄືນມະນາຄົມໃຫ້ສົມບູນຕື່ມອີກ, ການຮ່ວມມືພັດທະນາບໍ່ແຮ່ລະຫວ່າງລາວກັບຈີນຈະມີການຂະຫຍາຍຕົວໃໝ່ອີກ."

ໄປຄຽງຄູ່ກັບການເປີດໃຊ້ເສັ້ນທາງຫລວງຄຸນມິງ - ກຸງເທບ ແລະ ເສັ້ນທາງຫລວງລະດັບສູງລະຫວ່າງຈີນກັບຫວຽດນາມທີ່ເປີດໃຊ້ຫວ່າງບໍ່ດົນທີ່ແລ້ວ, ການໄປມາຫາສູ່ກັນດ້ານການຄ້າລະຫວ່າງຈີນກັບໄທ ແລະ ຫວຽດນາມນັບມື້ນັບສະໜິດແໜ້ນ. ທ່ານສຸຣະພັນກົງສຸນໃຫຍ່ໄທປະຈຳຄຸນມິງໄດ້ກ່າວວ່າ, ເນື່ອງຈາກວ່າແຮ່ທາດ 90%ທີ່ໃຊ້ໃນການຜະລິດອຸດສາຫະກຳຂອງປະເທດໄທອາໄສການນຳເຂົ້າ, ຢູນນານຈະກາຍເປັນແຫລ່ງທີ່ມາຂອງບໍ່ແຮ່ທີ່ສຳຄັນກວ່າໝູ່ຂອງປະເທດໄທໃນອະນາຄົດ. ປະຈຸບັນ, ປະເທດໄທມີການຮ່ວມມືກັນກັບ 10 ປະເທດອາຊີຕາເວັນອອກສຽງໃຕ້, ປະເທດຈີນເປັນປະເທດຮ່ວມມືກັນທີ່ໃຫຍ່ກວ່າໝູ່. ເຈົ້າໜ້າທີ່ອາວຸໂສກະຊວງຊັບພະຍາກອນທຳມະຊາດຂອງຫວຽດນາມກໍ່ໄດ້ກ່າວວ່າ, ບ່ອນທີ່ມີບໍ່ແຮ່ທີ່ສຳຫລວດໄດ້ຈະແຈ້ງຂອງຫວຽດນາມມີ 5 ພັນກວ່າແຫ່ງ, ຍິນດີຕ້ອນຮັບບໍລິສັດຂອງຈີນໄປລົງທຶນພັດທະນາ.

ທ່ານ ອູມິນ ລັດຖະມົນຕີວ່າການກະຊວງບໍ່ແຮ່ປະເທດມຽນມ້າໄດ້ກ່າວວ່າ, ເຖິງແມ່ນວ່າກົດໝາຍວ່າດ້ວຍບໍ່ແຮ່ຂອງມຽນມ້າໄດ້ກຳນົດໄວ້ບໍ່ແຮ່ເປັນກຳມະສິດຂອງລັດ, ແຕ່ປະຈຸບັນລັດຖະບານໄດ້ວາງລະບອບສັນຍາປັນຜົນຂະແໜງການຜະລິດ, ບໍລິສັດ ແລະ ລັດຖະບານສາມາດມີໂອກາດຜະລິດຕະພັນພ້ອມກັນ, ປະຈຸບັນໄດ້ມີບໍລິສັດຂອງຈີນ 2 ແຫ່ງພວມດຳເນີນການຮ່ວມມືກັນພັດທະ ນາບໍ່ນິເກີຢູ່ມຽນມ້າ.


新华社 图

# ນັກສຶກສາອາຊຽນທີ່ມາຮຽນຢູ່ປະເທດຈີນເກີນ30ພັນຄົນ

### 东盟来华留学生超过 3 万人

中国教育部副部长郝平在第二届“中国－东盟教育交流周”上介绍，目前，东盟国家的来华学生有 34735 人。中国计划在 2020 年将来华留学人数提高到 50 万人，力争实现东盟来华留学生和中国到东盟的留学生都达到 10 万人的“双 10 万学生流动计划”。

ທ່ານຫາວຜິນ ຮອງລັດຖະມົນຕີກະຊວງສຶກສາທິການແຫ່ງປະເທດຈີນໄດ້ແນະນຳໃນ "ສັບປະດາແລກປ່ຽນການສຶກສາຈີນ-ອາຊຽນຄັ້ງທີ 2 "ວ່າ: ປະຈຸບັນ,ນັກສຶກສາຂອງບັນດາປະເທດອາຊຽນທີ່ມາຮຽນຢູ່ປະເທດຈີນມີຈຳນວນ 34735 ຄົນ.

ທ່ານຫາວຜິນໄດ້ເວົ້າວ່ານັບແຕ່ປີ 2008 ເປັນຕົ້ນມາ,ຈີນໄດ້ຕ່າງກໍເຊັນສັນຍາແລກປ່ຽນການສຶກສາ ແລະ ການຮ່ວມມືລະຫວ່າງລັດຖະບານຫຼືສັນຍາຮັບຮອງປະຫວັດການສຶກສາ ແລະ ປະລິນຍາເຊິ່ງກັນ ແລະ ກັນກັບປະເທດກຳປູເຈຍສິງກະໂປຫວຽດນາມໄທ ແລະ ປະເທດອາຊຽນອື່ນໆ.

ທ່ານຫາວຜິນສະແດງວ່າ,ຈີນມີແຜນການຈະເພີ່ມຈຳນວນນັກສຶກສາຕ່າງປະເທດທີ່ມາຮຽນຢູ່ຈີນເຖິງ 5 ແສນຄົນໃນປີ 2020.ພະຍາຍາມບັນລຸ "ແຜນການແລກປ່ຽນນັກສຶກສາແສນຄູ່" ເຊິ່ງໃຫ້ນັກສຶກສາຂອງອາຊຽນມາຈີນ ແລະ ນັກສຶກສາຂອງຈີນໄປອາຊຽນລ້ວນແຕ່ເຖິງຈຳນວນ 1 ແສນຄົນ.



ນັກສຶກສາທີ່ມາຈາກປະເທດຕ່າງໆອາຊຽນໃນວິທະຍາຄານແລກປ່ຽນວັດທະນະທຳສາກົນຂອງມະຫາວິທະຍາໄລຊົນເຜົ່າກວາງຊີພວມເປີດການມ່ວນຊື່ນ

广西民族大学国际文化交流学院，来自东盟各国的留学生们正在联欢　CFP 图

# ເຂດປ່າເຊີນຫຼອງເຈ້ຍມົນທົນຫູເປ

## 湖北神农架

图 /CFP

神农架位于湖北省西部，是中国唯一以“林区”命名的行政区。神农架茫茫的林海，完好的原始生态系统，丰富的生物多样性，宜人的气候条件，原始独特的内陆高山文化，共同构成了绚丽多彩的山水画卷，也使神农架享有了“绿色明珠”、“天然动植物园”、“生物避难所”、“物种基因库”、“自然博物馆”、“清凉王国”等等众多美誉。神农架正以其原始完美的生态环境引起世人瞩目。



ເຂດປ່າເຊີນຫຼອງເຈ້ຍຕັ້ງຢູ່ເຂດຊາຍແດນພາກຕາເວັນຕົກຂອງມົນທົນຫູເປເຊິ່ງເປັນເຂດການປົກຄອງທີ່ມີສະເພາະອັນດຽວທີ່ນັ້ນທີ່ໄດ້ໃຊ້ເຂດປ່າເປັນເຂດປົກຄອງ.

ເຂດປ່າເຊີນຫຼອງເຈ້ຍເປັນສາຍພູແບ່ງນ້ຳຢູ່ລະຫວ່າງແມ່ນ້ຳຢາງເຊຈຽງແລະແມ່ນ້ຳຮ້ານສຸຍໃນເຂດນີ້ມີລະບົບນ້ຳ 4 ລະບົບຄືຫ້ວຍຊຽງສີເຫີ ຫ້ວຍຢານຕູ້ເຫີ ຫ້ວຍນານເຫີ ແລະ ຫ້ວຍຕູເຫີຍ້ອນເຂດນີ້ຕັ້ງຢູ່ເຂດລົມມໍລະສຸມຂອງເຂດໃກ້ແຖບຮ້ອນເໜືອເສັ້ນອະໜານກາງ,ດັ່ງນັ້ນດິນຟ້າອາກາດຈຶ່ງເຢັນກວ່າ ແລະ ມີນ້ຳຝົນຫຼາຍ,ເມື່ອຄວາມສູງເໜືອໜ້ານ້ຳທະເລສູງຂຶ້ນ 100 ແມັດລະດູການຈະຫຼຸດລົ່ນກັນເຖິງ 3 ຫາ 4 ມື້ໄປ, "ຕົ້ນພູໃນຊ່ວງທີ່ຮ້ອນອົບເອົ້າຂອງລະດູຮ້ອນ,ຈອມພູໃນລະດູບານໃໝ່,ຕີນພູໃນລະດູໃບໄມ້ຫຼົ່ນທີ່ອົບອຸ່ນ,ຈອມພູນ້ຳເປັນກ້ອນ,ຮ້ອຍອັນພັນສີງາມບໍ່ເປີດແຍກສີ່ລະດູການແສນຍາກ" ນີ້ເປັນການພັນລະນາພາບພົດດິນຟ້າອາກາດຕົວຈິງຂອງເຂດປ່າເຊີນຫຼອງເຈ້ຍ.ຍ້ອນໄດ້ຖືກຜົນກະທົບຈາກລົມມໍລະສຸມທາງທິດຕາເວັນອອກສຽງໃຕ້ທີ່ປຽກຊຸ່ມ ແລະ ຄວາມກົດດັນອາກາດແຜ່ນດິນໃຫຍ່ທີ່ແຫ້ງ ແລະ ໜາວທີ່ສັບປ່ຽນກັນ,ກໍ່ຄືການປັບປຸງຄວາມຮ້ອນ ແລະ ນ້ຳຝົນຈາກພູສູງແລະປ່າໄມ້ ,ຈຶ່ງໄດ້ເກີດມີດິນຟ້າອາກາດທີ່ໜ້າຮ້ອນບໍ່ຮ້ອນເອົ້າ,ໜ້າໜາວບໍ່ໜາວຈັດ.ເຊິ່ງເປັນອາກາດທີ່ສົມຄວາມປາດຖະໜາຂອງຄົນ,ໃນເມື່ອລະດູຮ້ອນບັນດາຕົວເມືອງພາກໃຕ້ຂອງຈີນລ້ອນແຕ່ປົກຄຸມຢູ່ໃນອາກາດທີ່ມີອຸນຫະພູມສູງ,ເຂດປ່າເຊີນຫຼອງເຈ້ຍພັດເປັນໂລກທີ່ເຢັນສະບາຍ.

ສິ່ງແວດລ້ອມພູມີປະເທດທີ່ພິເສດຈຳເພາະ ແລະ ດິນຟ້າອາກາດນ້ອຍສາມມິຕິໄດ້ເຮັດໃຫ້ເຂດປ່າເຊີນຫຼອງເຈ້ຍກາຍເປັນເຂດຂ້າມຜ່ານຂອງປະເພດພືກສາຊາດທັງພາກເໜືອ ແລະ ພາກໃຕ້ ແລະ ເປັນແຖບຕັດສະຫຼັບກັນທີ່ສັດເດຍລະສານເປັນຈຳນວນມາກມາຍສືບແມ່ແຜ່ລູກ ແລະ ຈະເລີນເຕີບໂຕ.ເຂດປ່າເຊີນຫຼອງເຈ້ຍມີພືກສາຊາດປະເພດຕ່າງໆ 3700 ກວ່າຊະນິດ,ໃນນັ້ນມີ 40 ຊະນິດໄດ້ຮັບການປົກປ້ອງຢ່າງເປັນຈຸດສຸມຈາກລັດ,ມີສັດປ່າປະເພດຕ່າງໆ 1050 ກວ່າຊະນິດ,ໃນນັ້ນມີ 70 ກວ່າຊະນິດໄດ້ຮັບການປົກປ້ອງ ຢ່າງເປັນຈຸດສຸມຈາກລັດ.ພັນຂອງສິ່ງມີຊີວິດທີ່ຢູ່ທາງເໜືອເຖິງໂມ້ເຫີ,ທາງໃຕ້

ໄປເຖິງສິບສອງພັນນາ,ທາງທິດຕາເວັນຕົກ ເຖິງພູເຂົາຫິມາໄລເກືອບມີລວບຄອບຄຸມໄປທັງໝົດ.

ລະບົບນິເວດວິທະຍາປ່າໄມ້ເຂດໃກ້ແຖບຮ້ອນທີ່ໄດ້ອະນຸລັກສົມບູນດີທີ່ມີຢູ່ໃນເຂດປ່າເຊີນຫຼອງເຈ້ຍນີ້ເຊິ່ງເປັນໜຶ່ງບໍ່ມີສອງໃນເຂດເສັ້ນຂະໜານກາງຂອງໂລກໃນປະຈຸບັນ,ເປັນຊັບພະຍາກອນແຫຼ່ງທ່ອງທ່ຽວລະດັບສາກົນທີ່ອຸດົມສົມບູນໄປດ້ວຍລັກສະນະພິເສດຈຳເພາະ ແລະ ແບບຜູກຂາດສ່ວນປະກອບເຂດລະບົບພືກສາຊາດ ແລະ ສັດແມ່ນຫຼາຍແບບຫຼາຍສີ ແລະ ອຸດົມສົມບູນເກົ່າແກ່,ມີສະເພາະທັງມີຄ່າຫາຍາກ.ຕົ້ນສົນທີ່ເຂັ້ມແຂງມີພະລັງຢ່າງຍອດຢ້ຽມ,ຕົ້ນSelaginella tamanriscina (P.Beauv) Spring ທີ່ເກົ່າແກ່ບູຮານແລະຫອມກຸ່ນ, ຕົ້ນ Reevesia pubescens ທີ່ສຸພາບເປັນສະຫງ່າເລີດລ້ຳ, ຕົ້ນ Davidia involucratea Baill ທີ່ມີກິລິຍາທ່າທີຫຼໍ່ລາກດິນ,ຕົ້ນ David Deteleeria ທີ່ເຕັມໄປໃນມຸມໜຶ່ງແຕກງ່າງອກງາມເປັນປ່າດົງພົງໄພອັນຕຶບໜາ,ໂຕລີງຂົນທອງ,ໂຕໝີຂາວ,ໂຕລະມັ່ງ,ໂຕແລນຕົວໃຫຍ່,ກໍ່ຄືນົກກະຊຸນ,ນົກກະສາ,ນົກແຮ້ງ ແລະ ສັດປ່າທີ່ແລ່ນນົກທີ່ບິນຕ່າງໆນາໆ,ໄດ້ເຂົ້າອອກພຸ່ມຫຍ້າເຈີດເອີນໃນປ່າ,ຢູ່ນີ້ຍັງມີນິທານພື້ນເມືອງທີ່ງົດງາມ ແລະ ເກົ່າແກ່,ແລະ ມີຮີດຄອງປະເພນີ,ຂະນົບທຳນຽມທີ່ເກົ່າແກ່ແລະເລິກລັບ,ຄົນກັບທຳມະຊາດໄດ້ພ້ອມກັນປະກອບເປັນວົງໂຄຈອນວັດທະນະທຳນິເວດວິທະຍາດັ້ງເດີມເຂດພູສູງພາກກາງຂອງປະເທດຈີນ.

ປ່າດົງພົງໄພທີ່ກວ້າງໃຫຍ່ໄພສານຈົນສຸດລູກຫູລູກຕາທີ່ເຂດປ່າເຊີນຫຼອງເຈ້ຍ,ລະບົບນິເວດວິທະຍາດັ້ງເດີມທີ່ສົມບູນດີຄວາມມາກມາຍຫຼາຍຫຼາກຂອງສິ່ງທີ່ມີຊີວິດ,ເງື່ອນໄຂດິນຟ້າອາກາດທີ່ຖືກອົກຖືກໃຈຄົນ,ວັດທະນະທຳເຂດພູສູງພື້ນແຜ່ນດິນຫຼັງຝັ່ງທະເລທີ່ດັ້ງເດີມແລະມີເອກະລັກຈຳເພາະໄດ້ພ້ອມກັນປະກອບເປັນ ພາບພົດພູຜາແມ່ນ້ຳທີ່ສວຍສົດງົດງາມ,ຈຶ່ງໄດ້ເຮັດໃຫ້ເຂດປ່າເຊີນຫຼອງເຈ້ຍໄດ້ຮັບນາມມະຍົດເປັນຈຳນວນຫຼວງຫຼາຍຄື : "ມຸກດາສີຂຽວ" "ສວນພຶກສັດທຳມະຊາດ""ສະຖານທີ່ລີ້ໄພຂອງສິ່ງທີ່ມີຊີວິດ" "ສູນແຊນ" ຫໍພິພິດຕະພັນທຳມະຊາດ" "ອານາເຂດເຢັນສະບາຍ" ແລະ ອື່ນໆປະຈຸບັນເຂດປ່າເຊີນຫຼອງເຈ້ຍກຳລັງພາໃຫ້ຊາວໂລກຈ້ອງມອງດ້ວຍສິ່ງແວດລ້ອມນິເວດວິທະຍາທີ່ດັ້ງເດີມ ແລະ ສົມບູນດີ.





# ບຸນດວນເຈັກຊົນຊາດສູຍ

## 水族端节

图 /CFP

水族主要聚居在贵州省三都水族自治县。端节是水族最盛大的传统节日，相当于汉族的春节。节日里的水族同胞载歌载舞，相聚狂欢，从他们欢笑的脸上，无不反映着水族积极、乐观的精神面貌。

ຊົນຊາດສູຍສ່ວນຫຼາຍຢູ່ຮ່ວມກັນຕັ້ງພູມລຳເນົາຢູ່ເມືອງປົກຄອງຕົນເອງຊົນເຜົ່າສູຍສານຕູ່ມິນທົນກຸ້ຍໂຈວ. ບຸນດວນເຈັກເປັນບຸນປະເພນີທີ່ມະໂຫລານກວ່າໝູ່ຂອງຊົນເຜົ່າສູຍ. ສົມທຽບກັບບຸນກຸດຈີນຂອງຊົນເຜົ່າຫານ, ໃນມື້ບຸນພີ່ນ້ອງຊົນເຜົ່າສູຍຮ້ອງລຳທຳເພງພົບປະຊຸມແຊວສະແດງພິທີເຊັ່ນໄຫວ້ບັນພະບຸລຸດທີ່ອົງອາດແລະໂອ່ອ່າໜ້າເຄົາລົບກໍ່ຄືການສະແດງພື້ນເມືອງຄືເຊີດສິງໂຕໄຟ, ຍາດໂຕເປັດ, ແຂ່ງມ້າ ແລະ ອື່ນໆໃຫ້ແຂກທີ່ມາ. ໃບໜ້າທີ່ຍິ້ມຢ່າງເປັນສຸກຂອງພວກເພິ່ນລ້ວນແຕ່ໄດ້ສ່ອງແສງເຖິງສະພາບຈິດໃຈທີ່ມຸ່ງຫາຄວາມກ້າວໜ້າ ແລະ ພາກພູມໃຈເຊື່ອໝັ້ນຂອງຊົນເຜົ່າສູຍ.



ພີ່ນ້ອງເຜົ່າສູຍເປົ່າແກ
水族同胞吹起唢呐

ອີງຕາມການກຳນົດໄວ້ໃນໜັງສືສູຍແລະສູຍປະຕິທິນເຊິ່ງເປັນໜັງສືຄຳພີບູຮານຂອງຊົນເຜົ່າສູຍ,ບຸນດວນເຈັກຈະໄດ້ຈັດຂຶ້ນໃນທ້າຍປີປະຕິທິນຂອງຊົນເຜົ່າສູຍ.ໄລຍະວັນບຸນກົງກັບເດືອນສິງຫາເຖິງເດືອນຕຸລາຂອງປະຕິທິນຈັນທະຄະຕິ,ນັບວັນທຳອິດເຖິງວັນສຸດທ້າຍນານເຖິງ 49 ວັນ,ເຊິ່ງເປັນວັນບຸນທີ່ເປັນເວລານານທີ່ສຸດໃນໂລກ.ບຸນ "ບຸນໜາກອີ" ກໍ່ວ່າໃນພາສາຊົນເຜົ່າສູຍຮຽກວ່າ "ບຸນອີ" ຫຼື "ເຈັກດວນ".

ລາຍການສຳຄັນຂອງບຸນດວນເຈັກແມ່ນພິທີບູຊານົບໄຫວ້ ແລະ ການແຂ່ງມ້າ.ໃນໄລຍະວັນບຸນສຽງກອງທອງດັງກ້ອງບໍ່ຢຸດບໍ່ເຊົາ,ສຽງຮ້ອງລຳທຳເພງແລະສຽງແຄນດັງວ່ອນໆດັງກ້ອງຢູ່ໃນເຮືອນທີ່ປິດບັງອຳພາງໃນສີຂຽວຂອງກໍໄຜ່.ໝູ່ບ້ານຊົນເຜົ່າສູຍບົນເຂົາໄດ້ນອນຈົມຢູ່ໃນບັນຍາກາດຂອງວັນບຸນ.

ພິທີເຊັ່ນໄຫວ້ບັນພະບຸລຸດຈະໄດ້ຈັດຂຶ້ນໃນຄືນວັນສິ່ງທ້າຍປີເກົ່າແລະຕອນເຊົ້າວັນທີ15 ,ຄາບເຂົ້າສອງຄາບແຕ່ຄືນວັນສົ່ງທ້າຍປີຫາວັນປີໃໝ່ຄະລຳຂອງຄາວກິນເຈ,ແຕ່ບໍ່ຄະລຳປາ,ປາທີ່ຊົນເຜົ່າສູຍເຊັ່ນໄຫວ້ບັນພະບຸລຸດຮຽກວ່າ "ປາຫໍ່ຜັກແປ້ນ" ແມ່ນເອົາຜັກແປ້ນນອນໝາກກໍ່ຍັດໃສ່ທ້ອງປາໃຫ້ແໜ້ນແລ້ວຕົ້ມຫຼືໜຶ້ງຈົນສຸກ,ພາຍຫຼັງເຊັ່ນໄຫວ້ບັນພະບຸລຸດແລ້ວກໍ່ສາມາດເອົາມາກິນ.

ການແຂ່ງມ້າເປັນຂັ້ນດຸເດືອດທີ່ສຸດຂອງບຸນດວນເຈັກລ້ວນແຕ່ແມ່ນຈັດຂຶ້ນເວລາກິນເຂົ້າທ່ຽງແລ້ວຂອງວັນສັງຂານ(ສົມທຽບກັບວັນກຸດຈີນຂອງຊົນເຜົ່າຫານ),ການແຂ່ງມ້າມີສະຖານທີ່ສະເພາະຂອງມັນ,ຄົນທົ່ວໄປພາຍຫຼັງໄດ້ຮ່ວມພາເຂົ້າປີໃໝ່ແລ້ວກໍ່ເລີຍມາເຖິງບ່ອນນີ້ເປັນໝູ່ໆ.ຢູ່ຕາມເປີ້ນພູຂອງສະຖານທີ່ຫຼີ້ນບຸນກໍ່ຄົນມືດຟ້າມົວດິນທັນທີ,ພວກໜຸ່ມໆສາວໆມາຫຼີ້ນບຸນທີ່ນີ້ບໍ່ພຽງແຕ່ເພື່ອເບິ່ງການແຂ່ງມ້າທໍ່ນັ້ນ,ພວກລາວຍັງຖືເອົາງານມະໂຫລານນີ້ເປັນໂອກາດທີ່ດີທີ່ສຸດຂອງການເສາະຫາຄູ່ຮັກ.

ກ່ອນການແຂ່ງມ້າກໍ່ຕ້ອງຈັດພິທີບູຊານົບໄຫວ້ແບບງ່າຍໆ,ເຈົ້າກົກເຈົ້າເຫຼົ່າໄດ້ຕັ້ງແທ່ນບູຊາແຫ່ງໜຶ່ງທີ່ເປີ້ນພູຫຼີ້ນບຸນດວນເຈັກໄດ້ມີເຄື່ອງບູຊາທຸກຊະນິດທຸກຢ່າງບູຊາໄວ້ເພື່ອບູຊານົບໄຫວ້ບັນພະບຸລຸດທີ່ບຸກເບີກເປີ້ນພູຫຼີ້ນບຸນດວນເຈັກຢ່າງສະຫງ່າຜ່າເຜີຍ.ການບູຊານົບໄຫວ້ແມ່ນໃຫ້ຜູ້ເຖົ້າທີ່ມີຄຸນທຳ ແລະ ບາລະມີນຳໜ້າ,ເຈົ້າກົກເຈົ້າເຫຼົ່າຢືນຢູ່ແປະແທ່ນບູຊາ,ລັກສະນະທ່າທາງໂອ່ອ່າໜ້າເຄົາລົບຍົກເອົາຖ້ວຍເຫຼົ້າທີ່ມີເຫຼົ້າເຕັມປ່ຽມປາກຈົ່ມມົນຈົ່ມຄາຖາມອຸ່ມໆ.ສ່ວນຫຼາຍເປັນຄຳເວົ້າທີ່ອາໄລຫ່ວງຫາເຖິງບັນພະບຸລຸດ ແລະ ອວຍພອນໃຫ້ເປັນສິລິມົງຄົນສົມຄວາມປາດຖະໜາອະທິຖານໃຫ້ດົນບັນດານໃຫ້ ການແຂ່ງມ້າປອດໄພໂດຍບໍ່ມີເຫດການຫຍັງເກີດຂຶ້ນ ແລະ ຟ້າຝົນອຳນວຍຜົນເກັບກ່ຽວອຸດົມສົມບູນໃນປີຕໍ່ມາ.

ເມື່ອສິ້ນສຸດພິທີບູຊານົບໄຫວ້ແລ້ວ,ເຈົ້າກົກເຈົ້າເຫຼົ່າກໍ່ສົກຂຶ້ນຫຼັງມ້າແລ່ນຕາມລານຮອບໜຶ່ງຈຶ່ງໄດ້ປະກາດວ່າການແຂ່ງມ້າເລີ່ມຕົ້ນຢ່າງເປັນທາງການ.ເມື່ອຜູ້ກຳກັບໄດ້ ອອກສັນຍານ,ບັນດາຜູ້ເຂົ້າຮ່ວມການແຂ່ງມ້າກໍ່ພ້ອມກັນຍົກແສ້ຄວບມ້າແລ່ນ.

ພວກເພິ່ນບຸບຽດກັນຮ່ອມພູເພື່ອບຸບຽດກັນໃນຄວາມຢືນຢັນຕໍ່ສູ້ອອກມາບຸກໄປສູ່ຈອມພູ,ຜູ້ໃດໄປເຖິງ ຈອມພູກ່ອນ,ຜູ້ນັ້ນເປັນຜູ້ຄອງຊະນະເລີດ.

ບຸນດວນເຈັກອາດເວົ້າໄດ້ວ່າເປັນບຸນປີໃໝ່ທີ່ມີເອກະລັກຊົນເຜົ່າທີ່ເປັນເວລາດົນນານ ແລະ ມີລາຍການເຄື່ອນໄຫວຫຼາຍທີ່ສຸດ.ການປີນຂຶ້ນສູງແລະແຂ່ງມ້າເປັນປະກົດການທີ່ມີຈຳເພາະໃນບຸນປີໃໝ່ຂອງບັນດາຊົນເຜົ່າພາກໃຕ້ຈີນ.ພ້ອມກັນນັ້ນບຸນດວນເຈັກກໍ່ເປັນເວທີວັດທະນະທຳທີ່ສຳຄັນໃນການເລີ່ມຕົ້ນສືບທອດ ແລະ ຂະຫຍາຍບັນດາສິນລະປະພື້ນເມືອງຄື ການຕັ້ນລຳກອງທອງ,ເຕັ້ນລຳແຄນ ແລະ ການຂັບລຳ ແລະ ອື່ນໆ.



ແມ່ເຖົ້າເຜົ່າສູຍພວມມັດຜ້າພັນຫົວໃຫ້ພໍ່ເຖົ້າ
水族老太太 在给老伴扎头帕

# ກົດລັບສຸຂະພາບທີ່ຕາບອກໃຫ້ທ່ານ

## 眼睛告诉你的健康密码

眼睛是心灵的窗口！日常生活中，我们的喜怒哀乐都会表现在双眼里。同样，身体情况的好坏，一样会在你的眼睛里表露的一览无余。一起来看看，眼睛告诉我们的健康密码吧！




### 1.ຂອບຕາດຳ

ເມື່ອຕອນເຊົ້າຕື່ນນອນແລ້ວ,ໄດ້ປະກົດເຫັນວົງຕາມືດມົວ ແລະ ປ່ຽນດຳ?ຕ້ອງລະວັງ!ອັນນີ້ອາດຈະຍ້ອນວ່າມີຕະກອນຫຼາຍທີ່ໃຊ້ການບໍ່ໄດ້ຢູ່ໃນເລືອດ.ໜັງຕາລຸ່ມອ່າວບາງ,ສະແດງສີເລືອດໄດ້ງ່າຍທີ່ສຸດ.ຈະຕ້ອງຄິດເບິ່ງດູ,ຫວ່າງນໍ່ໆນີ້,ມີຄວາມກົດດັນຫຼາຍຫຼືອິດເມື່ອຍເກີນສ່ວນໂພດຫຼືບໍ່.ພາລະບົດບາດຂອງໝາກໄຂ່ຫຼັງທີ່ຄອບງຳລະບົບຖ່າຍເຫນົ້າຍ່ຽວ ແລະ ອະໄວຍະວະສືບພັນຂາດດຸນພາໃຫ້ຂອບຕາມືດມົວ.

ຜູ້ຊ່ຽວຊານແພດເວົ້າວ່າ,ອົດນອນໜ້ອຍ,ກິນອາຫານປະເພດເຂົ້າເປູຫຼາຍແມ່ນວິທີດີທີ່ສຸດລົບອອກຂອບຕາດຳ .

### 2.ໄຫມເລືອດແດງ

"ໄໝເລືອດ "ທີ່ເຕັມໄປດ້ວຍຕາແດງ,ກໍ່ແມ່ນຄວາມບອກເຕືອນທີ່ເລືອດໝູນວຽນບໍ່ສະດວກ.ຢ່າຟ້າວຢອດນ້ຳຢາຕາ,ເຮັດໃຫ້ຫົວ,ຄໍ,ບ່າເຄື່ອນໄຫວຈັກໜ້ອຍ,ເຮັດໃຫ້ເລືອດແຂນໄຫຼໂລ່ງຫາກັນ,ແລ້ວກໍ່ເຂົ້ານອນໃຫ້ດີ,ໃຫ້ຕາພັກຜ່ອນພຽງພໍ,ກໍ່ສາມາດລົດຜ່ອນເລືອດເຕັມຕາ.ຖ້າວ່າວຽກຊຸ້ນຫຼາຍ, ບໍ່ມີເວລາພັກຜ່ອນ,ທານ້ຳວິຕາມິນ ງ ໜ້ອຍໜຶ່ງຢູ່ຫຼັງຄໍຫຼືບ່າ.ຊ່ວຍເລືອດໝູນວຽນ,ກໍ່ສາມາດລົດຜ່ອນປະກົດການຕາແດງຢ່າງວ່ອງໄວ.

### 3.ເມັດໄຂມັນ

ນອກຈາກຂໍສະເໜີໃຫ້ທ່ານນຳໃຊ້ນ້ຳຢາທີ່ບໍ່ມີນ້ຳມັນ,ຮັບມືກັບເມັດໄຂມັນທີ່ຢູ່ໃນຕາ.ຜູ້ຊ່ຽວຊານແພດຍັງບອກໃຫ້ທ່ານວ່າ,ເມັດໄຂມັນແມ່ນຄວາມກ່າວເຕືອນທີ່ cholesterol ໃນຮ່າງກາຍສູງໂພດ .ຢ່າກິນອາຫານຈືນ ແລະ ເຄື່ອງໃນສັດ,ກິນໝາກໄມ້ ແລະ ຜັກສົດຫຼາຍໄດ້,ເມັດໄຂມັນທີ່ເຮັດໃຫ້ຫຍຸ້ງສະໝອງຈະຫາຍໄປຢ່າງວ່ອງໄວ.

### 4.ໜັງຕາບວມຂຶ້ນ

ບໍ່ດື່ມນ້ຳຫຼາຍກ່ອນເຂົ້ານອນ,ແຕ່ຕອນເຊົ້າຕື່ນນອນແລ້ວໜັງຕາກໍ່ບວມຂຶ້ນຫຼາຍ?ອາດຈະແມ່ນນ້ຳຮ່າງກາຍຂອງທ່ານຂາດດຸນແລ້ວ,ສາຍເຫດພາໃຫ້ການຖ່າຍເທອັນເກົ່າຮັບເອົາອັນໃໝ່ຂອງນ້ຳມີຫຼາຍ,ຖ້າຮູ້ສຶກຂາບໍ່ມີແຮງ,ປາກນ້ຳລີ້ນແຫ້ງ,ອາດຈະແມ່ນໝາກໄຂ່ຫຼັງຂອງທ່ານມີບັນຫາແລ້ວ.ໝາກໄຂ່ຫຼັງທີ່ປົກກະຕິສາມາດຖ່າຍເທນ້ຳທີ່ເຫຼືອອອກມາຢ່າງສະດວກ.ເວລານ້ຳບໍ່ພໍ,ມັນຈະສາມາດຜ່ອນຄາຍຄາວມໄວແຫ່ງການຖ່າຍເທອັນເກົ່າຮັບເອົາອັນໃໝ່.ເຮັດໃຫ້ນ້ຳສະສົມຢູ່ໃນຮ່າງກາຍ.ສະນັ້ນຈຶ່ງບວມຂຶ້ນໜ້ອຍໜຶ່ງ.ຢ່າໃຈຮ້ອນ,ດື່ມນ້ຳຈັກຈອກໃຫຍ່,ຈະສົ່ງຄືນໃຫ້ຕາງາມຄູ່ໜຶ່ງໃຫ້ທ່ານ.

### 5.ຕາຕໍ້

ຢ່າເບິ່ງເບົາຕາຕໍ້, ຜູ້ຊ່ຽວຊານແພດຍີ່ປຸ່ນໄດ້ປະກົດເຫັນ,ມີຕາຕໍ້ແລ້ວກໍ່ສະແດງວ່າຄວາມສາມາດໃນການຕ້ານເຊື້ອໂລກຂອງທ່ານພວມຊຸດໂຊມລົງ.ແມ່ພະຍາດເຂົ້າສູ່ໃນຕາໄດ້ງ່າຍແຕ່ຮາກຂົນຕາ.ພາໃຫ້ເກີດການອັກເສບ.

ຖ້າເປັນຕາຕໍ້ຫຼົບໄປຫຼົບມາ,ຈະຕ້ອງໄປໂຮງໝໍກວດສຸຂະພາບຮອບດ້ານ.ດື່ມແກ້ງບຳລູງເລືອຍໆ,ຍົກສູງຄວາມສາມາດໃນການຕ້ານເຊື້ອໂລກເອງ,ຈຶ່ງຈະສາມາດໜີໄກຈາກຕາຕໍ້ສິ້ນເຊີງ.

### 6.ແກ່ນຕາຂາວປະກົດອອກສີເຫຼືອງ

ອາດຈະແມ່ນຕັບ ແລະ ປີມີບັນຫາແລ້ວ.ນ້ຳປີແມ່ນນ້ຳແຫຼວທີ່ສີຂຽວເຫຼືອງ,ເວລາພາລະບົດບາດຂອງປີ ແລະ ຕັບຂາດດຸນ,ນ້ຳປີຈະໄຫຼເຂົ້າສູ່ໃນເລືອດ,ພາໃຫ້ແກ່ນຕາຂາວປະກົດອອກສີເຫຼືອ.ໄຄແຕ່ວ່ານ້ຳປີສາມາດແຍກລະລາຍໄຂມັນເຫຼືອໃນຮ່າງກາຍ,ພາຍໃນເວລາສັ້ນໆທ່ານບໍ່ຕ້ອງເປັນຫ່ວງນຳນ້ຳໜັກຮ່າງກາຍຂອງທ່ານ.

# ບົວລະບັດຮິມສົບແນວໃດໃນລະດູໜາວ

dōng jì zěn yàng hù lǐ zuǐ chún
## 冬季怎样护理嘴唇

yī qíng jǐng duì huà
### 一、情景对话

文/陆 蕊

ສະຖານະພາບຂອງການສົນທະນາ:

měi dào dōng tiān wǒ de zuǐ chún dū
A：每到冬天，我的嘴唇都
huì fā gàn shèn zhì jūn liè hěn bú
会发干甚至皲裂，很不
shū fu
舒服。
ເມື່ອຮອດລະດູໜາວ,ຮິມສົບຂອງຂ້ອຍກໍ່ເປັນແຫ້ງຈົນກະທັ້ງແຕກແຍກ,ບໍ່ສະບາຍຫຼາຍ.

píng shí nǐ shì bu shì jīng cháng yòng
B：平时你是不是经常用
shé tóu tiǎn zuǐ chún
舌头舔嘴唇。
ທຳມະດາເຈົ້າໃຊ້ລີ້ນເລຍຮິມສົບເລື້ອຍໆຫຼືບໍ່?

shì de běn xiǎng tuò yè néng zī rùn
A：是的，本想唾液能滋润
zuǐ chún dàn yuè tiǎn zuǐ chún yuè gàn
嘴唇，但越舔嘴唇越干。
ແມ່ນແລ້ວ,ເດີມທີຄິດວ່ານ້ຳລາຍໄດ້ໃຫ້ຮິມສົບເປັນຊຸ່ມປຽກ,ແຕ່ວ່າຍິ່ງເລຍຮິມສົບຍິ່ງແຫ້ງ.

yòng shé tiǎn zuǐ chún shí tuò yè zhōng
B：用舌舔嘴唇时，唾液中
de diàn fěn méi děng wù zhì pèng dào gān
的淀粉酶等物质碰到干
zào de kōng qì huì shǐ chún bù shuǐ fèn
燥的空气会使唇部水分
hěn kuài zhēng fā zuǐ chún jiù gān zào
很快蒸发，嘴唇就干燥。
ເມື່ອໃຊ້ລີ້ນເລຍຮິມສົບ,ເຊື້ອໝັກທາດແປ້ງ ແລະ ອື່ນໆທີ່ໃນນ້ຳລາຍໄດ້ພົບອາກາດທີ່ແຫ້ງກໍ່ຈະເຮັດໃຫ້ນ້ຳຂອງຮິມສົບສະ


CFP 图

ເຫີຍຢ່າງວ່ອງໄວ,ຮິມສົບກໍ່ເປັນແຫ້ງ.

nà gāi zěn me bàn
A：那该怎么办？
ຊັ້ນນັ້ນຈະເຮັດແນວໃດ?

zài gān zào de zuǐ chún shàng tú shàng
B：在干燥的嘴唇上涂上
zī rùn de chún gāo zuì zhòng yào de
滋润的唇膏，最重要的
shì bǔ chōng shēn tǐ suǒ xū de wéi
是补充身体所需的维
shēng sù
生素B2。
ທາລິບສະຕິກທີ່ຊຸ່ມປຽກຢູ່ເຖິງຮິມສົບທີ່ແຫ້ງ,ເພີ່ມຕື່ມວິຕາມິນ B2 ທີ່ຮ່າງກາຍຕ້ອງການເປັນສຳຄັນທີ່ສຸດ

chún gāo zhǒng lèi tài duō le yīng gāi
A：唇膏种类太多了，应该
mǎi shén me yàng de
买什么样的？

ປະເພດຂອງລິບສະຕິກມີຫຼາຍແທ້,ຄວນຊື້ເປັນແນວໃດແດ່?

bú yòng mǎi tài guì de chún gāo lǐ zhǐ
B：不 用 买 太 贵 的，唇 膏 里 只
yào hán yǒu fēng fù de wéi shēng sù
要 含 有 丰 富 的 维 生 素 E
jiù kě yǐ
就 可 以。
ບໍ່ຕ້ອງຊື້ທີ່ແພງຫຼາຍ,ມີວິຕາມິນ E ທີ່ອຸດົມສົມບູນຢູ່ໃນລິບສະຕິກກໍ່ໄດ້ແລ້ວ.

wǒ míng bái le
A：我 明 白 了。
ຂ້ອຍເຂົ້າໃຈແລ້ວ.

hái jì zhù yào duō hē shuǐ bǔ chōng
B：还 记 住，要 多 喝 水，补 充
shēn tǐ suǒ xū de shuǐ fèn
身 体 所 需 的 水 分。
ຍັງຕ້ອງຈື່,ຕ້ອງດື່ມນ້ຳຫຼາຍ,ເພີ່ມດື່ມນ້ຳທີ່ຮ່າງກາຍຕ້ອງການ.

èn jì zhù le
A：嗯，记 住 了！
ເຈົ້າ,ຈື່ໄດ້ແລ້ວ.

jì zhù bié zài yòng shé tiǎn
B：记 住，别 再 用 舌 舔！
ຕ້ອງຈື່,ຢ່າໃຊ້ລີ້ນເລຍອີກແລ້ວ.

## èr jiāo nǐ dú gǔ shī
## 二：教 你 读 古 诗

编/陆 蕊 绘图/刘金昆

ສອນໃຫ້ທ່ານອ່ານກາບກອນບູຮານ

### xiǔ xīn shì xú gōng diàn
### 宿 新 市 徐 公 店

lí luò shū shū yī jìng shēn
篱 落 疏 疏 一 径 深，
shù tóu huā luò wèi chéng yīn
树 头 花 落 未 成 阴。
ér tóng jí zǒu zhuī huáng dié
儿 童 急 走 追 黄 蝶，
fēi rù cài huā wú chù xún
飞 入 菜 花 无 处 寻。

dà yì
大 意：。

zài xī shū de lí ba qiáng biān yǒu yī
在 稀 疏 的 篱 笆 墙 边，有 一
tiáo cháng cháng de xiǎo lù lù páng shù
条 长 长 的 小 路。路 旁 树
zhī tóu de huā yǐ jīng diāo luò le ér xīn
枝 头 的 花 已 经 凋 落 了，而 新
yè hái wèi zhǎng qí hái méi yǒu xíng chéng
叶 还 未 长 齐，还 没 有 形 成
shù yīn yì qún xiǎo hái bēn pǎo zhe zhuī
树 阴。一 群 小 孩 奔 跑 着 追
zhú huáng sè de hú dié ér hú dié fēi rù
逐 黄 色 的 蝴 蝶，而 蝴 蝶 飞 入
jīn huáng de cài huā cóng zhōng zài yě
金 黄 的 菜 花 丛 中，再 也
zhǎo bù zháo le
找 不 着 了。



ຄວາມໝາຍ:

ຢູ່ແຄມຮົ້ວທີ່ມີໜ້ອຍ,ມີທາງນ້ອຍຍາວໆສາຍໜຶ່ງ.ຢູ່ທາງຂ້າງດອກໄມ້ທີ່ຢູ່ເຖິງຈອມງ່າໄມ້ກໍ່ຮ່ວງໂຮຍແລ້ວ,ແຕ່ໃບໃໝ່ຍັງບໍ່ທັນເກີດຮຽບຮ້ອຍ,ຍັງບໍ່ທັນເປັນຮູບຮົ່ມໄມ້,ມີເດັກນ້ອຍກຸ່ມໜຶ່ງທັງແລ່ນທັງໄລ່ຕາມແມງກະເບື້ອສີເຫຼືອງ,ແຕ່ແມງກະເບື້ອບິນໄປໃນດອກໄມ້ຜັກສີທອງ,ບໍ່ໄດ້ຊອກຫາອີກແລ້ວ.

绘图 / 刘金昆

# ປາດສະຈາກໂລກໄພເຈັບໄຂ້ຢ່າງມີຄວາມປອດໄພ

## 安然无恙

ກ່ອນຄ.ສປີ 266 ,ເຈົ້າຈ້າວຣຸ້ຍອຸນເຈົ້າຊີວິດລັດຈ້າວໄດ້ເຖິງແກ່ນໍລະນາກໍາໄປ,ເຈົ້າຊາຍຕັນຜູ້ທີ່ເປັນລູກຊາຍເພິ່ນໄດ້ຮັບບັນລັງເປັນເຈົ້າຈ້າວຊຽວເສິນ.ຍ້ອນວ່າເຈົ້າຊຽວເສິນອາຍຸຍັງນ້ອຍ,ວຽກບ້ານການເມືອງຂອງລັດແມ່ນທ່ານນາງຈ້າວອຸ່ຍແມ່ຂອງເຂົາຮັບຜິດຊອບຈັດການ.ລາດຊະຍີຈ້າວອຸ່ຍເປັນແມ່ຍິງຜູ້ໜຶ່ງໄວກາງທີ່ເປີດເຜີຍສະຫລາດ ແລະ ມີຄວາມຮູ້ກວ້າງຂວາງ.ໃນເວລາທີ່ເພິ່ນຫາກໍ່ເປັນປະທານຈັດການບ້ານເມືອງ,ລັດສິນໄດ້ເພີ່ມທະວີການບຸກຕີຕໍ່ລັດຈ້າວແລ້ວ.ລັດຈ້າວມີຄວາມອັນຕະລາຍ,ກໍ່ຂໍຄວາມຊ່ວຍເຫລືອນໍາລັດຊີ,ລັດຊີໃຫ້ລາດຊະຍີຈ້າວອຸ່ຍສົ່ງທ້າວຊາງອານຈຸນທີ່ເປັນລູກຫລ້າຂອງເພິ່ນໄປເປັນຕົວປະກັນຢູ່ລັດຊີ,ແລ້ວຈິ່ງອອກທັບໄດ້.ລາດຊະຍີຈ້າວອຸ່ຍບໍ່ຢາກໃຫ້ລູກຫລ້າຫ່າງຈາກຕົນເອງໄປ,ແຕ່ວ່າເພິ່ນໄດ້ຟັງຄໍາເຫັນຂອງທ່ານຂ້າຫລວງຈູຫລອງ,ຍັງສົ່ງທ້າວຊາງອານຈຸນໄປລັດຊີ.ລັດຊີອອກທັບຊ່ວຍລັດຈ້າວຕີກອງທັບສິນໃຫ້ຖອຍໄປ.

ມີເທື່ອໜຶ່ງ,ເຈົ້າຊີວິດລັດຊີໄດ້ແຕ່ງທູດນໍາເອົາຈົດໝາຍໄປຖາມຂ່າວຄາວລາດຊະຍີຈ້າວອຸ່ຍທີ່ລັດຈ້າວ.ລາດຊະຍີຈ້າວອຸ່ຍຍັງບໍ່ທັນເປີດຊອງກໍ່ຖາມທູດວ່າ: "ຜົນເກັບກ່ຽວຂອງລັດຊີບໍ່ຂີ້ຮ້າຍຕີ້?ປວງຊົນຍັງປອດໄພດີເນາະ?ເຈົ້າຊີວິດມີສຸກຂະພາບແຂງແຮງບໍ່?"

ທູດລັດຊີຟັງແລ້ວແມ່ນບໍ່ດີໃຈຫລາຍ,ເວົ້າວ່າ: "ຂ້ານ້ອຍໄດ້ຮັບການແຕ່ງຕັ້ງໃຫ້ມາຖາມຄວາມສະບາຍດີນໍາທ່ານ,ດຽວນີ້ເຈົ້າບໍ່ຖາມເຈົ້າຊີວິດລັດຊີກ່ອນ,ພັດຖາມຜົນເກັບກ່ຽວ ແລະ ປວງຊົນ,ສາມາດວາງອັນທີ່ຕໍ່າຕ້ອຍຢູ່ທາງໜ້າ,ປະອັນທີ່ນັບຖືຢູ່ທາງຫລັງຕວ່າ?"

ລາດຊະຍີຈ້າວອຸ່ຍຍິ້ມນ້ອຍໜຶ່ງ ແລະ ເວົ້າວ່າ: ບໍ່ແມ່ນດອກ. ຖ້າຫາກວ່າບໍ່ມີຜົນເກັບກ່ຽວ,ຈະມີປວງຊົນໄດ້ວາ? ຖ້າວ່າບໍ່ມີປວງຊົນ,ຈະມີເຈົ້າຊີວິດໄດ້ວາ?ເມື່ອຖາມສະບາຍດີ,ສາມາດປະລະອັນເປັນຕົ້ນເປັນຕໍ ແລະ ຖາມແຕ່ກິ່ງ ແລະ ງ່າເທົ່ານັ້ນບໍ່?"

ທູດລັດຊີໄດ້ຍິນແລ້ວ,ກໍ່ເວົ້າບໍ່ອອກທັນທີ. ນິທານ "ປາດສະຈາກໂລກໄພເຈັບໄຂ້ເລື່ອງນີ້,ກໍ່ກາຍເປັນສຸພາສິດໃນພາຍຫລັງ,ຄື "ປາດສະຈາກໂລກໄພເຈັບໄຂ້ຢ່າງມີຄວາມປອດໄພ".

ອະທິບາຍ: ປອດໄພບໍ່ມີເລື່ອງຫຍັງເກີດຂຶ້ນ,ບໍ່ໄດ້ຖືກທໍາຮ້າຍຫລືເກີດອຸບັດຕິເຫດ.ຄວາມເຈັບໄຂ້ໄດ້ປ່ວຍ,ໝາຍເຖິງໄພພິບັດ.



# ເປີດສອນພາສາຈີນ!!
# ເທີມໃຫມ່

ຂ່າວດີສຳລັບນັກຮຽນ-ນັກສຶກສາ ແລະ ບຸກຄົນ ທົ່ວໄປ ທີ່ຕ້ອງການຮຽນພາສາຈີນ ແລະ ຕ້ອງການໄປຮຽນທີ່ ປະເທດຈີນ ດ້ວຍທຶນຕົວເອງ

**ເປີດສະຫມັກຮຽນ**

ແຕ່ວັນທີ 1 ກໍລະກົດ ປີ 2009

ປະຈຸບັນ ວິທະຍາໄລເຕັກນິກປາກປ່າສັກໄດ້ຮ່ວມມືກັບມະຫາວິທະຍາໄລຊົນເຜົ່າຢູນນານໄດ້ສ້າງຕັ້ງສູນສຶກສາສາກົນຢູ່ ສ ປປ ລາວ ທີ່ວິທະຍາໄລ ເຕັກນິກປາກປ່າສັກເພື່ອສອນພາສາຈີນສຳລັບຜູ້ທີ່ຕ້ອງການຮຽນ ແລະ ຜູ້ທີ່ຈະໄປຕໍ່ທີ່ມະຫາວິທະຍາໄລຊົນເຜົ່າຢູນນານຕາມເງື່ອງໄຂຕ່າງໆດັ່ງນີ້:

1. ຄ່າຮຽນ: ນັກຮຽນທົ່ວໄປແມ່ນ 690000ກີບຕໍ່ເທີມ (48ຊົ່ວໂມງຮຽນໃນ2 ເດືອນ.)
2. ປື້ມຮຽນ: ຄ່າຊຸດປື້ມຮຽນເສຍຄ່າຕ່າງຫາກ.
3. ພິເສດຜູ້ທີ່ຕ້ອງການໄປຮຽນທີ່ມະຫາວິທະຍາໄລຊົນເຜົ່າຢູນນານໃນລະດັບປະລິນຍາໂທແລະ ປະລິນຍາຕີ ໃຫ້ພົວພັນເອົາຂໍ້ມູນ ທີ່ກົມການສຶກສາຊັ້ນສູງ ພະແນກຄຸ້ມຄອງນັກສຶກສາຫ້ອງປີ 3ອາຄານຫຼັງຕໍ່າກະຊວງສຶກສາທິການ,ວິທະຍາໄລເຕັກນິກປາກປ່າສັກໃນໂມງລັດຖະການ.

## ວິທະຍາໄລເຕັກນິກປາກປ່າສັກ
## Pakpasak Technical college

ໂທ: 213030,213142,241015

ມືຖື: 5654178 4015398(ອາຈານຄົນຈີນ)

ແຟກ: 218 167

## 我要学汉语!

ຫລືຕິດຕໍ່ໂດຍກົງນຳທ່ານໂປເຫວີຍ ເຮືອນເລກທີ 411 ຖະຫນົນ 23 ສິງຫາບ້ານຫນອງບອນເມືອງໄຊເສດຖານະຄອນຫລວງວຽງຈັນ ສ ປປ ລາວ ໂທ:

(856-21)412908,020-6996770, 020-7609505 ແລະ 020-6665808

ຫລືຕິດຕໍ່ຫາ E-Mail:vw-1911@163.ແນທ

云南民族大学国际教育中心是 2008 年 9 月由云南民族大学国际教育学院及驻老挝办事处和老挝教育部巴巴萨技术大学三方共同合作，在老挝教育部巴巴萨技术大学设立的专门汉语培训机构。凡参加云南民族大学国际教育中心培训的每一位学员，将有机会搭乘云南民族大学本科及硕士学位学习的直通车。现双方正式开始培训招生。

报名地点及联系方式

老挝教育部巴巴萨技术大学校务办公室

电话 :856—21—213142 ;213030 ;传真 :856—21—218167

### ທ່ານສາມາດເລືອກຮຽນໄດ້ຕາມເວລາລຸ່ມນີ້

| | | |
|---|---|---|
| 9:00 | 14:00 | 17:00 |
| 11:00 | 16:00 | 19:00 |
| ຈັນ-ອາທິດ | ຈັນ-ອາທິດ | ຈັນ-ເສົາ |

ສົນໃຈພົວພັນປະກອບເອກກະສານ
ສອບຖາມລາຍລະອຽດຕ່າງໆໄດ້
ທີ່ວິທະຍາໄລ ເຕັກນິກປາກປ່າສັກດ່ວນ!!!







Welcome to Laos... Land of Timeless Beauty
Lao Airlines
ການບິນລາວ
Lao Airlines
The Beauty of Lao Hospitality